ເພື່ອຕ້ອນຮັບວັນສ້າງຕັ້ງ
ນະຄອນຫຼວງວຽງຈັນ ຄົບຮອບ 450 ປີ
ຄວາມເປັນມາຂອງນະຄອນຫຼວງວຽງຈັນ
ເຫຼັ້ມທີ 3



# ນະຄອນຫລວງວຽງຈັນ
# ສະໄໝ
# ລາວເປັນອານານິຄົມຂອງຝຣັ່ງ



ຮຽບຮຽງໂດຍ: ທີມມະກອນ ມະໂນທັມ

ວຽງຈັນ, 2010

ຄົ້ນຄ້ວາ ແລະ ຮຽບຮຽງ: ທິມມະກອນ ມະໂນທັມ
ອອກແບບໜ້າປົກ : ນ. ແວວມະນີ ອາໄພຍາລາດ
ຈັດຮູບເຂົ້າ: ທະວີສັກ ມະໂນທັມ
ພິມ: ນ. ປະທຸມພອນ ພິມມະສອນ
ກວດແກ້ ແລະ ຈັດໜ້າ: ນ. ນະຄອນສີ ມະໂນທັມ
ແຕ້ມຮູບ: ວົງສະຫວັນ ດຳລົງສຸກ ແລະ ນ. ນາມມາລີ ມະໂນທັມ

**ຂໍອຸທິດຜົນງານນີ້ແດ່: ເພຍຈັນເພັງ ແລະ ນາງ ຄຳຜູ ຜູ້ເປັນພໍ່ແລະແມ່**
**ພະຍາຫຼວງເມືອງກາງ ຈານຜຸຍ ແລະ ນາງ ຊາວ ສະເດັດຕັນ ຜູ້ເປັນພໍ່ເຖົ້າແລະແມ່ເຖົ້າ**
**ຊຶ່ງໄດ້ລ່ວງລັບໄປໝົດແລ້ວ**

ຈັດພິມໂດຍ: **ສະຖາບັນໂຍທາ ແລະ ຂົນສົ່ງ** ແລະ **ຄອບຄົວ ມະໂນທັມ** ເພື່ອສະໜັບສະໜູນ
ງານ ສະເຫຼີມສະຫຼອງເມືອງວຽງຈັນເປັນນະຄອນຫຼວງ ຄົບຮອບ 450 ປີ
ພິມຂະໜາດ: A4
ເລກທະບຽນພິມຈຳໜ່າຍ: 005 ພຈ 14012010
ພິມຄັ້ງທີໜຶ່ງ: 2.000 ຫົວ
ພິມທີ່: ໂຮງພິມສີສະຫວາດ
ສະຫງວນລິຂະສິດ

ພ.ພ.ສ.ວ.

ເພື່ອຕ້ອນຮັບວັນສ້າງຕັ້ງນະຄອນຫຼວງວຽງຈັນຄົບຮອບ 450ປີ

ຄວາມເປັນມາຂອງນະຄອນຫຼວງວຽງຈັນ

ເຫຼັ້ມ ທີ III

# ນະຄອນຫຼວງວຽງຈັນ

## ສະໄໝ

# ລາວເປັນອານານິຄົມຂອງຝຣັ່ງ

ຮຽບຮຽງໂດຍ: ທີມມະກອນ ມະໂນທັມ

# ຄຳນຳ

ຜ່ານມາ ໄດ້ມີຫລາຍຄົນຂຽນປະຫວັດສາດລາວ ມີທັງຄົນລາວ ແລະ ຕ່າງປະເທດ, ສ່ວນຈະຂຽນເປັນປະຫວັດຂອງຜັງເມືອງ ຂອງນະຄອນຫລວງວຽງຈັນຢ່າງລະອຽດນັ້ນ ແມ່ນບໍ່ທັນມີ.

ປຶ້ມຂຽນກ່ຽວກັບ "ຄວາມເປັນມາຂອງນະຄອນຫລວງວຽງຈັນ" ທີ່ ທ່ານ ທົມມະກອນ ມະໂນທັມ ອະດີດລັດຖະມົນຕີຊ່ວຍວ່າການກະຊວງໂຍທາທິການ ແລະ ຂົນສົ່ງ ທັງເປັນນັກຮຽນຮູ້ປະຕິວັດອາວຸໂສຜູ້ໜຶ່ງ ທີ່ໄດ້ມີຜົນງານໃນສະໄໝການປະຕິວັດຊາດປະຊາທິປະໄຕ ແລະ ໃນໄລຍະປົກປັກຮັກສາ ແລະ ສ້າງສາປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນ 30 ປີທີ່ຜ່ານມານີ້ ແມ່ນເປັນຜົນສຳເລັດອັນໜຶ່ງທີ່ດີເດັ່ນ.

ຂ້າພະເຈົ້າເຫັນວ່າ ປຶ້ມຂຽນນີ້ໄດ້ມີການຄົ້ນຄວ້າຢ່າງລະອຽດ ແລະ ວິທະຍາສາດແທ້ ຊຶ່ງໄດ້ໃຊ້ເວລາຫລາຍເດືອນໃນການວິໄຈຂໍ້ມູນຢ່າງຊັດເຈນຈາກນັກປະຫວັດສາດ ແລະ ບູຮານຄະດີ ທັງຂອງຄົນລາວ ແລະ ຕ່າງປະເທດ, ມັນໄດ້ເປັນຫລັກຖານທາງປະຫວັດສາດຂອງຜັງເມືອງ, ສະຖາປັດຕະຍະກຳ, ປະຕິມາກຳ, ຫັດຖະກຳ ແລະ ແບບດຳລົງຊີວິດຂອງຊາວວຽງຈັນໃນສະໄໝກ່ອນ.

ດ້ວຍເຫດນີ້ ຂ້າພະເຈົ້າຈຶ່ງຂໍຊົມເຊີຍເປັນພິເສດ ຜົນງານການຄົ້ນຄວ້າດັ່ງກ່າວ ຢ່າງຈິງໃຈ ແລະ ຫວັງວ່າ ທ່ານຜູ້ອ່ານທັງຫລາຍຈະໄດ້ຮູ້ ແລະ ຊາບຊຶ້ງເຖິງຄວາມເປັນມາຢ່າງລະອຽດລະອ້ຽວຂອງນະຄອນຫລວງວຽງຈັນອັນແສນຮັກຂອງພວກເຮົາ ຊຶ່ງໃນຫລາຍສັດຕະວັດທີ່ຜ່ານມາ ມີທັງຄວາມມີກຽດສັກສີ ແລະ ພາກພູມໃຈກັບຜົນງານ, ຄວາມສຳເລັດ, ຄວາມເກັ່ງກ້າພິລະອາດຫານ ຂອງບັນພະບູລຸດຂອງພວກເຮົາ, ຄວາມຈະເລີນຮຸ່ງເຮືອງ ສີວິໄລຂອງນະຄອນຫລວງວຽງຈັນ ແລະ ບາງຄັ້ງກໍ່ປະສົບກັບຄວາມໂສກເສົ້າເສຍດາຍ, ຄວາມລະທົມຂົມຂື່ນສະຫລັບກັນໄປ.

ເພື່ອສ້າງນະຄອນຫລວງວຽງຈັນໃຫ້ເປັນນະຄອນທີ່ *ສະຫງົບ, ສະອາດ, ສີຂຽວ, ສະຫວ່າງ, ສີວິໄລ ແລະ ສະເໜ,* ການຫລຽວຄືນຫລັງເບິ່ງປະຫວັດສາດທີ່ຜ່ານມານັ້ນ ຈະເຮັດໃຫ້ພວກເຮົາ ມີຄວາມທະນົງໃຈ ແລະ ຮູ້ສຶກເປັນກຽດຢ່າງຍິ່ງ ທີ່ໄດ້ເປັນຄົນລາວ, ທັງເປັນບົດຮຽນໃຫ້ພວກເຮົາຕ້ອງຮັກແພງສາມັກຄີກັນເຂົ້າຕື່ມ ເພື່ອສ້າງສາປະເທດຊາດໄປຕາມແນວທາງຂອງພັກ ແລະ ລັດ, ເຮັດໃຫ້ປະເທດຊາດນັບມື້ນັບຈະເລີນຮຸ່ງເຮືອງກ້າວໜ້າໄປຢ່າງບໍ່ຢຸດຢັ້ງ.

ຂ້າພະເຈົ້າຫວັງຢ່າງຍິ່ງວ່າ ພວກເຮົາຈະພ້ອມກັນອອກເຫື່ອແຮງ ທັງສະຕິປັນຍາ ແລະ ຊັບສິນເຂົ້າໃນການກະກຽມສະເຫລີມສະຫລອງວຽງຈັນເປັນນະຄອນຫລວງຄົບຮອບ 450 ປີ ນີ້ຢ່າງຄຶກຄື້ນ ແລະ ສົມກຽດໃນທ້າຍປີ 2010 ນີ້.

ນະຄອນຫລວງວຽງຈັນ, ວັນທີ 19 ເດືອນ ພຶດສະພາ 2009

**ສົມສະຫວາດ ເລັ່ງສະຫວັດ**

ຮອງນາຍົກລັດຖະມົນຕີ, ຜູ້ປະຈຳການລັດຖະບານ ແຫ່ງ ສປປ ລາວ

ປະທານຄະນະກຳມະການຈັດງານສະເຫລີມສະຫລອງວຽງຈັນ

ເປັນນະຄອນຫລວງຄົບຮອບ 450 ປີ

# ຄຳເຫັນຂອງສະຖາບັນຄົ້ນຄວ້າປະຫວັດສາດ

" ນະຄອນຫຼວງວຽງຈັນສະໄໝລາວເປັນອານານິຄົມຂອງຝັ່ຣງ"ເປັນປຶ້ມເຫຼັ້ມທີ III ໃນຊຸດ " ນະຄອນຫຼວງວຽງຈັນຄົບຮອບ 450ປີ " ທີ່ທ່ານ ທິມມະກອນ ມະໂນທັມ ໄດ້ອຸດສາພະຍາຍາມຄົ້ນຄວ້າ ແລະຂຽນອອກເພື່ອປະກອບສ່ວນສະເຫຼີມສະຫຼອງ ນະຄອນຫຼວງວຽງຈັນຄົບຮອບ 450 ປີ ໃນປີ 2010; ແລະໃຫ້ຄວາມກະຈ່າງແຈ້ງຕື່ມກ່ຽວກັບສະພາບແວດລ້ອມທາງດ້ານການເມືອງ ເສດຖະກິດສັງຄົມ ແລະວັດທະນະທຳຂອງນະຄອງຫຼວງວຽງຈັນ ໃນລະຫວ່າງຊຸມປີ 1893 - 1954. ທ່ານ ທິມມະກອນໄດ້ເອົາໃຈໃສ່ວາດພາບ ນະຄອນຫຼວງວຽງຈັນຫຼັງຈາກກອງທະຫານສະຫຍາມຈູດເຜົາທຳລາຍ ແລະກວດລ້າງເອົາທຸກສິ່ງໄປ ປ່ອຍໃຫ້ວຽງຈັນເປັນເມືອງຮ້າງຮົກ ແລ້ວພວກອານານິຄົມຝຣັ່ງໄດ້ມາກໍ່ສ້າງຖານອຳນາດ ແລະອິດທິພົນຂອງຕົນຂຶ້ນ ອັນພາໃຫ້ມີການຕໍ່ສູ້ກູ້ຊາດລາວຕ້ານຝຣັ່ງເປັນເວລາຍາວນານ 55 ປີ .ເລີ່ມດ້ວຍຂະບວນການຂອງອົງແກ້ວ, ພໍ່ກະດວດ, ຄູຄຳ, ອົງກົມມະດຳ, ແນວລາວສ້າງຮັກຊາດ ແລະພັກຄອມມູນິດອິນດູຈີນ ຈົນຮອດໄຊຊະນະດຽນບຽນຟູ ແລ້ວຈົບລົງດ້ວຍສັນຍາເຊີແນວປີ 1954.

ດ້ວຍປຶ້ມຫົວນີ້ທ່ານ ທິມມະກອນ ມະໂນທັມ ໄດ້ຊີ້ໃຫ້ເຫັນວ່າໃນນະຄອນຫຼວງວຽງຈັນໃນສະໄໝເຄິ່ງທຳອິດຂອງສະຕະວັດທີ 20 ນັ້ນໄດ້ມີການປະຕິສັງຂອນຟື້ນຟູສິລະປະ ແລະສະຖາປັດຕະຍະກຳພຸດທະສາສະໜາຈຳນວນໜຶ່ງພ້ອມດຽວກັນກັບການກໍ່ສ້າງຖະໜົນຫົນທາງ, ສຳນັກງານ ແລະຫໍໂຮງ ທີ່ທຳການ ແລະພັກເຊົາຂອງກົງຈັກອຳນາດຫົວເມືອງຂຶ້ນ. ສິ່ງກໍ່ສ້າງເຫຼົ່ານີ້ໄດ້ກາຍເປັນພື້ນຖານຂອງອິທະພົນຝຣັ່ງທີ່ຍັງປະກົດໃຫ້ເຫັນ. ແຕ່ຖ້າທຽບໃສ່ກຳປູເຈຍ ແລະຫວຽດນາມໃນເວລາດຽວກັນແລ້ວອຳນາດອານານິຄົມ ຝຣັ່ງໄດ້ເອົາໃຈໃສ່ນ້ອຍທີ່ສຸດຕໍ່ການພັດທະນາລາວ ເວົ້າລວມ ແລະຕໍ່ການພັດທະນາວຽງຈັນເວົ້າສະເພາະ.

ດ້ວຍຄວາມເປັນວິສະວະກອນ ແລະປະສົບການທີ່ໄດ້ຈາກອາຊີບ, ໜ້າທີ່ການງານ ແລະຄວາມດຸໝັ່ນຂະຫຍັນພຽນ ທ່ານ ທິມມະກອນ ມະໂນທັມ ໄດ້ເຮັດໃຫ້ຕົນເອງກາຍເປັນນັກປະຫວັດສາດຄົນໜຶ່ງຂອງລາວທີ່ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງເວລາໄດ້ຢ່າງໜ້າສັນລະເສີນ.

ດັ່ງນັ້ນ ສະຖາບັນຄົ້ນຄວ້າປະຫວັດສາດ ຈຶ່ງຂໍສະແດງຄວາມຍິນດີຊົມເຊີຍຕໍ່ຜົນງານດັ່ງກ່າວ ແລະຫວັງວ່າຜົນງານນີ້ຈະຊ່ວຍຊຸກຍູ້ໃຫ້ການສຶກສາຄົ້ນຄວ້າຂີດຂຽນປະຫວັດຄວາມເປັນມາ ແລະວິວັດທະນາການຂອງຫຼາຍຕົວເມືອງ ແລະບ້ານຕ່າງໆທີ່ສຳຄັນຂອງລາວໃນໂອກາດຕໍ່ໄປ.

ວຽງຈັນ, ວັນທີ 25 /12/ 2009

ຫົວໜ້າສະຖາບັນຄົ້ນຄ້ວາປະຫວັດສາດ

ຈັນທະພີລິດ ຈຽມສີສຸລາດ

# ຄຳເຫັນຂອງຜູ້ຂຽນ

ເພື່ອເປັນການຕ້ອນຮັບ ການສ້າງຕັ້ງ ນະຄອນຫຼວງວຽງຈັນຄົບຮອບ 450 ປີ ທີ່ ພັກ ແລະ ລັດຖະບານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ຄະນະນຳ ຂອງນະຄອນຫຼວງວຽງຈັນພວມກະກຽມຢູ່ດຽວນີ້, ຂ້າພະເຈົ້າໄດ້ຮັບມອບໝາຍ ໃຫ້ຄົ້ນຄວ້າປະຫວັດສາດຂອງ ນະຄອນວຽງຈັນ ທາງດ້ານຜັງເມືອງ, ເຄຫາສະຖານ, ສະຖາປັດຕະຍະກຳ ຂອງເມືອງທີ່ເກົ່າແກ່ແຫ່ງນີ້ ເພື່ອໃຫ້ລູກຫຼານ ຜູ້ສືບທອດເຊື້ອຊາດລາວ ໄດ້ເຫັນຄວາມເປັນຈິງ ກ່ຽວກັບ ອະດີດຕະການຂອງນະຄອນຫຼວງວຽງຈັນ.

ຂ້າພະເຈົ້າແມ່ນ ວິສະວະກອນ ອາວຸໂສຜູ້ໜຶ່ງ ທີ່ມັກຄົ້ນຄວ້າປະຫວັດສາດ, ສິລະປະ, ສະຖາປັດຕະຍະກຳຂອງລາວ ເພື່ອຊອກຫາຄວາມຈິງມາຂຽນອອກ. ປະຫວັດສາດຂອງເມືອງວຽງຈັນ ໃນສະຕະວັດທີ 20 ນີ້ ຍັງມີຂໍ້ມູນ ແລະ ແຫຼ່ງຂ່າວຈຳນວນໜຶ່ງ ທັງຂອງຄົນລາວ ແລະ ຕ່າງປະເທດ, ແຕ່ ຂໍ້ມູນເຫຼົ່ານີ້ຍັງຂາດຄວາມຊັດເຈນ ດ້ານ ເວລາ ປະລິມານ ຄຸນະພາບ ຜູ້ອອກແບບ ກໍ່ສ້າງ ແລະມູນຄ່າຕ່າງໆ. ເຖິງຢ່າງໃດກໍ່ຕາມ ການລົງສຳຫຼວດເບິ່ງອາຣະຍະທຳເກົ່າແກ່ ທີ່ຍັງເຫັນຢູ່ ຫຼື ປະຕິສັງຂອນຄືນໃໝ່, ການຊອກອ່ານປຶ້ມຕ່າງໆ ຂອງຄົນລາວ ແລະ ສາກົນມາລົມທຽບໃສ່ກັນ ເພື່ອຄວາມເໝາະສົມນັ້ນ ແມ່ນຄວາມຈຳເປັນພາວະວິໄສ, ຊຶ່ງບັນຊີເອກະສານເຫຼົ່ານີ້ ໄດ້ຈັດໄວ້ໃນໜ້າຫຼັງຂອງປຶ້ມຫົວນີ້.

ວິທີຄົ້ນຄວ້າທີ່ວິທະຍາສາດ ແມ່ນອີງໃສ່ຫຼັກມູນພື້ນຖານ ຂອງທິດສະດີ ວັດຖຸນິຍົມປະຫວັດສາດ ແລະ ວັດຖຸນິຍົມສັດຈະວິພາກ ມາວິໄຈ ຈຶ່ງບໍ່ງົມງວາຍ ແລະ ອັດຕະວິໄສເກີນໄປ.

ອີກປະການໜຶ່ງ, ເມື່ອຂຽນປະຫວັດສາດ ຄວາມເປັນຈິງ ອອກມາແລ້ວ, ກໍ່ອາດຈະແຕະຕ້ອງເຖິງປະເທດໃດໜຶ່ງ ທີ່ຫຼີກບໍ່ໄດ້, ແຕ່ມັນມີຄວາມຈຳເປັນທີ່ສຸດ ທີ່ຈະຕ້ອງບັນລະຍາຍ ໃຫ້ທ່ານຜູ້ອ່ານໄດ້ຮູ້ໄດ້ເຫັນ ຄວາມເປັນຈິງ ໃນອະດີດຕະການຜ່ານມາເປັນຄືແນວໃດ.

ຈິດໃຈຂອງບົດຂຽນນີ້ ບໍ່ໄດ້ມີຈຸດປະສົງ ຈະສ້າງຄວາມແກ້ແຄ້ນ ແລະ ບາດໝາງຄືນແຕ່ປະການໃດທັງສິ້ນ, ແຕ່ໃຫ້ຮັບຮູ້ນຳກັນວ່າ: *ນັ້ນແມ່ນປະຫວັດສາດ ທີ່ເປັນອະດີດຕະການໄປແລ້ວ ທີ່ບໍ່ສາມາດຟື້ນຄືນມາໄດ້ອີກ* ເພາະວ່າມັນເປັນການກະທຳຂອງຄົນລຸ້ນກ່ອນ.

ພວກເຮົາທຸກຄົນຄວນຮັບຮູ້ເອົາໄວ້ ເປັນບົດຮຽນອັນເຈັບປວດ ແລະ ບໍ່ໃຫ້ອະດີດຕະການມັນຊ້ຳຮອຍຕື່ມ. ດຽວນີ້ ປະຊາຊົນບັນດາເຜົ່າ ຍິງຊາຍນ້ອຍໃຫຍ່ ໃຜໆກໍ່ຢູ່ໃຕ້ການນຳພາຂອງ ພັກປະຊາຊົນປະຕິວັດລາວ ແລະ ເຊື່ອໝັ້ນຕໍ່ແນວທາງຕ່າງປະເທດຂອງພັກຄື: ***ສັນຕິພາບ ມິດຕະພາບ ແລະ ຮ່ວມມືກັນ*** ຢູ່ສະເໝີມາ ຈະບໍ່ມຸ່ງໝາຍໄປແກ້ແຄ້ນ ກັບປະເທດໃດໜຶ່ງອີກແລ້ວ ເວັ້ນເສຍແຕ່ ແມ່ນການປ້ອງກັນຕົວເທົ່ານັ້ນ. ຂ້າພະເຈົ້າເຊື່ອໝັ້ນວ່າ ບົດຂຽນບົດນີ້ຈະນຳເອົາ ມິດຕະພາບ ແລະ ຄວາມເຂົ້າໃຈຊຶ່ງກັນ ແລະ ກັນ ກັບ ປະເທດ ທີ່ໄດ້ມີ ຄວາມຂັດແຍ່ງ ກັບລາວ ໃນອະດີດຕະການຜ່ານມາ.

ໃນບົດຂຽນນີ້, ບໍ່ປາສະຈາກຄວາມຂາດຕົກບົກຜ່ອງໃນຈຸດໃດຈຸດໜຶ່ງ, ຈຶ່ງຂໍຮຽນມາຍັງທ່ານຜູ້ອ່ານທັງຫຼາຍ ຈົ່ງສົ່ງຂ່າວມາຕຳໜິຕິຊົມຈະເປັນພະຄຸນຢ່າງສູງ, ຍິ່ງຈະເຮັດໃຫ້ປະຫວັດສາດຂອງຊາດລາວເຮົາສົມບູນໄປເລື້ອຍໆ. ປະຫວັດສາດຂອງປະເທດໃດໆກໍ່ເຊັ່ນດຽວກັນ, ບໍ່ແມ່ນວ່າຈະຂຽນພຽງຄັ້ງດຽວ ຫຼື 2,3 ຄັ້ງ ກໍ່ຈະສົມບູນໄດ້ໂລດ, ຖ້າມີສິ່ງຜິດພາດ ກະລຸນາອາໄພໃຫ້ດ້ວຍ.

ປຶ້ມຫົວນີ້ໄດ້ຜ່ານ ຄະນະອານຸກຳມະການດ້ານຜັງເມືອງ ເພື່ອສະຫຼອງວຽງຈັນເປັນນະຄອນຫຼວງຄົບຮອບ 450 ປີມາແລ້ວ. ການຮຽບຮຽງນີ້ຈະສຳເລັດຜົນ ກໍ່ແມ່ນໄດ້ຮັບການປະກອບສ່ວນຂອງ ອົງການ ແລະ ບຸກຄົນດັ່ງຕໍ່ໄປນີ້:

– ສະຖາບັນຄົ້ນຄວ້າປະຫວັດສາດ ໃນສະຖາບັນວິທະຍາສາດສັງຄົມແຫ່ງຊາດ

– ສະຖາບັນຄົ້ນຄວ້າພາກຕາເວັນອອກໄກຂອງຝຣັ່ງ EFEO ທີ່ນະຄອນຫຼວງວຽງຈັນ , ພິເສດແມ່ນ ທ່ານ ມີແຊນ ໂລ ຣິ ຢາ ( M.Lorillard ) ຫົວໜ້າສະຖາບັນແຫ່ງນີ້,

– ສະຖາບັນໂຍທາ ແລະ ຂົນສົ່ງ (ເມື່ອກ່ອນແມ່ນສະຖາບັນຄົ້ນຄວ້າຜັງເມືອງ),

– ຫໍພິພິດຕະພັນປະຫວັດສາດແຫ່ງຊາດ,

– ທ່ານ ດຣ ບຸນເຫຼື້ອມ ສີສຸລາດ ປະທານສະພາວິທະຍາສາດ ກະຊວງໂຍທາທິການ ແລະ ຂົນສົ່ງ ທີ່ໄດ້ປະກອບຂໍ້ມູນໃຫ້ຫຼາຍ ແຕ່ສະໄໝອານານິຄົມເຖິງປະຈຸບັນ,

– ທ່ານ ຄຳເພົາ ພອນແກ້ວ , ປະລິຍາຕີ ດ້ານປະຫວັດສາດ ແລະ ພູມສາດ ຈາກຝຣັ່ງເສດ, ອະດີດຜູ້ຕາງໜ້າລາວປະຈຳຢູແນດສະໂກ,

– ທ່ານ ຄຳຕັນ ຈັນທະລາ ອະດີດ ລັດຖະມົນຕີຊ່ວຍວ່າການ ກະຊວງສຶກສາທິການແຫ່ງ ສ.ປ.ປ ລ

– ທ່ານ ຄຳພັນ ສິມມາລາວົງ ອະດີດ ລັດຖະມົນຕີຊ່ວຍວ່າການ ກະຊວງການຄ້າ ແລະ ອະດີດເອກອັກຄະລັດຖະທູດແຫ່ງ ສປປລ ປະຈຳ ຣາຊະອານາຈັກໄທ, ກຳພູຊາ ແລະ ຝຣັ່ງ,

– ທ່ານ ນາງ ດາລາ ກັນລະຍາ ແລະ ນາງ ດວງເດືອນ ບຸນຍາວົງ (ລູກສາວຂອງ ທ່ານ ມະຫາ ສິລາ ວີຣະວົງ),

– ທ່ານ ຊາຍຄຳ ອະດີດຫົວໜ້າກົມທາງຫຼວງແຫ່ງຊາດ, ອະດີດ ຫົວໜ້າກອງເລຂາທິການ ອົງການແມ່ນ້ຳ ຂອງລະຫວ່າງຊາດ ທີ່ ບາງກອກ, ແລະ ຜູ້ອາວຸໂສອື່ນໆ ອີກຫຼາຍທ່ານ ທີ່ໄດ້ໃຫ້ຄຳເຫັນທີ່ເປັນຂໍ້ມູນ ອັນຊັດເຈນຕື່ມ.

ທ້າຍສຸດປຶ້ມຫົວນີ້ຈະປະກົດອອກສູ່ສາຍຕາທ່ານຜູ້ອ່ານໄດ້ ກໍ່ຕໍ່ເມື່ອ ໄດ້ຮັບການອຸປະຖຳດ້ານການພິມ ຈາກອົງການ ແລະ ບໍລິສັດຕ່າງໆ ຊຶ່ງມີ ລາຍຊື່ຢູ່ດ້ານຫຼັງຂອງປຶ້ມຫົວນີ້.

ສະນັ້ນ ອີກເທື່ອໜຶ່ງ ຈຶ່ງຂໍສະແດງຄວາມຂອບໃຈມານະທີ່ນີ້ດ້ວຍ.

ວຽງຈັນ, ວັນທີ 30 ເມສາ 2009

ທົມມະກອນ ມະໂນທັມ

# ຄຳແນະນຳ

ນະຄອນຫຼວງວຽງຈັນ ທີ່ພວກເຮົາໄດ້ຮຽກກັນມາໃນທຸກວັນນີ້, ກ່ອນໜ້ານີ້ 450 ປີ ແມ່ນນະຄອນຫຼວງແຫ່ງອານາຈັກລາວລ້ານຊ້າງ ແລ້ວ ປ່ຽນມາເປັນ ສູນກາງການປົກຄອງຂອງອານານິຄົມຝຣັ່ງ ໃນແຄວ້ນລາວ ຕໍ່ມາໄດ້ກາຍເປັນ ນະຄອນຫຼວງຂອງຣາຊະອານາຈັກລາວ, ຈາກນັ້ນມາກໍ່ໄດ້ກາຍມາເປັນນະຄອນຫຼວງ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແຕ່ປີ 1975 ມາ.

ນະຄອນຫຼວງວຽງຈັນ ມີປະຫວັດອັນຍືດຍາວ ຊຶ່ງໃນຫຼາຍສະໄໝກໍ່ຮຸ່ງເຮືອງເຫຼືອງເຫຼື້ອມ, ປະຊາຊົນມີຄວາມສະຫງົບສຸກ, ມີຄວາມຢູ່ດີກິນດີ ມີຊື່ສຽງໃນອາຊີ ແລະ ຮັບຮູ້ຈາກບາງປະເທດໃນເອີຣົບ ວ່າ: ເປັນປະເທດທີ່ມີ ອະຣະຍະທຳອັນງົດງາມ ມີວັດຖຸບູຮານ ແລະ ປູຊະນີຍະສະຖານ ອັນລືຊື່ໃນທົ່ງພຽງແມ່ນ້ຳຂອງແຫ່ງນີ້, ປະຊາຊົນ ມັກຄວາມເປັນທຳ ມັກສັນຕິພາບ ແລະ ຊື່ສັດສຸດຈະລິດ, ມີນ້ຳໃຈກ້ວາງຂວາງ ເພື່ອແຜ່, ແຕ່ກໍ່ມີບາງຄັ້ງ ໄດ້ຖືກຄຸກຄາມຈາກ ອານາຈັກໃກ້ຄຽງ ທີ່ເຂັ້ມແຂງກວ່າ ພິເສດ ແມ່ນໃນປີ 1828 ສັກດີນາສະຫຍາມ ໄດ້ເຂົ້າມາໂຈມຕີ ນະຄອນວຽງຈັນ ຢ່າງໂຫດຫ້ຽມປ່າເຖື່ອນທີ່ສຸດໃນປະຫວັດສາດ ດ້ວຍການເຂັ່ນຂ້າປະຊາຊົນ ແລະ ຈູດເລົາເຜົາຜານ ນະຄອນວຽງຈັນ ຈົນກ້ຽງ ເປັນເທົ່າຖ່ານ ລວມທັງໝົດປະມານ 6 ຫາ 8 ພັນ ຫຼັງຄາເຮືອນ ແລ້ວກວາດຕ້ອນເອົາ ປະຊາຊົນປະມານ 150,000ຄົນ ໄປເປັນຂ້າທາດຂຸດຄອງນ້ຳ, ຂ້າຮັບໃຊ້ໃນເຮືອນຊານ, ເປັນເປົ້າບັ້ງກະສຸນປືນໃຫ້ພວກເຂົາ, ຖືກບັງຄັບໃຫ້ເຮັດວຽກແສນສາຫັດ ແລະ ໂຫດຫ້ຽມ ຈົນເສຍຊີວິດໄປເປັນຫຼາຍໝື່ນຄົນ [1].

ຈາກນັ້ນວຽງຈັນ ໄດ້ກາຍເປັນເມືອງຮ້າງໄປ 65 ປີ, ມີຕົ້ນໄມ້, ເຄືອເຂົາ ແລະ ຫຍ້າເກີດຂຶ້ນ ທົບໄປໝົດ ມີທັງສັດປ່າ: ກວາງ ,ຟານ ,ເສືອ ແລະ ງູພິດ ທຸກປະເພດອີກດ້ວຍ.

ເມື່ອຝຣັ່ງໄດ້ເຂົ້າມາຍຶດເອົາລາວໃນປີ 1893 ແລ້ວ ກໍ່ໄດ້ມາປົກຄອງເມືອງລາວ ໃນເບື້ອງກ້ຳຊ້າຍຂອງແມ່ນ້ຳຂອງ ຈຶ່ງໄດ້ພົບພໍ້ ເມືອງຮ້າງຂອງນະຄອນວຽງຈັນ ທີ່ເຕັມໄປດ້ວຍ ຊາກສະຫຼັກຫັກພັງ ຂອງວັດວາອາຣາມ, ລາຊະວັງ, ຫໍໂຮງ, ເຮືອນຊານ, ກຳແພງເມືອງ ຢ່າງຊະຊາຍເຕັມໄປໝົດ.

ໃນບົດຂຽນຂອງ A.Pavie, D de Lagrée, F. Garnier, A.Raquez ແລະ ຮູບແຕ້ມຂອງ Delaporte, H.Parmentier ແລະ ຜູ້ອື່ນໆ ກໍ່ລ້ວນແຕ່ໄດ້ຢັ້ງຢືນແນວນີ້ທັງນັ້ນ. ລັດຖະບານຝຣັ່ງ ແລະ EFEO[2] ໄດ້ລົມທົບກັບ ປະຊາຊົນໃນເມືອງວຽງຈັນ ບູຣະນະພະທາດຫຼວງ ແລະ ກໍ່ສ້າງເມືອງວຽງຈັນຄືນໃໝ່.

ຈາກນັ້ນເມືອງວຽງຈັນ ໄດ້ຄ່ອຍມີຊີວິດຊີວາຄືນມາອີກ ແລ້ວກາຍເປັນທີ່ຕັ້ງເມືອງເອກຂອງ ແຄວ້ນລາວ ໃນອິນດູຈີນຝຣັ່ງເສດຈົນເຖິງປີ 1954, ແລ້ວກາຍມາເປັນນະຄອນຫຼວງແຫ່ງ ຣາຊະອານາຈັກລາວ ແຕ່ປີ 1954 ເຖິງ 1975.

---

1 ຕາມບົດຂຽນ Pages Laotiennes ຂອງ A.Raquez 1900

2 Ecole Française d'Extr ême Orient ( ສະຖາບັນຄົ້ນຄ້ວາພາກຕາເວັນອອກໄກຂອງຝຣັ່ງ )

ພາຍຫຼັງຕໍ່ສູ້ກັນຢ່າງດຸເດືອດເປັນເວລາ 30ປີ ລະຫວ່າງກຳລັງຮັກຊາດ ນຳພາໂດຍ ພັກປະຊາຊົນລາວ (ພັກປະຊາຊົນ ປະຕິວັດລາວ ໃນປະຈຸບັນ) ກັບພວກລ່າເມືອງຂຶ້ນ ແລະ ຝ່າຍ ຣາຊະອານາຈັກລາວ ຊຶ່ງໄດ້ນຳໄຊຊະນະມາໃຫ້ແກ່ກຳລັງຮັກຊາດ ຈຶ່ງໄດ້ສະຖາປະນານະຄອນວຽງຈັນ ໃຫ້ກາຍເປັນນະຄອນຫຼວງ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 2 ທັນວາ ປີ 1975. ເມື່ອຮອດປີ 2010 ນະຄອນຫຼວງວຽງຈັນ ກໍ່ຈະມີອາຍຸໄດ້ 450ປີ ພໍດີ.

ປຶດຊຽນນີ້ ບໍ່ສາມາດກວມເອົາ ທຸກບັນຫາໄດ້, ພໍແຕ່ວ່າເບິ່ງຄືນຫຼັງ ຄວາມເປັນມາຂອງ ນະຄອນວຽງຈັນ ທາງດ້ານເຄຫາສະຖານ, ຜັງເມືອງ, ສະຖາປັດຕະຍະກຳ, ການຂະຫຍາຍຕົວ ຂອງປະຊາກອນ ແລະ ສິລະປະກຳ ບາງຢ່າງເທົ່ານັ້ນ, ຕາມການວາງໜ້າທີ່ ຂອງອານຸກຳມະການດ້ານຜັງເມືອງ ຂອງຄະນະກຳມະທິການ ຈັດງານສະເຫຼີມສະຫຼອງວຽງຈັນເປັນ ນະຄອນຫຼວງຄົບຮອບ 450 ປີ.

ເພື່ອຊຽນປະຫວັດ ຄວາມເປັນມາຂອງນະຄອນວຽງຈັນໃຫ້ແຈ້ງ ແລະ ເໝາະສົມຈຶ່ງໄດ້ຈັດແບ່ງປະຫວັດເມືອງວຽງຈັນອອກເປັນ 5 ໄລຍະ ຫຼື 5ເຫຼັ້ມຄື :

1. ນະຄອນວຽງຈັນສະໄໝບູຮານ ( ກ່ອນ ຄ.ສ 1560) ພິມແລ້ວ
2. ນະຄອນຫຼວງວຽງຈັນ ສະໄໝອານາຈັກລາວລ້ານຊ້າງ (ຄ.ສ1560-1893 ລວມ: 333 ປີ) ພິມແລ້ວ
3. ນະຄອນຫຼວງວຽງຈັນ ສະໄໝລາວເປັນອານານິຄົມຂອງຝຣັ່ງ(ແຕ່ ຄ.ສ 1893 -1954 ລວມ: 61ປີ) ແມ່ນເຫຼັ້ມນີ້ເອງ
4. ນະຄອນຫຼວງວຽງຈັນ ສະໄໝຣາຊະອານາຈັກລາວ (ແຕ່ ຄ.ສ1954-1975 ລວມ:21ປີ)
5. ນະຄອນຫຼວງວຽງຈັນ ສະໄໝ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ແຕ່ ຄ.ສ 1975-2010 ລວມ:35ປີ), ໄລຍະນີ້ແມ່ນ ສະຖາບັນ ໂຍທາ ແລະ ຂົນສົ່ງ ເປັນຜູ້ຊຽນ ຊຶ່ງເມື່ອກ່ອນແມ່ນ ສະຖາບັນຜັງເມືອງ ຂອງ ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ແຫ່ງ ສ.ປ.ປ.ລາວ.

24/VII ห้ามจำหน่าย

# ສາລະບານ


ຄໍານໍາ ຂອງ ທ່ານ ສົມສະຫວາດ ເລັ່ງສະຫວັດ ........................................ ໜ້າ 1

ຄໍາເຫັນຂອງສະຖາບັນຄົ້ນຄ້ວາປະຫວັດສາດ........................................2

ຄໍາເຫັນຂອງຜູ້ຂຽນ ........................................ 3

ຄໍາແນະນໍາ ........................................ 5

ສາລະບານ ........................................ 7

1. ຝຣັ່ງຢຶດເອົາອານາຈັກລາວລ້ານຊ້າງຝັ່ງຊ້າຍແມ່ນໍ້າຂອງ ໃນປີ 1893 ........................................8

2. ການຕົກລົງເອົານະຄອນວຽງຈັນເປັນສູນກາງການປົກຄອງຂອງຝຣັ່ງໃນແຄວ້ນລາວ........................................10

3. ການຟື້ນຕົວຂອງນະຄອນວຽງຈັນ (1893-1914) ........................................ 11

-ການປຸກສ້າງຊົ່ວຄາວຂອງຝຣັ່ງ (ໄລຍະ 1 : 1893-1896) ........................................ 11

-ການປຸກສ້າງຖາວອນຂອງຝຣັ່ງ (ໄລຍະ 2 : 1897-1914) ........................................13

4. ການພັດທະນານະຄອນຫຼວງວຽງຈັນ (ໄລຍະ 3: 1914-1940) ........................................ 17

4.1 ການຈັດສັນເຂດ ........................................ 18

4.2 ການກໍ່ສ້າງຕຶກທາງຣາຊະການ ........................................ 19

4.3 ການກໍ່ສ້າງຖະໜົນ ແລະ ການຂົນສົ່ງ ........................................21

4.4 ການນໍາໃຊ້ງົບປະມານ ........................................ 28

4.5 ການປະຕິສັງຂອນວັດແລະທາດ ........................................ 29

4.6 ສະຖາປັດຕະຍະກໍາ ແລະ ສິລະປະກໍາ ........................................ 33

4.7 ປະຊາກອນ ........................................ 44

4.8 ລະບົບນໍ້າສະອາດ ແລະ ນໍ້າເສຍ ........................................ 45

4.9 ການປົກຄອງຂອງຝຣັ່ງ ........................................ 46

5. ໄລຍະສົງຄາມໂລກຄັ້ງທີ 2 ແລະ ສົງຄາມອິນດູຈີນ (1940-1954) ........................................47

6. ສັງລວມການຂະຫຍາຍຕົວຂອງນະຄອນຫຼວງວຽງຈັນສະໄໝອານານິຄົມ........................................ 49

***ເອກະສານຊ້ອນທ້າຍ:***

ເລກ 1: ຊື່ຖະໜົນເປັນພາສາຝຣັ່ງ ແລະ ລາວ ........................................50

ເລກ 2: ຊື່ເຈົ້າແຂວງຝຣັ່ງຜູ້ມາປົກຄອງ ແຂວງ ວຽງຈັນ ........................................51

ເລກ 3: ຄໍາອະທິບາຍແຜນທີ່ ພ້ອມດ້ວຍແຜນທີ່ ໃນປີຕ່າງໆ ........................................ 52

ເລກ 4: ເອກະສານອ້າງອີງ ........................................ 71

## 1. ຝຣັ່ງຍຶດເອົາອານາຈັກລາວລ້ານຊ້າງຝັ່ງຊ້າຍຂອງແມ່ນ້ຳຂອງໃນປີ 1893.

ໃນກາງສະຕະວັດທີ 19 ພາຍຫຼັງຍຶດເອົາໄຊງ່ອນ ປີ 1859 ແລະ ພະນົມເປັນ ປີ 1863 ແລ້ວ, ນັກສຳຫຼວດຂອງຝຣັ່ງໄດ້ມາລາວເປັນຄັ້ງທຳອິດນຳໂດຍ ທ່ານ ດູດາກ ເດີ ລາເກຼ (E.Doudart de Lagrée) ລະຫວ່າງ ປີ1866-1868, ແລ້ວໄດ້ຂຽນບັນທຶກໄວ້ກ່ຽວກັບລາວ ທາງດ້ານຍຸດທະສາດ ຄວາມອຸດົມຮັ່ງມີ ແລະ ຄວາມອາດສາມາດນຳໃຊ້ແມ່ນ້ຳຂອງຜ່ານລາວຂຶ້ນໄປຫາຈີນ. ໃນເວລານັ້ນ ລັດຖະບານຝຣັ່ງສົນໃຈ ຢາກເຮັດການຄ້າກັບຈີນໂດຍໃຊ້ແມ່ນ້ຳຂອງ, ຂຸດຄົ້ນເອົາຄວາມຮັ່ງມີຂອງລາວ ແລະ ສ້າງລາວໃຫ້ເປັນກັນຊົນ ລະຫວ່າງ ສະຫຍາມ ແລະ ຫວຽດນາມ. ເມື່ອນັກສຳຫຼວດຂອງຝຣັ່ງ ຈຸທີ 2 ມາລາວໃນປີ 1870-71 ນຳໂດຍ ທ່ານ ຝຣັ່ງຊິດ ກາກນີເອ (Francis Garnier) ກໍ່ໄດ້ຢັ້ງຢືນວ່າ: "ສະຖານທີ່ເມືອງວຽງຈັນ ໄດ້ຖືກພວກສະຫຍາມທຳລາຍມາກວ່າ 40 ປີ ແລ້ວ, ບ່ອນໃດກໍ່ມີແຕ່ປ່າ ແລະ ຫຍ້າເກີດຂຶ້ນເຕັມໄປໝົດ.

ເພື່ອບໍ່ໃຫ້ມີ ການຕໍ່ສູ້ກອບກູ້ເອົາເອກະລາດອີກ, ປະຊາກອນ ຂອງນະຄອນຫຼວງວຽງຈັນ ຈຶ່ງໄດ້ຖືກກວາດຕ້ອນໄປໄວ້ ໃນຫຼາຍແຂວງຂອງສະຫຍາມ ຢ່າງກະແຈກກະຈາຍ ແລ້ວເອົາປະຊາກອນແຂວງອື່ນໃນຝັ່ງຂວາຂອງ ແມ່ນ້ຳຂອງ ຫຼືວ່າ ສຸວັນນະພູມເຂົ້າມາຢູ່ແທນ. ສະນັ້ນເຂົາຈຶ່ງຕັ້ງ ເມືອງໜອງຄາຍ ຂຶ້ນແທນ ນະຄອນຫຼວງ ວຽງຈັນ ເພື່ອປົກຄອງແຄວ້ນລາວ".

ໃນປີ 1879 ລັດຖະບານຝຣັ່ງ ໄດ້ແຕ່ງຕັ້ງ ທ່ານ ປາວີ (A.Pavie) ເປັນກົງສຸນຝຣັ່ງ ປະຈຳຢູ່ຫຼວງພະບາງ ແລະ ທຳການສຳຫຼວດ ອານາຈັກເກົ່າຂອງລ້ານຊ້າງຢ່າງລະອຽດຕື່ມ. ທ່ານ ປາວີ A.Pavie ເປັນຜູ້ມີອຳນາດເຕັມ ທີ່ຈະຕັດສິນເອົາລາວເປັນຫົວເມືອງຂຶ້ນ. ເມື່ອມາຕັ້ງຢູ່ຫຼວງພະບາງແລ້ວ ກໍ່ໄດ້ເຂົ້າເກ່ຍກ່ອມພະເຈົ້າແຜ່ນດິນ ເຈົ້າອຸ່ນຄຳ ແລະ ລູກຊາຍ ເຈົ້າຄຳສຸກ ໃຫ້ອ່ອນນ້ອມຕໍ່ຝຣັ່ງ ທີ່ຈະເຂົ້າມາປົກປ້ອງ ລາວ ຕໍ່ການຮຸກຮານຂອງພວກຫໍ້, ພະມ້າ ແລະ ສະຫຍາມ.

ປີ 1883 ຝຣັ່ງ ຍຶດໄດ້ ພາກເໜືອຫວຽດນາມ, ປີ 1888 ຝຣັ່ງກໍ່ໄດ້ເຂົ້າຍຶດເອົາແຄວ້ນ 12 ຈຸໄທຂອງຣາຊະອານາຈັກຫຼວງພະບາງໄປ ແລ້ວໃຫ້ຫົວເມືອງຕ່າງໆ: ເມືອງໄລ່, ເມືອງ ລາ, ເມືອງແຖງ ແລະ ສ່ວນໃຫຍ່ຂອງແຂວງຫົວພັນທັງໝົດ ມາເປັນຂອງຕົນ ຕໍ່ມາກໍ່ໂອນໃຫ້ໄປຂຶ້ນກັບແຄວ້ນຕົງແກັງຂອງຫວຽດນາມໃນເວລາຕໍ່ມາ.

ປີ 1893 ຝຣັ່ງກໍ່ໄດ້ທຳສັນຍາກັບສະຫຍາມ ບັງຄັບໃຫ້ສະຫຍາມຍົກດິນແດນລາວ ຝັ່ງຊ້າຍຂອງແມ່ນ້ຳຂອງໃຫ້ຝຣັ່ງ,ຈາກນັ້ນ ລາວກໍ່ໄດ້ເສຍດິນດອນຕອນໃຫຍ່ (ກວ່າເຄິ່ງໜຶ່ງຂອງອານາຈັກລາວລ້ານຊ້າງ) ເບື້ອງຝັ່ງຂວາໃຫ້ແກ່ສະຍາມໄປຈົນເຖິງທຸກວັນນີ້ [3] . ໂດຍບໍ່ຍິນຍອມຕໍ່ການຕົກລົງດັ່ງກ່າວ, ເຈົ້າມະຫາອຸປະລາດ ບຸນຄົງ ແຫ່ງຣາຊະອານາຈັກຫຼວງພະບາງ ໄດ້ໄປຕໍ່ສູ້ກັບ ທ່ານ ປາວີ ເພື່ອທວງເອົາດິນແດນຝັ່ງຂວາ ຂອງຣາຊະອານາຈັກຫຼວງພະບາງຄືນ, ທ່ານ ປາວີ ຕອບວ່າ "ຖ້າພວກທ່ານບໍ່ເຫັນດີຕາມສັນຍາຕົກລົງນັ້ນ ກໍ່ເຊີນພວກທ່ານໄປຕີຂັບໄລ່ສະຫຍາມໃຫ້ໜີເອົາເອງ ແລ້ວຝຣັ່ງກໍ່ຈະຍິນດີນຳ" ອີງໃສ່ຄຳຕອບແບບທ້າທາຍນີ້, ເຈົ້າມະຫາອຸປະລາດ ກໍ່ໄດ້ເຕົ້າໂຮມເອົາປະຊາຊົນໄປຕີຂັບໄລ່ສະຫຍາມຢູ່ແຂວງ ໄຊຍະບູລີ ໃຫ້ແຕກພ່າຍໄປໝົດ, ຈຶ່ງໄດ້ແຂວງໄຊຍະບູລີ ມາເປັນຂອງລາວເຖິງທຸກວັນນີ້.

ສ່ວນຢູ່ອານາຈັກຈຳປາສັກ ເມື່ອເຫັນສະພາບການເປັນດັ່ງນັ້ນ, ພະຍາເຈົ້າເມືອງ ຍຸຕິທັມມະທອນ (ຄຳສຸກ) ກໍ່ໄດ້ນຳພາປະຊາຊົນ ໄປຂັບໄລ່ສະຫຍາມອອກໄປຈາກດິນແດນຈຳປາສັກເຊັ່ນດຽວກັນ, ຈຶ່ງໄດ້ດິນແດນແຫ່ງນີ້ຄືນມາ.(ໃນເວລານັ້ນ ສະຫຍາມແມ່ນຢ້ານກົວຝຣັ່ງຫຼາຍແລ້ວ ເພາະບໍ່ມີທີ່ເພິ່ງ).

---

[3] ມີຫຼາຍເອກະສານເວົ້າວ່າ ລາວຢູ່ປະເທດໄທດຽວນີ້ ມີກ່ວາ 15 ແຂວງ ຫຼືກ່ວາ 30 ລ້ານຄົນ.

ຈາກນັ້ນ ຈຶ່ງເກີດມີສັນຍາຝຣັ່ງ-ສະຫຍາມ ສະບັບທີ 2 ແລະ ທີ 3 ອີກໃນປີຕໍ່ມາ[4].



**ຮູບ ທ. ອ. ປາວີ ກັບຄະນະນັກສຳຫຼວດຝຣັ່ງ ມາລາວ (ຜູ້ທີ 1 ຂວາສຸດ ແຖວໜ້າ, ຮູບຖ່າຍປີ 1893)**
A.Pavie au premier rang à l'extrême droite

ເມື່ອໄດ້ອິນດູຈີນທັງໝົດແລ້ວ ຝຣັ່ງກໍ່ໄດ້ນຳໃຊ້ຍຸດໂທບາຍ "ແບ່ງແຍກເພື່ອປົກຄອງ" ໂດຍຕັດແບ່ງຫວຽດນາມອອກເປັນ 3 ພາກ ແລະ ແບ່ງລາວອອກເປັນ 2 ພາກ ຄື: ແຕ່ແຂວງວຽງຈັນລົງໄປໃຕ້ເປັນອານານິຄົມ (colonie), ສ່ວນ ຣາຊະອານາຈັກຫຼວງພະບາງ ເປັນເຂດອາລັກຂາຂອງຝຣັ່ງ (Protectorat), ເວົ້າແລ້ວທັງ 2 ພາກກໍ່ລ້ວນແຕ່ ເປັນທີວເມືອງຂຶ້ນຂອງຝຣັ່ງທັງນັ້ນ ໃນອິນໂດຈີນຝຣັ່ງເສດ.

ຝຣັ່ງໄດ້ຈັດການບໍລິຫານປະເທດເປັນ 4 ຂັ້ນຄື: ແຂວງ, ເມືອງ, ຕາແສງ ແລະ ບ້ານ. ໃນຂັ້ນບໍລິຫານທົ່ວປະເທດ ລັດຖະບານຝຣັ່ງໄດ້ແຕ່ງຕັ້ງ ຜູ້ສຳເລັດຣາຊະການຂອງຕົນ ມາປະຈຳຢູ່ລາວ (Le résident supérieur au Laos) ໂດຍຂຶ້ນກັບ ຜູ້ວ່າຣາຊະການສູງສຸດທົ່ວອິນໂດຈີນ ປະຈຳຢູ່ຮ່າໂນຍ (Le gouverneur général de l'Indochine). ໃນຂັ້ນແຂວງ ຝຣັ່ງໄດ້ແຕ່ງຕັ້ງເຈົ້າແຂວງຝຣັ່ງ (Le commissaire) ມາປະຈຳການຢູ່. ຂຶ້ນກັບແຂວງວຽງຈັນມີ 5 ເມືອງຄື: ເມືອງວຽງຈັນ, ເມືອງປາກຊັນ, ເມືອງວັງວຽງ, ເມືອງ ທຸລະຄົມ ແລະ ເມືອງຊະນະຄາມ ລວມມີ 20 ຕາແສງ 217 ບ້ານ ມີປະຊາກອນປະມານ 23,300 ຄົນ[5].

ໃນຂັ້ນເມືອງ ຕາແສງ ແລະ ບ້ານ ແມ່ນເຂົາເລືອກເອົາຄົນລາວມາປົກຄອງ ແຕ່ບໍ່ມີອຳນາດພໍ່ໃດຄອຍຖ້າແຕ່ ປະຕິບັດຕາມຄຳສັ່ງຂອງຝຣັ່ງ ໃນການເກັບພາສີອາກອນ (ຕົວເລກຄ່າການ), ເກນຄົນໄປທຳ

---

[4] ສັນຍາ 1903 ນັ້ນ ສະຫຍາມຍອມມອບແດນດິນຝັ່ງຂວາແມ່ນ້ຳຂອງທີ່ແຂວງຈຳປາສັກ ແລະ ຫຼວງພະບາງໃຫ້ແກ່ຝຣັ່ງ. ສັນຍາປີ 1907ນັ້ນ ຝຣັ່ງ ແລະ ສະຫຍາມ ພັດແບ່ງປັນເຂດແດນກັນຄືນໃໝ່ ໂດຍສົ່ງເມືອງດ່ານຊ້າຍ(ແຂວງເລີຍ),ຈັນທະບູລີ ,ຕາດຄືນໃຫ້ ສະຫຍາມ ເພື່ອແລກປ່ຽນເອົາ 4ແຂວງຂອງຂະເໝນຄືນ. ສັນຍາ ປີ1907 ນີ້ ໄດ້ເປັນພື້ນຖານໃນການເຈລະຈາເຂດແດນລະຫວ່າງ ລາວ-ໄທແຕ່ປີ 1990 ເປັນຕົ້ນມາ.

[5] ຕາມຂໍ້ມູນຂອງ ດຣ ບຸນເຫຼື້ມ ສີສູລາດ.

ງານ(ຄູລີ): ສ້າງທາງ ແບກຫາບ ລຳລຽງຂົນສົ່ງ ແລະ ວຽກໜັກຕ່າງໆ ປີໜຶ່ງບໍ່ຕ່ຳກ່ວາ 3 ຄັ້ງ ຕໍ່ຊາຍສະກັນຜູ້ໜຶ່ງ ແຕ່ລະຄັ້ງແມ່ນ 15 ວັນ ໂດຍແມ່ນຄົນງານຕ້ອງເປັຖົງເຂົ້າໄປກິນນຳ[6].

## 2. ການຕົກລົງເອົານະຄອນວຽງຈັນເປັນສູນກາງການປົກຄອງຂອງຝຣັ່ງໃນແຄວ້ນລາວ.

ເມື່ອຍຶດຄອງລາວໄດ້ແລ້ວ, ຝຣັ່ງກໍ່ໄດ້ແຕ່ງຕັ້ງຜູ້ບັນຊາການທະຫານ 2 ຄົນ ຢູ່ລາວ, ຜູ້ໜຶ່ງປະຈຳຢູ່ເມືອງໂຂງ, ຜູ້ທີສອງປະຈຳຢູ່ຫຼວງພະບາງ. ການຕິດຕໍ່ພົວພັນກັນແມ່ນຫຍຸ້ງຍາກຫຼາຍ ເພາະໄກກັນເກີນໄປ, ສະນັ້ນ ທ່ານ ພັນເອກ ຕວກນີເອ(Col.Tournier) ຜູ້ສຳເລັດຣາຊະການຝຣັ່ງ ປະຈຳລາວຜູ້ທຳອິດ ຈຶ່ງສະເໜີຕໍ່ລັດຖະບານຝຣັ່ງ ໃຫ້ມາຕັ້ງສູນກາງການເມືອງ ແລະ ການປົກຄອງຢູ່ ນະຄອນວຽງຈັນດ້ວຍເຫດຜົນດັ່ງນີ້:

- ເປັນທີ່ຕັ້ງເກົ່າຂອງນະຄອນຫຼວງ ແຫ່ງອານາຈັກລາວລ້ານຊ້າງ.
- ເປັນໃຈກາງຕິດຕໍ່ກັບແຂວງຕ່າງໆສະດວກດີ.
- ນຳໃຊ້ວັດສະດຸກໍ່ສ້າງເກົ່າ ຈາກຊາກສະຫຼັກຫັກພັງ ມາປຸກສ້າງສຳນັກງານ ຂອງອຳນາດອານານິຄົມ ແລະ ທີ່ຢູ່ອາໄສໄດ້ໄວ ແລະ ທັງເປັນການປະຢັດງົບປະມານອີກດ້ວຍ.

ສະນັ້ນ, ໃນປີ 1899 ລັດຖະບານຝຣັ່ງ ຈຶ່ງຕົກລົງເອົາວຽງຈັນບ່ອນດຽວເປັນ ທີ່ວ່າການຂອງຜູ້ສຳເລັດຣາຊະການຝຣັ່ງ ປະຈຳລາວ ແລ້ວປະລະແຜນການ ທີ່ຈະສ້າງສະຫວັນນະເຂດ ເປັນທີ່ຕັ້ງສູນກາງການປົກຄອງລາວອີກ. ຖືວ່າເປັນເວລາ 7 ປີ ທີ່ລັດຖະບານຝຣັ່ງລັ່ງເລຢູ່ ກ່ຽວກັບທີ່ຕັ້ງສູນກາງນັ້ນ, ກໍ່ເລີຍບໍ່ໄດ້ກໍ່ສ້າງຫຍັງເປັນສິ່ງຖາວອນໃນເມືອງວຽງຈັນ.

ທ່ານ ພ.ອ ຕວກນີເອ ຍັງຢ້ຳວ່າ: "ທີ່ຕັ້ງອັນພິເສດຂອງເມືອງວຽງຈັນ ເປັນສູນກາງ ການເມືອງ, ສາສະໜາ ທັງການຄ້າອີກ ແມ່ນຖືກຕ້ອງແລ້ວ. ຫຼັງຈາກຟື້ນຟູເມືອງຫຼວງແຫ່ງນີ້ແລ້ວ, ຄວາມຈະເລີນກໍ່ຈະກັບມາ, ການປະຕິສັງຂອນ ປູຊະນີຍະສະຖານ ອັນເກົ່າແກ່ ແລະ ງົດງາມຈະຄືນມາໃໝ່ ຈະເປັນບາດຄ້ອນໜັກຕີໃສ່ອິດທິພົນຂອງສະຫຍາມແນ່ນອນ" ເພາະວ່າ ສັກດີນາຊຸນເສິກສະຫຍາມເຄີຍເວົ້າວ່າ "ຈະເຜົາວຽງຈັນໃຫ້ມັນຍັງແຕ່ ດິນ, ຟ້າ ແລະ ອາກາດ ໄປຊົ່ວນິລັນດອນ". ທ່ານ ພ.ອ ຕວກນີເອ ຍັງເວົ້າຕື່ມວ່າ: "ເຖິງແນວໃດກໍ່ຕາມ, ຂ້າພະເຈົ້າຈະບໍ່ລັ່ງເລອີກ, ເມື່ອໃດວຽງຈັນກັບມາເປັນເມືອງເອກຄືນໃໝ່ແລ້ວ, ພວກເຮົາຈະອີງໃສ່ຄວາມຈິງຮັກພັກດີ ຂອງຄົນລາວແນ່ນອນ" [7] ຄຳເຫັນນີ້ໄດ້ຮັບການເຫັນດີ ແລະ ຕົກລົງເປັນທາງການຂອງ ທ່ານ ໂປນ ດູແມ (Paul Doumer) ຜູ້ວ່າຣາຊະການສູງສຸດຂອງຝຣັ່ງປະຈຳອິນດູຈີນ ທີ່ ຮ່າໂນຍ ຈຶ່ງໃຫ້ຕັ້ງເມືອງວຽງຈັນເປັນເທສະບານໜຶ່ງ. ນັກຂ່າວຝຣັ່ງມາລາວ ໃຜໆກໍ່ສະໜັບສະໜູນການເລືອກເອົາ ເມືອງວຽງຈັນເປັນທີ່ຕັ້ງສູນກາງການເມືອງຂອງແຄວ້ນລາວວ່າ: "ມັນຖືກຕ້ອງແລ້ວ, ເພາະມັນເປັນທັງສູນກາງຄົມມະນາຄົມຂົນສົ່ງ ບໍ່ພຽງແຕ່ກັບລາວເທົ່ານັ້ນ ແຕ່ທັງເປັນໃຈກາງຕິດຕໍ່ພົວພັນກັບປະເທດໃກ້ຄຽງອີກເຊັ່ນ: ຕັງແກ້ງ, ອານາມ, ສະຫຍາມ, ຂະເໝນ ແລະ ພະມ້າ, ທັງຕິດຕໍ່ໄປປະເທດຈີນທາງແມ່ນ້ຳຂອງອີກ". ສະນັ້ນ ລັດຖະບານຝຣັ່ງຈຶ່ງສັ່ງໃຫ້ຊ່ຽວຊານ, ນັກວິຊາການຕ່າງໆ ມາສຳຫຼວດໄວ້ກ່ອນ ແຜນທີ່ລາວ ທາງບົກ, ທາງນ້ຳ, ໂດຍສະເພາະ ທີ່ຕັ້ງຂອງເມືອງວຽງຈັນເຊັ່ນ:

---

[6] ຕາມຄຳຊົງຈຳຂອງທ່ານ ພູມີ ວົງວິຈິດ ເຈົ້າເມືອງວຽງຈັນ ໃນປີ 1942 ວ່າ ບາງປີກໍ່ມີຮອດ 4 ຫຼື 5ຄັ້ງ.

[7] ຄຳເວົ້ານີ້ແມ່ນຍົກມາຈາກບົດຂຽນຂອງ Sophie Clément Charpentier ຊື່ວ່າ: ການເລີ່ມຕົ້ນໃໝ່ຂອງວຽງຈັນເມືອງເອກແຫ່ງອານານິຄົມ ພິມໃນປຶ້ມ " ການຄົ້ນຄວ້າໃໝ່ກ່ຽວກັບລາວ" Recherches nouvelles sur le Laos ປີ 2008 ຂອງ EFEO.

Le Blévec ໄດ້ມາສຳຫຼວດແມ່ນ້ຳຂອງໃນປີ 1895, Lajonquière ມາແຕ້ມແຜນທີ່ຂອງເມືອງວຽງຈັນໃນປີ 1901, **Kliéber** ມາແຕ້ມແຜນທີ່ເມືອງວຽງຈັນລະອຽດກວ່າເກົ່າໃນປີ 1905 ທັງໄດ້ແຕ້ມແຜນທີ່ແບ່ງເຂດ ທີ່ຢູ່ອາໄສ, ນັກສຳຫຼວດໜ້າດິນ Quilici ມາແຕ້ມແຜນທີ່ຕາດິນລະອຽດ ໃນປີ 1910-1912.

## 3. ການຟື້ນຕົວຂອງນະຄອນວຽງຈັນ (1893 -1914)

ໃນເວລາຝຣັ່ງເຂົ້າມາ, ວຽງຈັນເປັນເມືອງຮ້າງບໍ່ມີຄົນຢູ່, ປະຊາຊົນສ່ວນຫຼາຍຈະຢູ່ເຂດນອກ. ເພື່ອກໍ່ສ້າງທີ່ຢູ່ອາໄສ ແລະ ຫ້ອງການ ຝຣັ່ງຈຶ່ງໄດ້ນຳເອົາຄົນ ອານາມ (ຄົນຫວຽດນາມພາກກາງ) ປະມານ 30 ຄອບຄົວເຂົ້າມາໃນປີ 1900, ເປັນຊ່າງໄມ້, ຊ່າງກໍ່, ນາຍພາສາ, ຄູ, ສະໝຽນ ແລະ ເປັນຄົນຮັບໃຊ້. ໄດ້ມີພໍ່ຄ້າຈີນ ປະມານ 10 ຄອບຄົວ ມາຕັ້ງເຮືອນຕາມແຄມຂອງ ໜ້າວັດຈັນ. ເມື່ອເຫັນວ່າມີຄວາມສະຫງົບແດ່ແລ້ວ, ຄົນລາວກໍ່ຄ່ອຍທະຍອຍເຂົ້າມາປຸກເຮືອນຕູບດ້ວຍໄມ້ໄຜ່, ມຸງຫຍ້າລຽບຕາມແຄມຂອງ ແຕ່ປາກປ່າສັກລົງມາ. ຝຣັ່ງໄດ້ແຕ່ງຕັ້ງໃຫ້ ເພຍ ສີ ສຸວັນນະວົງສາ ເປັນເຈົ້າເມືອງວຽງຈັນຄົນທຳອິດ (1893-1905) ເພື່ອຮັບໃຊ້ພວກເຂົາ. ເທດສະບານເມືອງວຽງຈັນ ມີໜຶ່ງຕາແສງ (ຮ້ອງວ່າຕາແສງເມືອງ) ລວມມີ 5 ບ້ານຄື: ບ້ານ ວັດຈັນ, ບ້ານ ຫາຍໂສກ, ບ້ານ ຊຽງຍືນ, ບ້ານ ເພຍວັດ ແລະ ບ້ານ ຫາດຂາວ. ພົນລະເມືອງທີ່ເຂົ້າມາຢູ່ ສ່ວນຫຼາຍຈະແມ່ນ ໄທພວນມາຈາກ ລ້ອງງື່ມ [8] , ຄົນລາວທີ່ລົບໜີພວກຫໍ້ໄປຝັ່ງຂວາ ແລະ ຄົນວຽງຈັນເດີມໄດ້ກັບຕ່າວຄືນມາ ລວມປະຊາກອນໃນເວລານັ້ນມີ ປະມານ 1800ຄົນ.

■ **ການປຸກສຳນັກງານຂອງຝຣັ່ງ.**

**(1) ການປຸກສ້າງຊົ່ວຄາວຂອງຝຣັ່ງ ( ໄລຍະ 1: 1893-1896) :**

ໃນເບື້ອງຕົ້ນນີ້, ຝຣັ່ງໄດ້ອີງໃສ່ຜັງຂອງເມືອງວຽງຈັນເກົ່າມາກໍ່ສ້າງ, ຍ້ອນເວລາສັ້ນ ຈຶ່ງບໍ່ທັນຄົ້ນຄ້ວາຜັງເມືອງຄັກແນ່, ຝຣັ່ງຈຶ່ງໄດ້ເກນເອົາແຮງງານຂອງປະຊາຊົນໃນ ເມືອງວຽງຈັນ, ເມືອງທຸລະຄົມ, ເມືອງປາກຊັນ ແລະ ເມືອງ ບໍລິຄັນ ມາປຸກສຳນັກງານຊົ່ວຄາວຢູ່ນະຄອນວຽງຈັນເຊັ່ນ:

- ປຸກສຳນັກງານຂອງຜູ້ສຳເລັດຣາຊະການ (Résidence Supérieure) ເປັນຫຼັງກ້ວາງໃຫຍ່ເປັນຮູບໂຕ U ດ້ວຍໄມ້ເນື້ອແຂງ, ປຸກຫ້ອງການນາຍພາສາ, ຫ້ອງການໄປສະນີ, ຫ້ອງການສະໝຽນ ແລະ ທີ່ພັກຂອງທະຫານປ້ອງກັນ ຊຶ່ງທັງໝົດນີ້ເປັນເຮືອນໄມ້ມຸງຫຍ້າ ຢູ່ທີ່ ພະຣາຊະວັງເກົ່າ (ທຳຄຳດຽວນີ້).
- ຕັ້ງຄຸກຊົ່ວຄາວ ທີ່ແຈກຳ້ຕາເວັນຕົກ ຂອງໂຮງໝໍມະໂຫສົດດຽວນີ້.
- ຕັ້ງສານຊົ່ວຄາວ ຢູ່ແຄມຂອງຕໍ່ໜ້າວັດກາງ (ໂຮງແຮມລ້ານຊ້າງດຽວນີ້).
- ປັບປຸງທ່າເຮືອ ຢູ່ກຳ້ຕາເວັນຕົກຂອງປາກປ່າສັກ ແລະ ສ້າງສູນໂທລະເລກ ທີ່ນາໄຮ່ດຽວ.
- ປະຊາຊົນໄດ້ສ້າງສາລາພັກ 2 ຫຼັງ ຕາມແຄມຂອງເພື່ອຮັບແຂກໄປມາ (ເຮືອນຕ່າງໆເຫຼົ່ານີ້ໄດ້ແຕ້ມໄວ້ໃນແຜນທີ່ຂອງ Le Blévec (1895-1896) ໜ້າ 55).

---

[8] ຕາມປື້ມປະຫວັດເມືອງພວນວ່າ:ຄົນລາວທີ່ເຂົ້າມາຢູ່ກ່ອນເພິ່ນນັ້ນສ່ວນຫຼາຍແມ່ນໄທພວນທີ່ມາຈາກລ້ອງງື່ມເຊັ່ນ: ຕະກຸນ ອິນທະວົງ ມາຢູ່ຄຸ້ມສີຖານ, ຕະກຸນ ສຸວັນນະວົງ ມາຢູ່ ຄຸ້ມ ວັດຈັນ, ຕະກຸນ ຊະນະນິກອນ ມາຢູ່ ຄຸ້ມເພຍວັດ, ຕະກຸນ ພົມມະວົງສາ ແລະ ອື່ນໆ..



Doc. 3 : la maison du Phya Sisouvannalavongsa en 1902 (source : Joseph Chevallier, *Lettres du Tonkin et du Laos*, éditions de L'Harmattan, 1995, Paris).

ເຮືອນ ເພຍ ສີ ສຸວັນນະວົງສາ, ເຈົ້າເມືອງວຽງຈັນຄົນລາວຜູ້ທຳອິດໃນສະໄໝອານານິຄົມຝຣັ່ງ (ປີ1902)



Doc. 5 : berge du Mékong à Vientiane en 1902 avec ses « boutiques de marchands chinois et laotiens » (source : Chevallier, 1995).

ເຮືອນຊົ່ວຄາວ (ຕູບ) ຂອງຄົນລາວ ທີ່ຍ້າຍເຂົ້າມາຢູ່ຕາມຖະໜົນແຄມຂອງແຖວວັດຈັນ(ປີ 1902)

**(2) ການປຸກສ້າງຖາວອນຂອງຝຣັ່ງ (ໄລຍະທີ 2: 1897-1914):**

ມາຮອດປີ 1904, ຝຣັ່ງ ໄດ້ຕົກລົງໃຫ້ເມືອງວຽງຈັນເປັນ ສູນກາງເທດສະບານໜຶ່ງ ແລະໄດ້ມີແຜນລວມໆ ເພື່ອພັດທະນາເມືອງວຽງຈັນແລ້ວ, ເຊັ່ນວ່າສະຫງວນການປຸກສ້າງໃນເຂດຣາຊະວັງເກົ່າ, ເຂດອ້ອມແອ້ມຂອງຣາຊະວັງເກົ່າ ແລະ ບາງເຂດອື່ນໆ ທີ່ຝຣັ່ງໄດ້ກຳນົດໄວ້. ສ່ວນຜັງເມືອງນັ້ນ ທິດໃຫຍ່ແມ່ນໃຫ້ຮັກສາ ປູຊະນີຍະສະຖານ, ອະນຸສອນສະຖານ ແລະ ຖະໜົນທີ່ມີແລ້ວນັ້ນໃຫ້ເປັນຕາຜ້າຂອງເມືອງ. ແຕ່ເຂດວັດຈັນ, ວັດອິນແປງ, ວັດອົງຕື້ ລົງມາຮອດວັດຊຽງຍືນ ໃຫ້ເປັນເຂດທີ່ຢູ່ອາໄສຂອງຊຸມຊົນ. ສ່ວນຖະໜົນນັ້ນໃຫ້ໄປຕາມແລວເກົ່າ ແລະ ດັດແປງໃຫ້ ກ້ວາງ ແລະ ຊື່. ລະອຽດໃຫ້ເບິ່ງແຜນທີ່ຂອງ Le Blévec[9] (ແຜນທີ່ເບີ 1 ໜ້າ 55) ແລະ Lajonquière (ແຜນທີ່ເບີ 2 ໜ້າ 56) ທີ່ຕິດຢູ່ເບື້ອງຫຼັງຂອງປຶ້ມຫົວນີ້.

■ **ການປຸກສ້າງຖາວອນ:**

ໃນເມື່ອຊ່າງມາຈາກຫວຽດນາມຫຼາຍແລ້ວ, ການກໍ່ສ້າງແບບຖາວອນກໍ່ເລີ່ມຂຶ້ນເຊັ່ນ:

- ຫໍານຽບຜູ້ສໍາເລັດຣາຊະການຝຣັ່ງ 1 ຫຼັງ ແບບຖາວອນ ຊັ້ນດຽວໃສ່ຫວ່າງກາງເຮືອນໂຕ U, (Hotel de la Résidence Supérieure ຕໍ່ມາຮຽກວ່າຫ້ອງຈັດງານ Salle des Fêtes).
- ທີ່ພັກຂອງຜູ້ສໍາເລັດຣາຊະການຝຣັ່ງ1 ຫຼັງ (Maison de résident supérieur) ຫຼັງຫໍພະແກ້ວ.
- ຫ້ອງການນາຍພາສາ ແລະ ສະໝຽນ ທັງໝົດເຫິງນີ້ແມ່ນປຸກໃສ່ໃນຣາຊະວັງເກົ່າ (ຫໍຄໍາດຽວນີ້).
- ຫ້ອງການ ກວດກາການເງິນ1 ຫຼັງ (Bureau de contrôle financier) ຕໍ່ໜ້າຫ້ອງການປທທເກົ່າ.
- ໂຮງໝໍມະໂຫສົດ 1 ຫຼັງ (Infirmerie).
- ຄ້າຍຕໍາຫຼວດຍາມ ແລະ ຄຸກ (Gardes Indigènes et prison) ໃສ່ສະຖານທີ່ຂອງມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ.
- ຄັງຫຼວງ (Trésor) ໃສ່ຕອນດິນລະຫວ່າງໂຮງແຮມລ້ານຊ້າງ ແລະ ຫໍຄໍາ (ດຽວນີ້ພັງໝົດ ແລ້ວ).
- ຫ້ອງວ່າການຂອງເຈົ້າແຂວງວຽງຈັນຄົນຝຣັ່ງ (Commissariat) (ດຽວນີ້ແມ່ນຫໍພິພິດຕະພັນປະຫວັດສາດ ແຫ່ງຊາດ).
- ຫ້ອງການໄປສະນີໃຕ້ປາກປ່າສັກ. ( PTT) ດຽວນີ້ຍັງເຫັນຢູ່.
- ໂຮງຮຽນວິຊາຊີບ ແລະ ຫໍພັກ (Ecole professionnelle) ແມ່ນໂຮງພິມກະຊວງສຶກສາດຽວນີ້.
- .ສາງມ້ຽນເຄື່ອງຢູ່ທ່າເຮືອປາກປ່າສັກ ແລະ ຄ້າຍທະຫານເຮືອ(ໂຮງຮຽນການຊ່າງດຽວນີ້).

ໃນແຜນທີ່ຂອງ Kliéber 1905, ສ່ວນຫຼາຍຈະເປັນເຮືອນຊົ່ວຄາວ ມີຈໍານວນໜ້ອຍທີ່ເປັນເຮືອນຖາວອນ. ຕາມທ່ານ ເຖູແບກ ບັນທຶກໄວ້ວ່າ: ໃນໄລຍະນີ້ມີເຮືອນຊົ່ວຄາວ ເສົາໄມ້ມຸງຫຍ້າເປັນສ່ວນຫຼາຍ, ເຮືອນໄມ້ ຝາ ຕົອກຊີ (ຝາປະທາຍ) , ພື້ນແປ້ນ, ມຸງຫຍ້າ ຈໍານວນໜຶ່ງ, ເຮືອນກໍ່ ມຸງຫຍ້າ ຫຼື ດິນຂໍ ມີຈໍານວນໜ້ອຍ. (ເບິ່ງແຜນທີ່ No3a-3b ຂອງ Kliéber ໜ້າ 58,59; No5a ຂອງ Quillici ໜ້າ 61 ແລະ No8b ຂອງ Mariage ໜ້າ 67)

---

[9] • Le Blévec ແມ່ນນັກສໍາຫຼວດທາງນໍ້າມາໃນປີ 1895, ແຜນທີ່ຂອງເພິ່ນແມ່ນວາດພາບເມືອງວຽງຈັນຮ້າງແຕ່ພະລາຊະວັງຂຶ້ນໄປ, ຈະເຫັນຮ່ອງຮອຍຂອງວັດ, ພະລາຊະວັງ, ກໍາແພງຊັ້ນໃນ, ຖະໜົນ ແລະ ເຮືອນຊານຈໍານວນນ້ອຍໜຶ່ງແບບຊົ່ວຄາວຂອງປະຊາຊົນ.

• Lajonquière ມາໃນປີ 1900 ໄດ້ວາດພາບຖະໜົນຫົນທາງເກົ່າໃນສະໄໝວຽງຈັນເປັນນະຄອນຫຼວງຂອງອານາຈັກລາວລ້ານຊ້າງ.

• Kliéber ມາໃນປີ 1905 ໄດ້ແຕ້ມລະອຽດຕື່ມ ອາດແມ່ນແຜນຜັງຊີ້ນໍາການກໍ່ສ້າງເທສະບານ, ທັງລະບຸເຂດຂອງອານານິຄົມ, ເຂດຂອງຊຸມຊົນ, ຖະໜົນ, ທັງຈໍາແນກປະເພດເຮືອນອີກ (ແຜນທີ່ເບີ 3 ໜ້າ 57).



ຫໍານຸບຂອງຜູ້ສໍາເລັດຣາຊະການຝຣັ່ງປະຈໍາລາວ (ສ້າງໃນປີ 1901), ດຽວນີ້ໄດ້ມ້າງຖິ້ມແລ້ວມາສ້າງ
ຫໍຄໍາຂຶ້ນແທນໃນປີ1974

Hotel de la résidence superieure construit en 1901 (appelé salle de fêtes après)



ເຮືອນພັກຂອງຜູ້ສໍາເລັດຣາຊະການຝຣັ່ງປະຈໍາລາວ (Maison de résident superieur),
ສ້າງຂຶ້ນລະຫວ່າງປີ 1908-10

■ **ຖະໜົນຫົນທາງ**

ຫຼັງຈາກເປັນເມືອງຮ້າງມາກ່ວາ 60 ປີ ແລ້ວ, ກົກໄມ້ເຄືອເຂົາໄດ້ເກີດຂຶ້ນທຸກແຫ່ງ, ຈຶ່ງໄດ້ເກນແຮງງານປະຊາຊົນມາບຸກເບີກໃຫ້ແປນ, ແລ້ວກໍ່ຕັດທາງຄືນໃຫ້ມັນຊື່ ແລະ ເປີດກ້ວາງອອກ. ເສັ້ນທາງບາງຕອນກໍ່ໄດ້ເຂົ້າໄປຍຶດເອົາດິນຂອງວັດໄປ. ເວົ້າລວມແລ້ວຖະໜົນສາຍຕັ້ງ 3 ເສັ້ນ ໄດ້ບູລະນະຄືນ ສ່ວນຖະໜົນຮ່ອມທີ່ເປັນທາງຊອຍນັ້ນ ກໍ່ຄ່ອຍໆດັດແປງໄປນຳ, ເພາະເວລານີ້ ຝຣັ່ງ ກໍ່ບໍ່ມີງົບປະມານຫຼາຍພໍປານໃດ, ສ່ວນຫຼາຍເຂົາຈະສຸມໃສ່ປຸກເຮືອນ ແລະ ຫ້ອງການຂອງເຂົາເປັນຕົ້ນຕໍ.

■ **ປະຊາກອນ**

ເມື່ອໝັ້ນໃຈວ່າຈະບໍ່ມີສົງຄາມອີກແລ້ວ, ປະຊາຊົນທາງນອກ ກໍ່ທະຍອຍເຂົ້າມາປຸກເຮືອນແບບຊົ່ວຄາວໃນຕົວເມືອງ, ອ້ອມວັດອິນແປງ, ວັດອົງຕື້, ວັດຈັນ, ວັດຫາຍໂສກ ແລະ ຕາມແຄມຂອງ, ຄົນລາວພວກນີ້ມາຈາກ:

– ພວກທີ່ສະຫຍາມກວາດຕ້ອນໄປ ແລ້ວລັກກັບຕ່າວຄືນມາ, ເປັນຕົ້ນແມ່ນຊາວວຽງຈັນເກົ່າ.
– ໄທພວນ ທີ່ໜີເສິກຫໍ້ໃນປີ 1873 ໄປໄທ ແລ້ວກັບຕ່າວຄືນມາ.
– ຄົນລາວລ້ອງງື່ມເຂົ້າມາເຊັ່ນ:ຕະກຸນ ອິນທະວົງ,ສຸວັນນະວົງ,ຊະນະນິກອນ,ພົມມະວົງສາ..

ລວມຈຳນວນພົນໃນຕົວເມືອງເວລານີ້ມີປະມານ 3,000 ຄົນ [10] ຊຶ່ງສ່ວນມາກຈະແມ່ນໄທພວນ. ສ່ວນຄົນຕ່າງປະເທດນັ້ນ (ຈີນ, ຫວຽດນາມ, ຝຣັ່ງ) ມີປະມານ 1/3 ຂອງຈຳນວນທັງໝົດ. ໃນຈຳນວນຄົນຕ່າງປະເທດນັ້ນ ຄົນຫວຽດນາມແມ່ນ ກວມຈຳນວນຫຼາຍກວ່າໝູ່, ບໍ່ນັບທະຫານດຳ, ທະຫານແດງ, ທະຫານສື້ວ ຊຶ່ງເປັນຄົນຫວຽດນາມ ທີ່ຝຣັ່ງນຳເຂົ້າມາປ້ອງກັນເຂົາເອງເປັນຈຳນວນຫຼາຍຮ້ອຍຄົນໃນວຽງຈັນ.(ສ່ວນຢູ່ທົ່ວປະເທດນັ້ນ ແມ່ນຫຼາຍພັນຄົນ).

ຄົນຫວຽດນາມ ຊຶ່ງມີຈຳນວນພັນຄົນໄດ້ປຸກເຮືອນຊົ້ນດຽວ ໃນຄຸ້ມເຈົ້າອະນຸ, ບ້ານສີເມືອງ (ເມື່ອກ່ອນຂຶ້ນກັບບ້ານເພຍວັດ) ແລະ ອ້ອມເຮືອນຝຣັ່ງຢູ່.

■ **ການປະຕິສັງຂອນ**

ເມື່ອໄດ້ເຂົ້າມາຢູ່ເມືອງວຽງຈັນແລ້ວ, ປະຊາຊົນລາວກໍ່ເລີ່ມສ້ອມແປງ, ປະຕິສັງຂອນວັດວາ ອາຮາມພ້ອມໆກັບພະສົງ ດ້ວຍສັດທາ ແລະ ເຫື່ອແຮງຂອງຕົນເອງ. ເຖິງວ່າບໍ່ໄດ້ມຸງດິນຂໍກໍ່ຕາມ ສິມ ແລະ ກຸຕິຕ່າງໆແມ່ນມຸງດ້ວຍຫຍ້າໄພໄປສາກ່ອນ. ວັດທີ່ໄດ້ປະຕິສັງຂອນໃນໄລຍະນີ້ມີຄື:

1. ວັດສີສະເກດ (ສ້ອມແປງຄືນ)
2. ວັດອິນແປງ (ປະຕິສັງຂອນຄືນ)
3. ວັດຈັນ (ປະຕິສັງຂອນຄືນ)
4. ວັດຊຽງຍືນ (ປະຕິສັງຂອນຄືນ) ແລະ ວັດອື່ນໆ ໃນເຂດນອກ.

ຝຣັ່ງບໍ່ໄດ້ກີດຂວາງການປະຕິສັງຂອນວັດວາອາຮາມແຕ່ຢ່າງໃດ, ພວກເຂົາຖືວ່າ ປະຕິບັດຕາມແນວຄວາມຄິດຂອງ ທ່ານ ປາວີ ທີ່ວ່າ: “ປົກຄອງລາວ ດ້ວຍການຍຶດຄອງໝາກຫົວໃຈຂອງຄົນລາວ”. ສະນັ້ນ

---

[10] ແມ່ນຕົວເລກສຳຫຼວດຂອງ SDAU ແລະ ຂອງທ່ານໂມແຮງ Morin 1907

ລັດຖະບານຝຣັ່ງຈຶ່ງອະນຸຍາດໃຫ້ ທ່ານ ໂມແຣງ (Morin) ເຈົ້າແຂວງຝຣັ່ງ ປະຕິສັງຂອນພະທາດຫຼວງ ທີ່ຖືກພວກຫໍ້ທຳລາຍໃນປີ 1873 ນັ້ນຄືນ . ພະທາດຫຼວງໄດ້ສ້າງຄືນສຳເລັດໃນປີ 1900 ພ້ອມດ້ວຍສັດທາ ຂອງຊາວວຽງຈັນ, ແຕ່ຮູບທາດບໍ່ຄືພະທາດຫຼວງເກົ່າທີ່ພະເຈົ້າໄຊເຊດຖາສ້າງຂຶ້ນມາ ຈຶ່ງສັ່ງໃຫ້ທັບຖິ້ມໃນປີ 1910 ເພາະປະຊາຊົນບໍ່ມັກ.

ການຄ້າຂາຍເລີ່ມມີຂຶ້ນ, ໃນເຂດແຄມຂອງ ແຕ່ວັດຈັນເຖິງວັດຊຽງຍືນ ໄດ້ກາຍເປັນຕະຫຼາດ ເຊົ້າຂອງ ປະຊາຊົນ; ຊາວລາວແຖບວັດໄຕ, ສີໄຄ, ເກົ້າລ້ຽວໄດ້ລ່ອງເຮືອລົງມາຂາຍເຂົ້າ, ຊີ້ນປາອາຫານ,ຜັກມີຕ່າງໆ ແລະ ຊາວຄ້າຂາຍຄົນຈີນກໍ່ໄດ້ມາປຸກເຮືອນລຽບໄປຕາມຖະໜົນສາຍນີ້ແລ້ວ. ໃນເວລານັ້ນ ວຽງຈັນກໍ່ໄດ້ ມີການພົວພັນຄ້າຂາຍກັບສະຫຍາມ ໂດຍຜ່ານບ້ານພັນພ້າວ ຊື່ກັບ ທ່າເຮືອຫຼັກ 4. ສະຖານທີ່ແຫ່ງນີ້ ຄົງເປັນທ່າເຮືອມາກ່ອນແລ້ວ.



**ພະທາດຫຼວງໄດ້ສ້າງຄືນໃໝ່ ໃນປີ 1900 ໂດຍທ່ານ ມໍແຣງ (Morin) ພ້ອມດ້ວຍສັດທາຂອງຊາວ ວຽງຈັນ ແຕ່ຮູບບໍ່ເໝືອນເດີມ ຈຶ່ງຖືກທັບມ້າງຖິ້ມໃນຊຸມປີຕໍ່ມາ**

**■ ການສຶກສາວັດທະນະທຳ**

ໂຮງຮຽນປະຖົມຫຼາຍແຫ່ງໄດ້ກໍ່ສ້າງຂຶ້ນ: ໃນເຂດໂຮງໝໍມະໂຫສົດ 1 ຫຼັງ, ໂຮງຮຽນຕາໂຟແຣງ Tafforin (ສຳລັບລູກຫຼານຂຸນນາງ), ໂຮງຮຽນວັດຕ່າງໆກໍ່ໄດ້ສ້າງຂຶ້ນ. ໃນເວລານັ້ນ,ເຖິງແມ່ນວ່າ ເປັນທົວເມືອງຂຶ້ນຂອງຝຣັ່ງກໍ່ຕາມ ແຕ່ພວກເຂົາກໍ່ບໍ່ໄດ້ຫຍຸ້ງກ່ຽວຫຍັງກັບ ຮີດຄອງປະເພນີຂອງລາວ, ໃນວັດຕ່າງໆ ໄດ້ມີການຮ່ຳຮຽນສຶກສາ, ສິລະປະ ວັດທະນະທຳຂອງລາວ, ຄົນລາວໄດ້ເຮັດບຸນສິນກິນທານ ຕາມປະເພນີ, ທຳການຜະລິດກະສິກຳ, ຫັດຖະກຳ, ລ້ຽງສັດ, ປິ່ນປົວພະຍາດດ້ວຍຢາພື້ນເມືອງ ແລະ ອື່ນໆ.

ມັນເປັນການຟື້ນຊີວິດໃໝ່ໃຫ້ແກ່ນະຄອນວຽງຈັນມາອີກຄັ້ງໜຶ່ງ[11].

■ **ການບໍລິໂພກ:** ໃນໄລຍະນີ້ ຝຣັ່ງໄດ້ນຳໃຊ້ນ້ຳສ້າງເປັນນ້ຳສະອາດ ແລະ ໄຕ້ຫຼອດໄຟເປັນແສງສະຫວ່າງ, ສ່ວນ ປະຊາຊົນລາວ ແມ່ນໃຊ້ນ້ຳຂອງ, ນ້ຳສ້າງ ແລະ ໄຕ້ກະບອງ. ການຂົນສົ່ງ ແມ່ນໃຊ້ເຮືອແພໃນທາງນ້ຳ ແລະ ງົວ, ມ້າ, ຊ້າງ, ກວຽນ ເປັນ ພາຫະນະຂົນສົ່ງທາງບົກ.

## 4. ການພັດທະນານະຄອນຫຼວງວຽງຈັນ (ໄລຍະທີ 3: 1914-1940)

ເຖິງແມ່ນວ່າໃນໄລຍະນີ້ມີສົງຄາມໂລກຄັ້ງທີ 1 (1914-1918) ເກີດຂຶ້ນກໍ່ຕາມ, ແຕ່ການສ້າງສາພັດທະນາອິນດູຈີນ ແມ່ນມາຈາກຄັງອິນດູຈີນເອງ ຮຽກວ່າ ຄັງຫຼວງ (Trésor Général de l'Indochine) ຊຶ່ງມີແຕ່ຜູ້ວ່າຣາຊະການສູງສຸດຂອງຝຣັ່ງ ທີ່ ຮ່າໂນຍ ເປັນຜູ້ຕັດສິນຜູ້ດຽວ, ຄັງຫຼວງນີ້ໄດ້ເກັບອາກອນທາງອ້ອມ (Impots Indirects) ຈາກປະຊາຊົນທົ່ວອິນດູຈີນ. ສ່ວນອີກຄັງໜຶ່ງ ທີ່ປະຈຳແຕ່ລະແຄວ້ນນັ້ນຮຽກວ່າ ຄັງທ້ອງຖິ່ນ (Trésor Local) ຊຶ່ງເກັບເອົາອາກອນໂດຍກົງ (Impots directs) ນຳປະຊາຊົນ. ສະນັ້ນ ການສ້າງສາອິນດູຈີນ ຈຶ່ງບໍ່ຄ່ອຍໄດ້ໃຊ້ງົບປະມານຂອງລັດຖະບານຝຣັ່ງພໍເທົ່າໃດ, ຊ້ຳບໍ່ໜຳຝຣັ່ງຍັງນຳເອົາຊັບສິນ ແລະ ລາຍໄດ້ຂອງອິນດູຈີນໄປທຳສົງຄາມກັບເຢຍລະມັນອີກ[12]. ເພື່ອສ້າງລາຍຮັບໃຫ້ຝຣັ່ງຫຼາຍຂຶ້ນ ທ່ານ ໂປນ ດູແມ ໄດ້ສັ່ງຜູກຂາດການຄ້າ: ຢາຝິ່ນ, ຄັ່ງ, ຢານ, ໝາກແໜ່ງ, ໜັງ, ກະດູກສັດ, ງາຊ້າງ, ນໍແຮດ, ໄມ້ສັກ,ໄມ້ຂະຍຸງ, ບໍ່ແຮ່ຢູ່ລາວ ເພື່ອສົ່ງອອກໄປຂາຍຢູ່ຕ່າງປະເທດ ຊຶ່ງໃນປີ 1901 ໄດ້ມີເງິນເຂົ້າຄັງຫຼວງບໍ່ຕ່ຳກ່ວາ 200 ລ້ານກີບ Piastre (ເງິນທົ່ວໜາມ) ໃນນັ້ນ 118 ລ້ານ ກີບແມ່ນ ໄດ້ ມາຈາກການ ຄ້າຝິ່ນ[13]. (ລາຍໄດ້ຈາກການຄ້າຝິ່ນແຕ່ລະປີແມ່ນເພີ້ມຂຶ້ນ 20-30%).

ເຖິງວ່າຈະມີພາລະກິດໜັກ ໃນສົງຄາມໂລກຄັ້ງ ທີ່1 ກໍ່ຕາມ, ແຕ່ຝຣັ່ງກໍ່ບໍ່ຍອມ ປະລະອານານິຄົມຂອງຕົນເດັດຂາດ.

ການພັດທະນາອິນດູຈີນ ຍັງສືບຕໍ່ດ້ວຍງົບປະມານຂອງອິນດູຈີນເອງ, ແຕ່ເຂົາຈະສຸມໃສ່ພັດທະນາຫວຽດນາມ ແລະ ກຳພູຊາ ຫຼາຍກວ່າ ເພາະປະເທດເຫຼົ່ານີ້ມີທາງອອກສູ່ທະເລ, ການຂຸດຄົ້ນເອົາຊັບສິນກໍ່ງ່າຍ, ດ້ວຍເຫດນີ້ເອງ ເຂົາຈຶ່ງຕັດແບ່ງແຜ່ນດິນພາກເໜືອຂອງລາວໄປໃຫ້ ຕົງແກັ໋ງ ແລະ ດິນແດນພາກໃຕ້ຂອງ ແຂວງຈຳປາສັກ ແລະ ອັດຕະປື ໄປໃຫ້ ຂະເໝນ ແລະ ອານາມ[14].

ໃນໄລຍະນີ້ໄດ້ມີ **4 ເຫດການເກີດຂຶ້ນຄື:**

- 1911 ວຽງຈັນໄດ້ມີໂລກອະຫິວາລະບາດຂຶ້ນ ເຮັດໃຫ້ມີຄົນຕາຍຮ້ອຍກວ່າຄົນ. ຕຳຫຼວດເປັນຜູ້ສືບສວນເບິ່ງ ຖ້າເຫັນຜູ້ໃດຖອກທ້ອງ ເຂົາກໍ່ສັ່ງໃຫ້ນັກໂທດມາຫາມເອົາໄປໂຮງໝໍ ແລ້ວເອົານ້ຳຢາ ເກຼຊິນ[15] ທົດໃສ່

---

[11] ການຄົ້ນຄ້ວາໄລຍະນີ້ ແມ່ນອີງໃສ່ແຜນທີ່ຂອງ Le Blévec, Lajonquière,**Kliéber** , ຂໍ້ມູນຈາກEFEO ແລະ ບົດຂຽນຂອງ Sophie Clément Charpentier "ການເລີ້ມຕົ້ນຂອງວຽງຈັນ ເມືອງເອກແຫ່ງອານານິຄົມ" ປີ 2008.

[12] ມີຄົນຫວຽດນາມ ທີ່ຖືກເກນໄປເຮັດສົງຄາມກັບເຢຍລະມັນໃນຄາວນັ້ນ ຍັງຕົກຄ້າງຢູ່ຝຣັ່ງຫຼາຍໝື່ນຄົນ, ສ່ວນຫຼາຍຈະຢູ່ມາກໄຊ.

[13] ໃນສະໄໝນັ້ນ1 ກີບ ອິນດູຈີນເທົ່າກັບ 2.40F ຝຣັ່ງເສດ, ຂໍ້ມູນມາຈາກປຶ້ມປະຫັວດສາດລາວ ຂອງດຣ.ສຸເນດ ໂພທິສານ ໜ້າ 540-545

[14] ຝຣັ່ງໄດ້ອ້າງວ່າ ເພື່ອຄວາມສະດວກໃນການປົກຄອງອິນດູຈີນ ຈຶ່ງໄດ້ໂອນຫຼາຍແຂວງຂອງລາວໃນພາກເໜືອໄປໃຫ້ຕົງແກງ (ຫວຽດນາມເໜືອ)ເຊັ່ນ: ແຄ້ວນ12 ຈຸໄທ: ເມືອງໄລ່(ໄລ່ເຈົ່າ), ເມືອງລາ(ເຊີນລາ), ເມືອງແຖງ(ດຽນບຽນຟູ) , ສ່ວນໜຶ່ງ ຂອງ ແຂວງຫົວພັນທັງ 6, ສ່ວນໜຶ່ງຂອງແຂວງ ຊຽງຂວາງ: ສິບໂມ້, ເມືອງແສນ, ກະຢາ, ກອນກວງ; ໂອນແຂວງຢາລາຍ ກົງຕຸມ ໄປຂຶ້ນກັບອານາມ(ຫວຽດນາມກາງ); ໂອນແຂວງຊຽງແຕງ ແລະ ດັກລັກ ໄປໃຫ້ຂະເໝນ ໃນປີ 1904 ແລະ 1905.

[15] ນ້ຳຢາ ເກຼຊິນ( crésyl ) ແມ່ນນ້ຳຢາ ເຄມີ ໃຊ້ສຳຫຼັບ ລ້າງ ພື້ນເຮືອນ ແລະ ຫ້ອງນ້ຳ ເພື່ອອະເຊື້ອໂລກ.

ເພາະບໍ່ມີຢາປິ່ນປົວ ເມື່ອຕາຍແລ້ວ ເຂົາກໍ່ສັ່ງໃຫ້ນັກໂທດເອົາໄປຝັງທີ່ຫາດດອນຈັນ ມີບາງຄົນບໍ່ທັນຕາຍ ເທື່ອ ກໍ່ຮ້ອງໄຫ້ຢູ່ຢ່າງສິ້ນເພດເວດທະນາ. ສ່ວນຄອບຄົວຄົນເຈັບຜູ້ຢູ່ບ້ານກໍ່ບໍ່ມີສິດໄປຢ້ຽມຢາມ ຊ້ຳບໍ່ໜຳ ຍັງຕ້ອງໄດ້ອາບນ້ຳຢາ ເງຶຊິນ ນັ້ນອີກ. (ຖອດຈາກຄວາມຊົງຈຳຂອງເຖົ້າແກ່ບ້ານເພຍວັດຜູ້ໜຶ່ງຊຶ່ງລ່ວງລັບໄປແລ້ວ)

- 1920 ປະຊາຊົນເມືອງຫາດຊາຍຟອງ ໃຕ້ການນຳພາຂອງນາຍຄູຄຳ ໄດ້ລຸກຂຶ້ນປະທ້ວງຝຣັ່ງບໍ່ຍອມໄປ ເປັນຄູລີ ແລະ ເສຍພາສີໃຫ້ເຂົາ, ຈຶ່ງຖືກທະຫານຊຽວຍິງຕາຍ ແລະ ບາດເຈັບຫຼາຍສິບຄົນ, ຈຶ່ງເອົາວັນທີ 07/10/1920 ນີ້ ເປັນວັນຄູແຫ່ງຊາດ.
- 1924 ວຽງຈັນ ຖືກນ້ຳຂອງຖ້ວມຊ່ຳກັບປີ 1966 ຜ່ານມາ, ປະຊາຊົນມີການເສຍຫາຍຫຼາຍ ທາງດ້ານຊັບ ສິນເງິນຄຳ ແລະ ຊີວິດ.
- ວັນທີ 6-7/9/1934 ໄດ້ມີເຫດການສຳຄັນທາງການເມືອງເກີດຂຶ້ນໃນວຽງຈັນ ນັ້ນຄື ກອງປະຊຸມ ພັກ ກອມມູນິດອິນດູຈີນ ແຄ້ວນລາວຄັ້ງທຳອິດ ທີ່ດອນ ສ່ຽງຊູ້ ໂດຍແມ່ນ ສະຫາຍ ຄຳແສນ ເປັນປະທານ.

## *4.1. ການຈັດສັນເຂດ*

ຕາມລະບຽບການຂອງຝຣັ່ງ ກ່ອນຈະສ້າງເທດສະບານໜຶ່ງ ຕ້ອງມີເອກະສານຕ່າງໆເຊັ່ນ: ຜັງຂັ້ນນຳ ລວມ, ແຜນທີ່ລະອຽດແຕ່ລະດ້ານ, ແຜນແຕ້ມສະຖາປານິກ, ການຄິດໄລ່ດ້ານເຕັກນິກ, ການຄິດໄລ່ ງົບປະມານ, ມີລາຍເຊັນຈາກເຈົ້າແຂວງຝຣັ່ງ ແລະ ຜູ້ສຳເລັດຣາຊະການຝຣັ່ງປະຈຳລາວແລ້ວ ມີດຳລັດ ຕົກລົງຂອງຜູ້ວ່າຣາຊະການສູງສຸດຝຣັ່ງປະຈຳອິນດູຈີນ ຈຶ່ງຖືວ່າໃຊ້ໄດ້. ແຕ່ເອກະສານເຫຼົ່ານີ້ ຄົງຈະຖືກເສຍ ຫາຍໄປໃນປາງສົງຄາມໂລກຄັ້ງທີ 2 ແລະ ເປື່ອຍເຍື່ອຍໄປຕາມການເວລາ ຈຶ່ງບໍ່ຄົ້ນພົບໄດ້. ແນວໃດກໍ່ຕາມ, ຍັງມີບາງແຜນທີ່, ບາງປຶ້ມຂຽນຂອງຄົນຝຣັ່ງ ແລະ ສາກົນ ທີ່ພໍເປັນຂໍ້ມູນໃຫ້ໄດ້ວິເຄາະ ແລະ ຂຽນອອກມາ, ຄິດວ່າ ຄົງຈະໃກ້ຄວາມຈິງໄດ້ຫຼາຍ.

ຈາກແຜນທີ່ຂອງ Kliéber 1905 (ເບິ່3,3aແລະ3b ໜ້າ 57, 58 ແລະ 59) ມາຫາແຜນທີ່ຂອງ Quilici1912(ເບິ່5aໜ້າ61)ໄດ້ເຫັນຈະແຈ້ງຕື່ມການຈັດສັນທີ່ດິນຂອງອຳນາດອານານິຄົມໃນເມືອງວຽງຈັນ:

- **ເຂດຂອງຣາຊະການ**: ແຕ່ຖະໜົນ ປາງຄຳ ເຖິງ ຖະໜົນ ສັກກະລິນ, ແຕ່ແຄມຂອງ ເຖິງ ຄູວຽງ ເປັນເຂດຂອງຣາຊະການຝຣັ່ງໝົດ. ນອກຈາກນີ້ ທາງຣາຊະການຝຣັ່ງ ຍັງຈັບຈ່ອງເຂດອື່ນໆ ອີກ ເຊັ່ນ: ຄຸ້ມທະນາຄານສູນກາງ, ຫໍວັດທະນະທຳ, ຫໍພິພິດຕະພັນປະຫວັດສາດແຫ່ງຊາດ ຈົນຮອດຄູວຽງ, ຄຸ້ມນາໄຮ່ດຽວ, ເຂດຕາເວັນຕົກ ນ້ຳປ່າສັກ, ລະອຽດແມ່ນໃຫ້ເບິ່ງຕາມແຜນທີ່ (ເບິ 5a ຂອງ Quilici ປີ1912 ໜ້າ 61 ), ຈຶ່ງເຫັນວ່າເຂດອານານິຄົມນັບປີ ນັບຂະຫຍາຍອອກ ໄປ.
- **ເຂດທີ່ຢູ່ຂອງຄົນລາວ**: ແມ່ນຄຸ້ມວັດຈັນ, ວັດອິນແປງ, ວັດຫາຍໂສກ, ວັດມີໄຊ, ວັດຊຽງຍືນ. ສ່ວນບ້ານເພຍວັດ ແລະ ຫາດຂາວນັ້ນ ຍັງເປັນບ້ານ ສີທ່າງໆ ຢູ່ ລະຫວ່າງປີ 1906-1920.
- **ເຂດການຄ້າ: ແຕ່ປີ 1905-30** ຕາມແຄມຂອງຖະໜົນເຈົ້າຟ້າງຸ່ມມີຕຶກຂອງພໍ່ຄ້າຄົນຈີນຫຼາຍ. ແຕ່ປີ 1925 ມາ ຄົນຈີນໄດ້ເລີ້ມມາປຸກຫ້ອງແຖວຢູ່ຖະໜົນເຂດຖາທິລາດແລ້ວ.
- **ເຂດຄົນຫວຽດນາມ**: ແມ່ນກຳນົດເອົາຄຸ້ມເຈົ້າອະນຸ ຊຶ່ງໄດ້ຕັດທາງເປັນຕາຜ້າໄວ້ແລ້ວ ແລະ ໄດ້ໃສ່ຊື່ຖະໜົນເຫຼົ່ານັ້ນວ່າ: ຮ່າໂນຍ, ຮາຍຟອງ, ເວ້, ໄຊ່ງ່ອນ, ພະນົມເປັນ ແລະ ໄດ້ປຸກໂຮງຮຽນໃຫ້ເດັກນ້ອຍຫວຽດນາມອີກ 1 ຫຼັງ. ສ່ວນຊາວຫວຽດນາມ ທີ່ຖືສາສະໜາ

ກາໂຕລິກ ກໍ່ໄດ້ມາປຸກເຮືອນຢູ່ຄຸ້ມສີເມືອງຕົ້ນ(ເພຍວັດ)ອ້ອມໂບດກາໂຕລິກ ແລະ ປຸກກະແຈກກະຈາຍອ້ອມແອ້ມເຮືອນຝຣັ່ງຢູ່.

ເມື່ອເບິ່ງຕາມ ແຜນທີ່ເບີ 6 (1917-29) ໜ້າ 63 ແລ້ວ, ໃນເມືອງຍັງເຫັນມີຫຼາຍເຂດຊຽວຢູ່, ໝາຍຄວາມວ່າ ຍັງບໍ່ທັນມີຄົນມາຢູ່ຫຼາຍ.(ຕ້ອງຂໍໂທດທີ່ບໍ່ສາມາດຈັດແຜນທີ່ຕ່າງໆໄປຕາມເນື້ອໃນໄດ້ ເພາະເຫດຜົນດ້ານການພິມ)

### *4.2. ການກໍ່ສ້າງອາຄານທາງຣາຊະການ:*

ຕາມການຄົ້ນຄ້ວາຂອງ ດຣ. ບຸນເຫຼື່ອມ ສີສຸລາດ ມາຮອດໄລຍະນີ້ ໄດ້ມີການກໍ່ສ້າງອາຄານຂຶ້ນປະມານ 53 ຫຼັງ[16] ນອກຈາກຈຳນວນທີ່ໄດ້ຂຽນໄວ້ຢູ່ກ່ອນນີ້ແລ້ວເຊັ່ນ:

- ຫ້ອງການຕຳຫຼວດ (gendarmerie) ຊຶ່ງແມ່ນ ຫໍສະໝຸດແຫ່ງຊາດດຽວນີ້,
- ຫ້ອງການໄປສະນີໃໝ່ ປທທ (Bureau PTT) ແມ່ນ ຫ້ອງການ ລາວໂທລະຄົມ ຂ້າງກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ດຽວນີ້,
- ຕຶກພະຍາບານໃຫ້ໂຮງໝໍມະໂຫສົດ (Hopital Mahosot) ຕື່ມອີກ 2 ຫາ 3 ຫຼັງ,
- ພະແນກໂຍທາ (Service de Travaux Publics) ແມ່ນສະຖານທູດຝຣັ່ງ ແລະ ພະແນກໂຍທາດຽວນີ້,
- ຕະຫຼາດເຊົ້າ 2 ຫຼັງ (Marché du matin) ຢູ່ບ່ອນນ້ຳພຸດຽວນີ້ ໄດ້ມ້າງຖິ້ມແຕ່ປີ1961,
- ສານຝຣັ່ງ ແລະ ຫົວໜ້າສານ (Tribunal) ຢູ່ຕໍ່ໜ້າ ບໍລິສັດໄຟຟ້າລາວດຽວນີ້ ຍັງມີຢູ່,
- ບັງກາໂລ (Bungalow) ໂຮງແຮມ ເຂດຖາປາລາສ ດຽວນີ້,
- ທະນາຄານອິນດູຈີນ (Banque de l'Indochine) ຢູ່ເຂດທູດອາເມລິກາ ດຽວນີ້,
- ພະແນກກະສິກຳ (Service de l'Agriculture) ແມ່ນຕຶກເກົ່າລະຫວ່າງທາດດຳ ແລະ ກົມປ່າໄມ້ດຽວນີ້,
- ຫ້ອງການພາສີອາກອນ (Bureau de Douane & Régie) ເປັນຕຶກ 2 ຊັ້ນ ໃຕ້ ປາກປ່າສັກ ດຽວນີ້ມ້າງຖິ້ມແລ້ວ,
- ພະແນກພາສີອາກອນ (Service D&R) ກ່ອນປີ 1914 ແມ່ນຕັ້ງຢູ່ໃຕ້ວັດສີສະເກດ, ພາຍຫຼັງມາ ໄດ້ຍ້າຍມາຢູ່ຕຶກ ໄທພານິດ ດຽວນີ້,
- ເຮືອນພັກຂອງຫົວໜ້າພະແນກພາສີອາກອນ ແມ່ນຕຶກຂ້າງທະນາຄານ ໄທພານິດ ດຽວນີ້,
- ຕຶກຜູ້ກວດການ ການເມືອງ (Inspecteur des affaires politiques) ແມ່ນຕຶກຕໍ່ໜ້າອົງການໄປສະນີ ແລະໂທລະຄົມ,
- ຫໍພັກຂອງນັກຮຽນວິຊາຊີບປຸກຂຶ້ນປີ 1910-1920 (ຫຼັງຈາກນັ້ນແມ່ນກອງເສນາທິການທະຫານຝຣັ່ງ) ແມ່ນສະຖານທີ່ອົງການໄປສະນີແລະໂທລະຄົມ ດຽວນີ້, ແຕ່ຕຶກດັ່ງກ່າວ ຖືກພັງໝົດໃນປີ 1960 . ປີ 1936 ໂຮງຮຽນ ແລະ ຫໍພັກໄດ້ຍ້າຍໄປຢູ່ ເໜືອ ປາກປ່າສັກ ແມ່ນໂຮງຮຽນການຊ່າງດຽວນີ້,

---

[16] ອາຄານ 53 ຫຼັງມາຈາກງົບປະມານຄັງຫຼວງ ແລະ ມີອີກ 130 ຫຼັງ ມາຈາກງົບປະມານທ້ອງຖິ່ນ ລວມເປັນເງິນ 90 ລ້ານຝຣັ່ງ (37 ລ້ານກີບອິນດູຈີນ) ປຶ້ມ ດຣ.ບຸນເຫຼື່ອມ ສີສຸລາດ ໜ້າ 51.

- ໂຮງພິມ(Imprimerie)ແມ່ນໂຮງພິມແຫ່ງລັດດຽວນີ້,
- ຫ້ອງການເຈົ້າເມືອງວຽງຈັນ ແລະ ສານລາວ (Bureau Muong & Tribunal Lao) ແມ່ນສະຖານທີ່ ຫໍວັດທະນະທຳແຫ່ງຊາດດຽວນີ້,
- ຫ້ອງການປະກັນໄພ (Sureté générale) ມ້າງຖິ້ມແລ້ວ ມາປຸກຫ້ອງການສະຫະພັນແມ່ຍິງແທນຢູ່ຖະໜົນ ມັນທາຕຸລາດ,
- ຫ້ອງການຈົດທະບຽນ (Enregistrement) ພັງໝົດແລ້ວ, ເຂດວິທະຍຸແຫ່ງຊາດເກົ່າ,
- ໂຮງຮຽນປະຖົມ (Groupes Scolaires) ເຈົ້າອະນຸ, ສີຖານ, ອູບມຸງ, ວັດໄຕນ້ອຍ, ທາດຂາວ, ທາດຫຼວງ (ປຸກສ້າງລະຫວ່າງ 1930-43),
- ໂຮງຮຽນມູນລະປະຖົມສຶກສາ ປີ 1920-21(Ecole communale) ຕຶກໂທລະໂຄ່ງ 5 ແຍກກອງລະຄອນລຳແຫ່ງຊາດ ດຽວນີ້,
- ມັດທະຍົມ (Collège A.Pavie)[17] ຫໍພັກແພດສາດ ດຽວນີ້, ປຸກສ້າງລະຫວ່າງປີ 1920-21,
- ສະໂມສອນ ພ້ອມດ້ວຍເດີ່ນເຕັນນິດ (Cercle Sportif) ຢູ່ກຳຕາເວັນຕົກ ຂອງໂຮງແຮມລ້ານຊ້າງ ຕໍ່ໜ້າທະນາຄານການຄ້າຕ່າງປະເທດ ດຽວນີ້ມ້າງຖິ້ມແລ້ວ,
- ໂຮງຮູບເງົາ (Cinéma Julien Frères) ຢູ່ ກຳຕາເວັນຕົກຂອງ ກອງຕຳຫຼວດສັນຕິບານ ດຽວນີ້,
- ຕຶກໂຄ້ງຕໍ່ໜ້າຕະຫຼາດເຊົ້າ (Batiment en L près le Marché du matin) ດຽວນີ້ຍັງເຫັນຢູ່,
- ອ່າງນ້ຳສູງ (Château d'eau) ໃນຮາຊະວັງເກົ່າ ຍັງມີໃຫ້ເຫັນຢູ່,
- ເຄື່ອງຈັກໄຟຟ້າແລ່ນດ້ວຍຖ່ານຫີນ (Centrale éléctrique) ແມ່ນສະຖານທີ່ບໍລິສັດໄຟຟ້າລາວ ດຽວນີ້, ຕິດຕັ້ງລະບົບ ສາຍໄຟຟ້າຕາມຖະໜົນໃຫຍ່ຕ່າງໆ ດ້ວຍເສົາໄມ້ແກ່ນ,
- ວາງສາຍໂທລະສັບ ສະເພາະແຕ່ຣາຊະການອານານິຄົມເທົ່ານັ້ນ (Lignes Téléphoniques),
- ທັບມ້າງຊາກສະຫຼັກຫັກພັງຂອງວັດກາງ ແລ້ວສ້າງສວນ ປາວີ ຂຶ້ນແທນ (Jardin de A.Pavie) ແມ່ນໂຮງແຮມລ້ານຊ້າງ ດຽວນີ້,
- ເຮືອນພັກແບບຖາວອນ 2 ຊັ້ນ (Logements des fonctionnaires français) ຈຳນວນ 30 ກ່ວາຫຼັງ ໃຫ້ຄົນຝຣັ່ງ ຂັ້ນຫົວໜ້າພະແນກ, ຮອງພະແນກ ແລະ ທີ່ປຶກສາ ຕາມສອງຟາກທາງຂອງຖະໜົນລ້ານຊ້າງ, ຖະໜົນສາມແສນໄທ ແຕ່ຫໍວັດທະນະທຳລົງມາຮອດມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ, ຄຸ້ມແນວລາວສ້າງຊາດ, ຄຸ້ມໄປສະນີໂທລະຄົມ, ຄຸ້ມທາດດຳ ແລະ ຄຸ້ມສະຖານທູດອາເມລິກາ ດຽວນີ້,
- ສະໜາມກິລາແຫ່ງຊາດໃນປີ1940 (Terrain sportif),
- ເຮືອນຫຼັງໃໝ່ໃຫ້ສະເດັດເຈົ້າເພັດຊະລາດ ຢູ່ແຈກຳໃຕ້ຂອງຣາຊະວັງເກົ່າ ຖືກໄຟໄໝ້ ປີ1958 (Logement du prince Phetsarath),
- ໂຮງຮຽນປົກຄອງ (Ecole des mandarins) ສ້າງ ປີ 1923 ຢູ່ໃຕ້ວັດສີສະເກດ (ແມ່ນສະຖານທີ່ສະຖາບັນການເມືອງ ແລະ ການປົກຄອງ ດຽວນີ້, ຫຼັງເກົ່າ ແມ່ນຊັ້ນດຽວໄດ້ມ້າງຖິ້ມແລ້ວ. (ເບິ່ງແຜນທີ່ເບີ 8b ຂອງ Mariage ປີ 1930 ໜ້າ 67).

[7] ໃສ່ຊື່ Collège A.Pavie ປີ 1921 ແລ້ວປ່ຽນມາເປັນ Lycée A.Pavie ໃນປີ 1947.



ຕະຫຼາດເຊົ້າວຽງຈັນ ສ້າງລະຫວ່າງປີ 1912-14, ໄດ້ມ້າງຖິ້ມໃນປີ 1961 ແລ້ວສ້າງນໍ້າພຸຂຶ້ນແທນ

*4.3 ການກໍ່ສ້າງຖະໜົນແລະການຂົນສົ່ງ* (ເບິ່ງແຜນທີ່ເບີ 10 ໜ້າ 69).

◆ **ການສ້າງຖະໜົນ:**

ກ່ອນອື່ນຝຣັ່ງໄດ້ສ້າງຖະໜົນສາຍຫຼັກກ່ອນເຊັ່ນ:

- ປີ 1905 ໄດ້ປັບປຸງຖະໜົນແຄມຂອງ ແລ້ວສ້າງຂົວໃສ່ປາກປ່າສັກ ເປັນຂົວເອເຟນ (Eiffel) ແລ້ວໃສ່ຊື່ວ່າ Quai de Pavie ແລະ F.Garnier,
- ປີ 1907 ໄດ້ສ້າງຖະໜົນຈາກ ປະຕູວັດອິນແປງລົງໄປກໍ້າຕາເວັນອອກ ຮອດພະລາຊະວັງແລ້ວໃສ່ຊື່ວ່າ ຖະໜົນຈອມພົນ ໂຊຟ (Maréchal Joffre) ຊຶ່ງແມ່ນຖະໜົນ ເຊດຖາທິລາດ ດຽວນີ້,
- ປີ 1910 ສືບຕໍ່ສ້າງຖະໜົນ ຈພ.ໂຊຟ ໄປທິດຕາເວັນຕົກ ດ້ວຍການຕັດຜ່າກາງ ວັດອິນແປງ ແລະ ສ້າງຂົວເອແຟນໃສ່ນໍ້າປ່າສັກ ຕໍ່ຂຶ້ນເມືອຕາມຖະໜົນສີຫອມ, ຄ້າຍສື່ສານເກົ່າ, ສະຖານທີ່ພະເຈົ້າຟ້າງຸ່ມດຽວນີ້ຮອດ ວັດໄຕ ສີໄຄເປັນ ຖະໜົນ ຫຼວງພະບາງ ແມ່ນຖະໜົນ ສຸພານຸວົງ ດຽວນີ້, ຕາມແຜນທີ່ຂອງ ກີລີຊີ ເບີ 5a-b ໜ້າ 61-62(Plan Quilici). ໃນຄັ້ງນີ້ວັດອິນແປງໄດ້ເສຍດິນໄປ 50% ແລະ ວັດອົງຕື້ໄປ 10%,
- ໃນ 5 ປີຕໍ່ມາ ສ້າງທາງສາຍຫຼັກ ເບີ 2 ຈາກຖະໜົນ ຈພ.ໂຊຟ (Joffre) ລົງມາຮອດວັດສີເມືອງ ໃສ່ຊື່ວ່າ ຖະໜົນ ຈພ.ໂຟກ (Maréchal Foch) ຊຶ່ງລ້ວນແຕ່ແມ່ນຖະໜົນ ເຊດຖາທິລາດ ດຽວນີ້,
- ໃນ ປີ 1920 ໄດ້ເລີ່ມສ້າງຖະໜົນສາຍຫຼັກ ເບີທີ 3 ແຕ່ສີຫອມ ລົງມາຮອດ 4 ແຍກ ຖະໜົນໃຫຍ່ລ້ານຊ້າງ ແລ້ວໃສ່ຊື່ວ່າ ຊອກເຊີ ມາເຮ (George Mahé) ຊຶ່ງແມ່ນຖະໜົນ ສາມແສນໄທ ດຽວນີ້, ຈາກນັ້ນ ກໍ່ດັດແປງຖະໜົນເບີ 3 ໃຫ້ຊື່ ລັດລົງໃສ່ຖະໜົນ ຈພ. ໂຟກ (Foch) ໃຕ້ວັດສີເມືອງ ແລ້ວໃສ່ຊື່ວ່າ ຖະໜົນ ແອກແນສ ອູເຕຼ (Ernest Outray),

- ໃນຊຸມປີຕໍ່ມາ ໄດ້ກໍ່ສ້າງຖະໜົນວົງແຫວນ ໃສ່ເທິງກຳແພງເມືອງຊັ້ນໃນ ເປັນຖະໜົນ (Boulevard D de Lagrée ຫຼື Boulevard circulaire) ຊຶ່ງແມ່ນຖະໜົນ ຂຸນບູລົມ ແລະ ຖະໜົນ ຄູວຽງ ດຽວນີ້,
- ໃນປີ 1930-33 ໄດ້ຕັດຖະໜົນຫຼວງພະບາງໃໝ່ໃຫ້ຊື່ກ່ວາເກົ່າ ແຕ່ສີ່ແຍກ ວັດອິນແປງຂຶ້ນເມືອ ໂດຍຜ່ານ ບ້ານຕາກແດດ, ບ້ານຊຽງແວ່ ແລະ ບ້ານສີຖານ (ແມ່ນຖະນົນ ສຸພານຸວົງດຽວນີ້),
- ໃນປີ 1934 ໄດ້ສ້າງເດີ່ນບິນວັດໄຕ ສຳຫຼັບເຮືອບິນນ້ອຍ ທີ່ຂວາງກັບທາງແລ່ນຂຶ້ນລົງປະຈຸບັນ,

ສ່ວນຖະໜົນສາຍຂວາງ, ໝາຍຄວາມວ່າຕັດສາກກັບຖະໜົນສາຍຫຼັກນັ້ນ ແມ່ນສ້າງເປັນຄູ່ກັນໄປແຕ່ລະປີ ແລະ ໃສ່ຊື່ວ່າ: ຖະໜົນ D.de Lagrée, Chao Anou, F.Ngin, Col.Tournier, P.Morin, Tafforin, Gl Beyle, France, Dr Roufflandes, Galliéni, Dr.Brengue ແຕ່ເໜືອນ້ຳຂອງລົງມາໃຕ້ຕາມລຳດັບ[18] .( ບັນຊີສົມທຽບ ຊື່ຂອງຖະໜົນ ເປັນພາສາລາວ ແລະ ຝຣັ່ງ ແມ່ນຢູ່ໜ້າ 50).

ສ່ວນຢູ່ທົ່ວປະເທດນັ້ນ ຝຣັ່ງໄດ້ສ້າງທາງເລກ 13 (ແຕ່ ບ.ຂື້ນາກ ເຖິງ ຫຼວງພະບາງ), ທາງ ເລກ 7, ເລກ 8, ເລກ 9 ແລະ ເລກ 23 ເປັນທາງດິນແດງ ແລ້ວກ່ອນສົງຄາມໂລກຄັ້ງທີ 2. (ສະເພາະທາງເລກທີ 9 ແມ່ນປູຢາງແບບມາກາດາມໝົດ ສ່ວນເລກ13 ໃຕ້ ແມ່ນປູມາກາດາມ ແຕ່ສະຫວັນນະເຂດ ຮອດຊາຍແດນກຳພູຊາ)

ໃນການສ້າງຖະໜົນຫົນທາງໃນເມືອງວຽງຈັນແລະໃນທົ່ວປະເທດນັ້ນ ຝຣັ່ງໄດ້ເກນເອົາຄົນງານລາວ (ຄູລີ)ມາເຮັດ ໃຕ້ການຄຸມງານຂອງຄົນຫວຽດນາມ(ອົງກວານ) ມາກໍ່ສ້າງ ຝຽນລະ 15 ວັນ.

◆ ***ການຂົນສົ່ງ:*** ໃນຕົ້ນສະຕະວັດທີ 20 ໄດ້ມີການນຳໃຊ້ ມ້າ, ລົດມ້າ, ລົດຖີບ ໄປມາໃນເມືອງ ມີແຕ່ທ່ານເຈົ້າແຂວງຝຣັ່ງ ຈຶ່ງມີລົດຈັກຂີ່. ສ່ວນປະຊາຊົນທົ່ວໄປແມ່ນຍ່າງ, ຢູ່ທາງນອກແມ່ນໃຊ້ມ້າ ແລະ ກວຽນງົວ ຂົນສົ່ງຜົນຜະລິດກະສິກຳ. ການເດີນທາງໆໄກສ່ວນມາກແມ່ນໃຊ້ທາງນ້ຳ ເປັນຕົ້ນແມ່ນ ນ້ຳງື່ມ ແລະ ນ້ຳຂອງ ຕາມເດີມ ຈະເປັນແພໃນຂາລ່ອງ ແລະ ເຮືອຖໍ່ໃນຂາຂຶ້ນ, ສ່ວນເດີນທາງບົກແມ່ນໃຊ້ມ້າ ແລະ ຊ້າງ. ພາຍຫຼັງທີ່ຝຣັ່ງໄດ້ເຈາະຮູສະດຳ(ລີ່ຜີ) ສ້າງທ່າເຮືອທີ່ບ້ານຄອນ ນັບທັງຂົວ ແລະ ທາງລົດໄຟ ມາເຖິງດອນເດດ ເມືອງໂຂງ ແຂວງຈຳປາສັກໃນຊຸມປີ 1910 ແລ້ວໄດ້ນຳເອົາກຳປັ່ນມາແລ່ນໃນແມ່ນ້ຳຂອງ ຈາກນັ້ນ ການຂົນສົ່ງກໍ່ສະດວກຂຶ້ນ ນັບທັງການໂດຍສານ ແລະ ການຄ້າຕ່າງປະເທດ ໂດຍບໍ່ໄດ້ຜ່ານໄທ. ການນຳເຂົ້າເຄື່ອງບໍລິໂພກ ອຸປະໂພກ, ເຄື່ອງຈັກພາຫະນະ, ອຸປະກອນກໍ່ສ້າງ, ເຊື້ອໄຟກໍ່ໄວຂຶ້ນ, ການສົ່ງອອກສິນຄ້າລາວ: ໄມ້ທ່ອນ, ເຄື່ອງປ່າຂອງດົງຕ່າງໆກໍ່ຫຼາຍຂຶ້ນ. ການພັດທະນາ ນະຄອນຫຼວງວຽງຈັນກໍ່ວ່ອງໄວຂຶ້ນຕື່ມ. ແຕ່ປີ 1910 ມາ, ໄດ້ມີກຳປັ່ນແລ່ນຂຶ້ນລົງລະຫວ່າງວຽງຈັນ ແລະ ສະຫວັນນະເຂດ ເປັນປົກກະຕິ. ສ່ວນແຕ່ປາກເຊ ມາຫາ ສະຫວັນນະເຂດ ກຳປັ່ນແລ່ນໄດ້ແຕ່ ເວລານ້ຳໃຫຍ່ເທົ່ານັ້ນຍ້ອນແກ້ງເຂັມມະລາດ. ການຂົນສົ່ງເຄື່ອງໄປສະນີທາງໄກ ໃນເບື້ອງຕົ້ນແມ່ນໃຊ້ເຮືອ ແລະ ມ້າ, ແຕ່ ປີ1920 ມາ ແມ່ນໃຊ້ຍົນຊະນິດລົງນ້ຳ ຈາກໄຊ່ງ່ອນມາວຽງຈັນ ແລ້ວສົ່ງຕໍ່ໄປຍັງແຂວງອື່ນໆ. ແຕ່ ປີ 1925 ມາ ເລີ່ມມີລົດໂອໂຕມາແລ່ນຢູ່ນະຄອນວຽງຈັນແລ້ວ, ສ່ວນມາກຈະແມ່ນລົດຂອງ ທ່ານຜູ້ສຳເລັດຣາຊະການຝຣັ່ງປະຈຳລາວ, ທ່ານເຈົ້າ ແຂວງຝຣັ່ງ, ນາຍທະຫານ ແລະ ນາຍຕຳຫຼວດຝຣັ່ງ ແຕ່ຈຳນວນບໍ່ເຖິງ 5 ຄັນ. ສ່ວນປະຊາຊົນ ແລະ ຂ້າຣາຊະການລາວຍັງຍ່າງໄປການຢູ່, ເວັ້ນເສຍແຕ່ຜູ້ມີຖານະແດ່ຈຶ່ງໃຊ້ລົດຖີບ.

[18] ທຸກຖະໜົນວຽງຈັນໃນຄາວນັ້ນ ລ້ວນແຕ່ໃສ່ຊື່ຝຣັ່ງທັງນັ້ນ, ມີຖະໜົນດຽວໃສ່ຊື່ເຈົ້າອະນຸ ກໍ່ຍັງຮັກສາໄວ້ໃຫ້ເຫັນຢູ່ຮອດທຸກວັນນີ້.



ປະຊາຊົນຖືກເກນມາກໍ່ສ້າງຖະໜົນໃນວຽງຈັນ (ປີ 1920)

VIENTIANE: Construction d'une route (photo Tétard 1920)



ປະຊາຊົນຖືກເກນມາແບກຫາບເຄື່ອງໄປສະນີໃນວຽງຈັນ (ປີ 1920)

VIENTIANE: Transport du courrier (photo Tétard 1920)



ຄົນລາວຖືກເກນມາລາກຫ່ອນກຳປັ່ນ ຮາມເລືອງ ຂຶ້ນທ່າເຮືອບ້ານຄອນ ປີ 1893 (ເມືອງໂຂງ)

Khone: Tranche arrière du Ham Luong (Mission Simon Oct. 1893)



ຂົວທາງລົດໄຟລະຫວ່າງດອນຄອນ-ດອນເດດ (ເມືອງໂຂງ), ສ້າງປີ 1910

Khone: Le Pont de Chemin de Fer (C.A 1910)



ເຮືອຂົນສົ່ງຈາກວຽງຈັນ ຫາ ຫຼວງພະບາງ (ປີ 1919)



ກຳປັ່ນໂດຍສານຂຶ້ນມາຮອດວຽງຈັນ ແຕ່ປີ 1910 (ຮູບຖ່າຍປີ 1920)



ການຂົນສົ່ງໄປສະນີທາງອາກາດດ້ວຍຍົນແບບລົງນ້ຳ, ປີ 1920

24 / VII



ການໃຊ້ຊ້າງຊຸດຄົ້ນເອົາໄມ້ທ່ອນເພື່ອສົ່ງອອກ, ປີ 1920



ຂະບວນແຫ່ເຈົ້ານາຍຝຣັ່ງມາບຸນທາດຫຼວງໃນນະຄອນວຽງຈັນ (ຊຸມປີ 1910)



ບຸນບັ້ງໄຟທີ່ທ່າວັດຈັນ, ນະຄອນຫຼວງວຽງຈັນ ໃນຊຸມປີ 1920

### 4.4. *ການນຳໃຊ້ງົບປະມານ*

ເພື່ອໃຫ້ເຫັນແຈ້ງກ່ຽວກັບການໃຊ້ຈ່າຍໃນໄລຍະນີ້, ຂໍຍົກເອົາບາງຂໍ້ມູນ ຫຼື ຄຳເວົ້າຂອງບາງທ່ານມາເວົ້າຄືນ. ທ່ານ ຕວກນີເອ (Tournier) ຜູ້ສຳເລັດຣາຊະການຝຣັ່ງປະຈຳລາວໄດ້ຂຽນໄວ້ໃນບົດບັນທຶກກ່ຽວກັບຄວາມຄືບໜ້າຂອງວຽກງານຢູ່ລາວແຕ່ 1897 ເຖິງ 1901 ວ່າ: "ຄັງຂອງລາວກໍ່ຍັງໄດ້ນຳໃຊ້ເຂົ້າໃນການກໍ່ສ້າງຫ້ອງການ ແລະ ເຮືອນພັກຂອງພວກອານານິຄົມ" ເຊັ່ນ: ທຳນຽບ ແລະ ເຮືອນພັກຂອງຜູ້ສຳເລັດຣາຊະການ, ຂອງເຈົ້າແຂວງ ແລະ ເຈົ້ານາຍຝຣັ່ງ , ຫ້ອງການໄປສະນີ, ຄຸກ, ສານ, ຄັງ ແລະ ອື່ນໆ. .

ໃນການໃຊ້ຈ່າຍງົບປະມານເພື່ອກໍ່ສ້າງ ແລະ ຟື້ນຟູເຄຫາສະຖານຄືນໃໝ່ຂອງແຕ່ລະແຄວ້ນນັ້ນ, ທ່ານ ກອກແຕສ(G.Cortez)[19] ໄດ້ເວົ້າວ່າ: ແຕ່ລະແຄວ້ນໄດ້ໃຊ້ຈ່າຍຄັງຂອງຕົນແຕ່ປີ 1914-1922 ດັ່ງນີ້ :

- ແຄວ້ນຕົງແກງ (ຫວຽດນາມເໜືອ) = 5.6 ລ້ານກີບ ອິນດູຈີນ (Piastres)
- ແຄວ້ນອານາມ (ຫວຽດນາມກາງ) = 3.5 ລ້ານກີບ ອິນດູຈີນ(Piastres)
- ແຄວ້ນໂກແຊງຊີນ (ຫວຽດນາມໃຕ້) = 7.3 ລ້ານກີບ ອິນດູຈີນ(Piastres)
- ກຳພູຊາ = 7.2 ລ້ານກີບ ອິນດູຈີນ(Piastres)
- ລາວ = 1.3 ລ້ານກີບ ອິນດູຈີນ(Piastres)

ນອກນີ້ ຄັງຫຼວງຂອງອິນດູຈີນຍັງໄດ້ອະນຸມັດໃຫ້ຕື່ມປະມານ 59 ລ້ານກີບອິນດູຈີນ ແຕ່ແຈກຢາຍໄປແນວໃດບໍ່ເຫັນຂໍ້ມູນ.

ໃນໜ້າທີ 22 ໃນປື້ມຫົວດຽວນັ້ນ, ທ່ານ ກອກແຕສ ຍັງລາຍງານວ່າ ງົບປະມານກໍ່ສ້າງດ້ານໂຍທາທິການຂອງລາວໃນແຕ່ລະປີມີດັ່ງນີ້:

- ປີ 1921 = 314,037 ກີບ ອິນດູຈີນ ( 1 ກີບເທົ່າ: 2.4 F ເງິນຝຣັ່ງ)
- ປີ 1922 = 391,632 ກີບ ອິນດູຈີນ
- ປີ 1923 = 336,710 ກີບ ອິນດູຈີນ
- ປີ 1924 = 261,268 ກີບ ອິນດູຈີນ

ພ້ອມກັນນີ້ ທ່ານ ປູຢານ Pouyanne[20] ໄດ້ຂຽນວ່າ: ງົບປະມານໃນປີ 1924 ໄດ້ຈ່າຍເພື່ອກໍ່ສ້າງເຮືອນຊານໃຫ້ພວກອານານິຄົມຝຣັ່ງໃນອິນດູຈີນພັດສູງເຖິງ 68.3 ລ້ານກີບອິນດູຈີນ, ສ່ວນໃຫຍ່ຈະແບ່ງໄປແຄວ້ນ ຕ່າງໆເຊັ່ນ:

- ຕົງແກງ = 19.7 ລ້ານກີບອິນດູຈີນ,
- ອານາມ = 14.6 ລ້ານກີບອິນດູຈີນ,
- ໂກແຊງຊີນ = 23 ລ້ານກີບອິນດູຈີນ,
- ກຳພູຊາ = 8 ລ້ານກີບອິນດູຈີນ,
- ລາວພຽງແຕ່ = 3 ລ້ານກີບອິນດູຈີນ(ໃນນີ້ແຄວ້ນລາວຍັງຕ້ອງຈ່າຍ 2 ລ້ານກີບອີກຈາກຄັງຂອງ ລາວ)

ດັ່ງນັ້ນ, ຈຶ່ງເຫັນແຈ້ງວ່າການແບ່ງງົບປະມານແມ່ນບໍ່ເປັນທຳ, ທັງໆທີ່ປະເທດລາວເຮົາບໍ່ມີທາງອອກສູ່ທະເລ ຕ້ອງການສ້າງທາງຫຼາຍ, ອີກປະການໜຶ່ງ ຕົວເມືອງໃຫຍ່ເຊັ່ນ: ວຽງຈັນ ແລະ ຫຼວງພະບາງ ກໍ່ຖືກພວກສັກດີນາໃກ້ຄຽງເຂົ້າມາຈູດ ແລະ ທຳລາຍຫຼາຍຄັ້ງ.

---

[19] ໃນໜ້າທີ່ 21 ຂອງປຶ້ມ G.Cortez "ເທສະບານ ແລະ ສະຖາປັດຕະຍະກຳ ອານານິຄົມຝຣັ່ງ" ພິມຄືນປີ 1993 ທີ່ ປາຣີ.

[20] ໃນໜ້າທີ່ 263-264 ຂອງປຶ້ມ Pouyanne "ໂຍທາທິການໃນອິນດູຈີນ" ພິມທີ່ ຮ່າໂນຍ ປີ 1926.

### *4.5. ການປະຕິສັງຂອນວັດ ແລະ ທາດ*

ໃນໄລຍະນີ້ ປະຊາຊົນລາວໄດ້ເຂົ້າມາຢູ່ຫຼາຍແລ້ວ ເປັນຕົ້ນແມ່ນແຕ່ປີ 1930 ມາ, ການສ້ອມແປງ ແລະ ປະຕິສັງຂອນວັດວາອາຮາມຈຶ່ງມີຫຼາຍຂຶ້ນເຊັ່ນ:

1. ວັດອິງຕື້;
2. ວັດມີໄຊ;
3. ວັດຫາຍໂສກ;
4. ວັດສີເມືອງ;
5. ວັດເກົ້າຍອດ;
6. ພະທາດຫຼວງ ກໍ່ໄດ້ປະຕິສັງຂອນຄືນໃໝ່ຕາມແບບເດີມ ດ້ວຍການປະກອບສ່ວນຂອງຊາວວຽງຈັນ ແລະ ການຊ່ວຍເຫຼືອຂອງລັດຖະບານຝຣັ່ງ ໃຕ້ການຊີ້ນຳຂອງສະຖາປະນິກ Fombertaux ໃນປີ 1930-1931;
7. ຫໍພະແກ້ວ: ແມ່ນສະເດັດເຈົ້າ ສຸວັນນະພູມາ ອາດີດນາຍົກລັດຖະມົນຕີລາວ ແລະ ທ່ານ ທິດພຸ ນັກສິລະປະກຳລາວ ອາວຸໂສ ຜູ້ໜຶ່ງໄດ້ມາປະຕິສັງຂອນຄືນ ພ້ອມກັບປະຊາຊົນຊາວວຽງຈັນ ແລະ ດ້ວຍການຊ່ວຍເຫຼືອຂອງ ສະຖາບັນຄົ້ນຄ້ວາ ໃນພາກຕາເວັນອອກໄກຂອງຝຣັ່ງ (EFEO) ໃນປີ 1936-1938[21];
8. ວັດພະໄຊເຊດຖາ (ວັດພະໄຊ).

ນອກຈາກວັດເຫຼົ່ານີ້ແລ້ວ ຍັງມີອີກຫຼາຍວັດໃນເຂດນອກກຳແພງເມືອງເຊັ່ນ: ວັດສີຖານ, ວັດຊຽງແວ່, ວັດຫົວເມືອງ, ວັດຊຸນຕາ, ວັດອູບມຸງ, ວັດໄຕນ້ອຍ, ວັດໄຕໃຫຍ່, ວັດໂພນໄຊ, ວັດໂພນພະເນົາ, ວັດໜອງບອນ, ວັດທາດຫຼວງ ແລະ ວັດອື່ນໆ ລວມປະມານ 40 ວັດທີ່ໄດ້ສ້ອມແປງ ແລະ ປະຕິສັງຂອນຄືນຮອດປີ 1954.

ວັດໃນເມືອງທີ່ບໍ່ໄດ້ປະຕິສັງຂອນຄືນເພາະເປ່ເພຢ່າງຫຼວງຫຼາຍກໍ່ຄື: (1) ວັດກາງ, (2) ວັດສີສຸມົນ(3) ວັດສີບຸນຍືນ, (4) ວັດສີມຸງຄຸນ, (5) ວັດພິມອາຊັນ, (6) ວັດຜາຂາວ, (7) ວັດປູ່ຍອນ, (8) ວັດໂພນ ອາຮາມ, (9) ວັດສວນຫຼວງ, (10) ວັດຮວງເຜີ້ງ, (11) ວັດຫໍໄຕຄຳ, (12) ວັດໜອງທອມ, (13) ວັດ ເພຍວັດ (ທາກໍ່ປະຕິສັງຂອນຄືນໃໝ່ປີ1958-60), (14) ວັດພະໂພ (ທາກໍ່ປະຕິສັງຂອນຄືນ ປີ1960-1965), (15) ວັດພະແພງ, (16) ວັດສາຄວງ, (17) ວັດຄຳລຽນ, (18) ວັດທາດສີ, (19) ວັດເກີນ, (20) ວັດ ທາດນ້ອຍ, (21) ວັດສີວັນນະພູມ, (22) ວັດພິດສະດານ, (23) ວັດຍອດແກ້ວ, (24) ວັດສະຄື, (25) ວັດທາດແດງ, (26) ວັດມະໂນ, (27) ວັດສີພົມ, (28) ວັດນາໂຮມ,(29)ວັດພະບາງ... (ອີງໃສ່ບັນຊີວັດໃນວິທະຍານິພົນຂອງ ດຣ.ບຸນເຫຼື່ອມສີສຸລາດ ໜ້າ47 ແລະ ແຜນທີ່ຂອງ H Parmentier ເບີ 4).

---

[21] ສະເດັດເຈົ້າ ສຸວັນນະພູມາ ຊຶ່ງເປັນສະຖາປະນິກ ແລະ ວິສະວະກອນ ຮຽນຈົບມາແຕ່ຝຣັ່ງ ຍັງໄດ້ສ້າງຕຶກໃຈກາງຂອງຕະຫຼາດເຊົ້າ ອີກ (ດຽວນີ້ໄດ້ຖືກທັບມ້າງໄປແລ້ວໃນຕົ້ນປີ 2008), ສ້າງຕຶກກົມອຸຕຸນິຍົມ, ອອກແບບຕຶກທາງລາຊະການຫຼາຍຫຼັງໃນວຽງຈັນ, ໂດຍສະເພາະແມ່ນຕຶກໃນສະຖານທູດຝຣັ່ງ ຊຶ່ງເມື່ອກ່ອນເປັນເຂດຂອງພະແນກໂຍທາ.



ຮູບພະທາດຫຼວງດຽວນີ້ ສ້າງດ້ວຍສັດທາຂອງຊາວວຽງຈັນ ແລະ ການຊ່ວຍເຫຼືອຂອງລັດຖະບານ ຝຣັ່ງ
ໃຕ້ການຊີ້ນຳຂອງທ່ານ ຟົມແບກໂຕ (Fombertaux), ສະຖາປະນິກຝຣັ່ງ ປີ 1930 - 1931



ຊາວນະຄອນຫຼວງວຽງຈັນໄດ້ເຂົ້າຮ່ວມປະຕິສັງຂອນພະທາດຫຼວງຄືນຢ່າງຫ້າວຫັນ(ຮູບຖ່າຍປີ 1930)



ຫໍພະໄຕປິດົກສິລະປະ

ຍຸກພະເຈົ້າອະນຸວົງ

ໄດ້ຮັກສາໄວ້ເປັນຢ່າງດີ



ຫໍພະແກ້ວທີ່ພວມປະຕິສັງຂອນຄືນໃນປີ 1936 ໂດຍການຊີ້ນຳຂອງສະເດັດເຈົ້າສຸວັນນະພູມມາ

ອະດີດນາຍົກລັດຖະມົນຕີລາວ

# ວັດຕ່າງໆທີ່ໄດ້ປະຕິສັງຂອນຄືນລະຫວ່າງ ປີ1910 – 1940



1



2



3



4



5

1. ວັດຈັນ ໄດ້ປະຕິສັງຂອນຄືນຊຸມປີ 1910
2. ວັດສີສະເກດ ໄດ້ສ້ອມແປງຄືນປີ 1912
3. ວັດອິນແປງ ໄດ້ປະຕິສັງຂອນຄືນຊຸມປີ 1920
4. ວັດອົງຕື້ ໄດ້ປະຕິສັງຂອນຄືນຊຸມປີ 1920
5. ວັດຫາຍໂສກ ໄດ້ປະຕິສັງຂອນຄືນຊຸມປີ 1930

## 4.6. ສະຖາປັດຕະຍະກຳ ແລະ ສິລະປະກຳ

- **ປູຊະນີຍະສະຖານ**

ໃນສະໄໝນີ້ ປະຊາຊົນລາວຊາວວຽງຈັນ ໄດ້ສືບຕໍ່ປະຕິສັງຂອນວັດວາອາຮາມ ແລະ ທາດຕ່າງໆ ຢ່າງຕໍ່ເນື່ອງ ດ້ວຍສັດທາຂອງຕົນເອງເປັນຕົ້ນຕໍ, ດ້ວຍຮູບແບບສິລະປະເດີມ ຂອງສະໄໝອານາຈັກລາວລ້ານຊ້າງ ໃຫ້ຍືນຍົງຄູ່ຊາດລາວຕະຫຼອດໄປ. ເຖິງແມ່ນວ່າຂາດແຄນສີມື ແລະ ຊ່າງຢ່າງຫຼວງຫຼາຍກໍ່ຕາມ, ແຕ່ຄູບາອາຈານ ຍັງສືບຕໍ່ສິດສອນໃຫ້ເນນ ແລະ ຊາວບ້ານຂອງຕົນດ້ວຍວິຊາຕ່າງໆ: ການແຕ້ມ, ການອອກແບບ, ການຄວັດລວດລາຍ, ການໂບກປະທາຍ ແລະ ວິຊາກໍ່ສ້າງອື່ນໆ... ຈຶ່ງເຮັດໃຫ້ວັດວາອາຮາມ ແລະ ທາດຕ່າງໆ ໄດ້ປະຕິສັງຂອນຄືນມາເທື່ອລະກ້າວຢ່າງສະຫງ່າງາມ.

ນັກສຳຫຼວດ ແລະ ນັກທ່ອງທ່ຽວທົ່ວໂລກ ເມື່ອໄດ້ມາເຫັນເມືອງວຽງຈັນ ກໍ່ໄດ້ຊື່ນຊົມຕໍ່ສິລະປະກຳ ແລະ ສະຖາປັດຕະຍະກຳ ອັນເປັນເອກະລັກຂອງຊາວລາວນັ້ນ ຢ່າງສຸດໃຈ.

ນັບແຕ່ຂັ້ນໄດ, ເສົາ, ຝາ, ປະຕູປ່ອງຢ້ຽມ, ສີໜ້າ, ຫຼັງຄາ, ສ້ອຍສາ, ແຂນນາງ, ໂງ່, ເຖິງຍອດຊໍ່ຟ້າ ແລະ ຊິ້ນສ່ວນອື່ນໆ ຂອງແຕ່ລະວັດແມ່ນບໍ່ຄືກັນ. ນັບແຕ່ພະທາດຫຼວງ, ວັດສີສະເກດ, ຫໍພະແກ້ວ, ວັດອິນແປງ, ວັດອົງຕື້ ນັບທັງວັດທີ່ສ້າງຂຶ້ນໃໝ່ໃນສະຕະວັດທີ 20 ນີ້ແມ່ນບໍ່ຄືກັນ, ບໍ່ກ່າຍກັນ ແລະ ບໍ່ໄດ້ກ່າຍມາຈາກຕ່າງປະເທດ, ມັນລ້ວນແຕ່ມາຈາກປັນຍາ ແລະ ຫົວຄິດປະດິດສ້າງ ຂອງ ຊາວວຽງຈັນທັງນັ້ນ, ມັນແມ່ນມໍລະດົກອັນລ້ຳຄ່າ ແລະ ອຸດົມຮັ່ງມີຂອງແຕ່ລະຍຸກ ແຕ່ລະສະໄໝຕ່າງກັນ ອັນເປັນສິ່ງທີ່ເອກອ້າງຂອງຊາວລາວທັງຊາດ. ມາຮອດນີ້ ຈຶ່ງສາມາດເວົ້າໄດ້ວ່າ ວັດແມ່ນບ່ອນທີ່ ອະນຸລັກ ວັດທະນະທຳ ສະຖາປັດຕະຍະກຳ ແລະ ສິລະປະກຳ ຂອງຊາດໄວ້ ຢ່າງສະເໝີຕົ້ນ ສະເໝີປາຍ. ສົມດັ່ງຄຳວ່າ: " ພາສາ ວັດທະນະທຳ ສິລະປະ ບອກຊາດ ມາລະຍາດ ບອກຕະກຸນ".

- **ອາຄານຂອງອານານິຄົມ**

ທຳນຽບຂອງຜູ້ສຳເລັດຣາຊະການຝຣັ່ງສ້າງໃນ ປີ 1901 ນັ້ນ, ແມ່ນອາຄານຖາວອນຫຼັງທຳອິດທີ່ໄດ້ສ້າງກ່ອນເພິ່ນ. ດຽວນີ້ຖືກທັບມ້າງໄປແລ້ວ ມາປຸກຫໍຄຳໃສ່ໃນ ປີ 1975. ອາຄານຫຼັງນີ້ ເປັນຕຶກຊັ້ນດຽວກໍ່ດ້ວຍດິນຈີ່ ມຸງສັງກະສີ. ສະຖາປັດຕະຍະກຳ ມີລວດລາຍງາມສົມຄວນ, ມັນແມ່ນການອອກແບບຂອງສະຖາປະນິກຝຣັ່ງຄົນໜຶ່ງ ທີ່ໄດ້ນຳເອົາສິລະປະ ຈາກປະເທດຝຣັ່ງ ມາກໍ່ສ້າງໃຫ້ເໝາະສົມກັບດິນຟ້າອາກາດ ແລະ ພູມີປະເທດ. ເບິ່ງຮູບແລ້ວຈະເຫັນໄດ້ວ່າ ມີການວາງສະແດງເສົາກົມທາງໜ້າ, ຮຽງປະຕູໃຫຍ່ເບື້ອງລະ 2 ເສົາ, ເທິງປະຕູມີບົວໂຄ້ງກົ່ງລົງມາ ແລະ ຕັດທັບຈອມດ້ວຍຮູບຂວານ (ຫຼືຮູບໜ້າຈົ່ວ). ກ້ອງສາຍຄາມີບົວກັນສາດ, ດູກງູ ແລະ ບົວອີກຊັ້ນໜຶ່ງຕໍ່ໃສ່ຫົວເສົາ. ບານປະຕູ ແລະ ປ່ອງຢ້ຽມໃຫຍ່ສູງ ແລະ ຕິດແກ້ວເປັນ ປ່ອງໆ. ທາງເຂົ້າໄປມີຂັ້ນໄດປະມານ 7-8 ຂັ້ນ ໄປຫາລະບຽງທີ່ສ້າງອ້ອມຕຶກກວ້າງພໍສົມຄວນ ແລະ ມີພະນັກ ກໍ່ອ້ອມລະບຽງໄວ້ ຊຶ່ງຕິດດ້ວຍລູກຕິ່ງເຕັມໄປໝົດ. ໃນປີ 1947 ເພິ່ນໄດ້ໃຊ້ເປັນສະພາຜູ້ແທນ ຮ່າງລັດຖະທຳມະນູນ ແລະ ຊຸມປີ 1948-56 ເປັນ ສະພາຜູ້ແທນລາສະ ດອນຂອງຣາຊະອານາຈັກລາວ.

(ຂ້າພະເຈົ້າກໍ່ຍັງໄດ້ໄປເຫັນດ້ວຍຕາຕົວເອງ ໃນປີ1952- 54).

ສ່ວນອາຄານອື່ນໆ ທີ່ປຸກຕໍ່ມາບໍ່ຄ່ອຍຈະງົດງາມ ແລະ ເອ້ຢ້ອງດັ່ງຕຶກທຳນຽບຂອງຜູ້ສຳເລັດຣາຊະການນັ້ນປານໃດ. ສ່ວນມາກເຮືອນພັກ ຫຼື ຫ້ອງການຂອງລະບອບອານານິຄົມນີ້ ຈະເປັນແບບດຽວກັນກັບຕຶກ ທີ່ປຸກຢູ່ພະນົມເປັນ, ໄຊ່ງອນ ແລະ ຮ່າໂນ້ຍ, ມັນເປັນແບບດຽວທີ່ Ernest Hébrard ໄດ້ອອກແບບໄວ້.

ມັນເປັນເຮືອນ 2 ຊັ້ນ, ຝາກໍ່ດ້ວຍດິນຈີ່ເພື່ອຮັບນ້ຳໜັກ ສະນັ້ນຈຶ່ງບໍ່ມີເສົາ, ແຕ່ມີຫຼັງຄາມຸງດ້ວຍດິນຂໍ, ຂອບເບື້ອງເທິງປະຕູປ່ອງຢ້ຽມຈະໂຄ້ງກົ່ງລົງມາ ຫຼືວ່າເປັນຮູບ 4 ຫຼ່ຽມ, ສ່ວນມາກຈະໃຊ້ວັດສະດຸກໍ່ສ້າງກັບທີ່ ເຊັ່ນ: ແຮ່ຊາຍ, ດິນຈີ່, ດິນຂໍ, ໄມ້, ປູນ, ບໍ່ໃສ່ເຫຼັກ ແລະ ໃຊ້ຊີມັງນ້ອຍທີ່ສຸດ ເພາະຍາກໃນການຂົນສົ່ງເຂົ້າມາ. ຕຶກແຕ່ລະຊັ້ນສູງປະມານ 4 ແມັດ, ຊັ້ນທີ 1 ປູດ້ວຍດິນເຜົາ(ກາໂຣ), ຊັ້ນທີ 2 ປູດ້ວຍແປ້ນ, ເພດານກໍ່ແມ່ນແປ້ນ, ບານປະຕູປ່ອງຢ້ຽມ ກໍ່ລ້ວນແຕ່ເຮັດດ້ວຍໄມ້ ແບບແປກຊຽມທີ່ຊັ້ນນອກ ແລະ ຊັ້ນໃນເປັນປະຕູແກ້ວ, ແຕ່ບາງຫຼັງ ກໍ່ມີແຕ່ປະຕູປ່ອງຢ້ຽມແກ້ວເທົ່ານັ້ນ ຕົວຢ່າງ ສຳນັກງານຂອງເຈົ້າແຂວງຝຣັ່ງ ຊຶ່ງແມ່ນຫໍພິພິດຕະພັນ ປະຫວັດສາດ ແຫ່ງຊາດ ດຽວນີ້. ເວົ້າລວມແລ້ວ ມັນແມ່ນແບບເຮືອນທີ່ປະຢັດ ແລະ ໃຊ້ອາກາດ ລະບາຍຄວາມຮ້ອນໃນເຮືອນແບບທຳມະຊາດ. ສ່ວນໂຄງຫຼັງຄາ ກໍ່ເຮັດດ້ວຍໄມ້ທັງນັ້ນ, ບາງຫຼັງກໍ່ມີສີໜ້າ ຫຼື ສີໜ້າປີກ ພ້ອມດ້ວຍປ່ອງລົມ, ກ້ອງປ້ານຊາຍ ຈະເຫັນແຂນນາງເດ່ອອກມາແບບເອກະລັກຂອງອານານິຄົມແທ້ໆ. ຕຶກແຕ່ລະຫຼັງກໍ່ຕ່າງ ກັນໄປດ້ວຍແບບ ຂອງປະຕູປ່ອງຢ້ຽມ ທີ່ມີກົນສາດ ແລະ ບົວຕິດຫຼ່ຽມທີ່ເປັນຮູບແຕກຕ່າງກັນໄປ.



ທຳນຽບຜູ້ສຳເລັດຣາຊະການຝຣັ່ງປະຈຳລາວ (Hotel de la résidence supérieure)
(ຮູບແຕ້ມແບບສະຖາປະນິກ)

# ຮູບແບບຕ່າງໆ ຂອງສະຖາປັດຕະຍະກຳ ອານານິຄົມຝຣັ່ງ





ບານປະຕູແບບສອງຊັ້ນ(ຊັ້ນນອກເປັນແປກຊຽມແລະຊັ້ນໃນແມ່ນແກ້ວ)




24/VII
ຫ້າມຈຳໜ່າຍ

# ຕຶກໃນສະໄໝອານານິຄົມຝຣັ່ງ



ສຳນັກງານເຈົ້າແຂວງຝຣັ່ງ(commissariat) ປະຈຳວຽງຈັນ, ປະຈຸບັນແມ່ນຫໍພິພິດຕະພັນປະຫວັດສາດແຫ່ງຊາດ



ກ່ອນປີ 1947 ແມ່ນຫ້ອງວ່າການຂອງຜູ້ສຳເລັດຣາຊະການຝຣັ່ງປະຈຳລາວ (Cabinet de Res Sup) ຕໍ່ມາປ່ຽນເປັນ ຫ້ອງການຂ້າຫຼວງຝຣັ່ງປະຈຳລາວ (Com Rep) ຊຶ່ງແມ່ນ ກະຊວງຖະແຫຼງຂ່າວ ແລະ ວັດທະນາທຳ ໃນປະຈຸບັນ

## ເຮືອນພັກຂອງຂ້າຣາຊະການຝຣັ່ງໃນວຽງຈັນທີ່ໄດ້ບູຣະນະຄືນ







ຕຶກອານານິຄົມຝຣັ່ງໃນວຽງຈັນທີ່ບໍ່ໄດ້ບູຣະນະຄືນ







# ສິ່ງກໍ່ສ້າງອື່ນໆໃນວຽງຈັນ



ອ່າງນໍ້າສູງບຶງຂະຫຍອງ ສ້າງໃນຊຸມປີ 1930



ໂບດກາໂຕລິກ ສ້າງໃນປີ 1928



ໂຮງຮຽນມັດທະຍົມ ອ. ປາວີ ສ້າງປີ 1920



ໂຮງຮຽນວິຊາຊີບ ຫຼັງທຳອິດ, ສ້າງ ປີ 1910 (ໂຮງພິມກະຊວງສຶກສາດຽວນີ້)



ໂຮງຮຽນມູນລະປະຖົມສຶກສາຫຼັງທຳອິດ, ສ້າງ ປີ 1920 (ຕໍ່ໜ້າ ກອງລະຄອນລຳແຫ່ງຊາດ ດຽວນີ້)



ຫ້ອງແຖວຄົນຈີນ ບ້ານວັດຈັນ, ສ້າງ ຊຸມປີ 1910



ເຮືອນຄົນທວຽດນາມ, ສ້າງຊຸມປີ 1920 ຄຸ້ມເຈົ້າອະນຸ

- **ເຮືອນຂອງຄົນລາວ**

ໃນຕົ້ນສະຕະວັດ ທີ 20, ເຮືອນຂອງຄົນລາວທີ່ຍ້າຍເຂົ້າມາປຸກໃນກຳແພງ ກໍ່ລ້ວນແຕ່ແມ່ນເຮືອນຕູບມຸງຫຍ້າ ຝາສານແຕະທັງນັ້ນ, ເພາະວ່າເປັນເຮືອນຊົ່ວຄາວຫາວັດສະດຸໄດ້ງ່າຍ ເປັນໄມ້ເຮັຍ, ໄມ້ໄຜ່, ໄມ້ເສົາ ຊຶ່ງປະຊາຊົນເຂດເໜືອເອົາລ່ອງແພລົງມາຂາຍ. ການຈະປຸກເປັນເຮືອນຖາວອນນັ້ນ ກໍ່ເປັນການຍາກ, ເຖິງວ່າວຽງຈັນມີປ່າໄມ້ຢູ່ບໍ່ໄກ ແຕ່ຂາດພາຫະນະຂົນສົ່ງ ແລະ ຄົນເລື່ອຍ. ຕ້ອງໄດ້ຖ້າໄປອີກເຖິງ 10 ກ່ວາປີ ຈຶ່ງຄ່ອຍເຫັນເຮືອນລາວແບບຖາວອນເກີດຂຶ້ນ, ສ່ວນມາກແມ່ນເຮືອນຂອງຜູ້ມີຖານະແດ່.

ເຮືອນຖາວອນໃນສະໄໝນີ້ ຈະຕ່າງໄປຈາກເຮືອນລາວ ໃນສະໄໝອານາຈັກລາວລ້ານຊ້າງແດ່, ເພາະສະພາບມັນປ່ຽນໄປ. ເມື່ອກ່ອນເພິ່ນໃຊ້ຊ້າງລາກແກ່ໄມ້ທ່ອນເຂົ້າມາວຽງຈັນ ແລ້ວໃຫ້ຄົນເລື່ອຍຈຶ່ງໄດ້ ນຳໃຊ້ໄມ້ໄດ້ຫຼາຍໃນການກໍ່ສ້າງເຄຫາສະຖານຕ່າງໆ.

ຕົກມາໃນສະໄໝອານານິຄົມ, ຊ້າງມ້າໄດ້ສູນເສຍໄປຫຼາຍຍ້ອນສົງຄາມ. ສະນັ້ນ ແບບເຮືອນຄົນລາວຈຶ່ງໄດ້ອີງໃສ່ ວັດສະດຸກໍ່ສ້າງທີ່ມີ ແລະ ແຮງງານຂອງຫວຽດນາມຊ່ວຍ, ຈະເຫັນແບບເຮືອນເກົ່າແກ່ທີ່ຍັງຄົງຄ້າງຢູ່ເຊັ່ນ: ເຮືອນຮ້ານ, ເສົາຕັ້ງກໍ່ດ້ວຍດິນຈີ່, ເປັນເຮືອນດ່ຽວ ຫລື ເຮືອນແຝດ ຫຼັງຄາມີ 2 ແປ ຫລື 4 ແປ, ພື້ນແປ້ນ, ຝາປະທາຍ(ຕອັກຊີ), ປະຕູປ່ອງຢ້ຽມໄມ້, ມຸງດິນຂໍ, ເພດານເປັນໄມ້ແປ້ນ, ມີກ້ອງລ່າງ, ມີເຊຍ, ຫ້ອງນອນ, ມີເຮືອນຄົວຕິດ ແລະ ວິດຊຶມຢູ່ຕ່າງຫາກ. ສະນັ້ນ ດິນຈີ່ດິນຂໍ, ແຮ່ຊາຍ, ປູນ, ໄມ້ ຈຶ່ງເປັນວັດສະດຸກໍ່ສ້າງພື້ນຖານທີ່ນຳໃຊ້. ຝາຕອັກຊີ ແມ່ນພາສາຝຣັ່ງ ບາງຄົນວ່າແມ່ນຝຣັ່ງນຳເຂົ້າມາ, ບາງຄົນວ່າ ຫວຽດນາມພາເຮັດ, ແຕ່ຢູ່ຝຣັ່ງບໍ່ຄ່ອຍປະກົດເຫັນເຮືອນແບບນີ້, ຢູ່ຫວຽດນາມສ່ວນຫຼາຍກໍ່ແມ່ນເຮືອນກໍ່ຊູດິນ, ຢູ່ຊົນນະບົດຫວຽດນາມ ກໍ່ເຫັນໃຊ້ຝາເປືອດິນດາກ. ບາງຄົນວ່າ ຝາຕອັກຊີນີ້ ແຕ່ກ່ອນເອີ້ນວ່າ "ຝາປະທາຍ" ຊຶ່ງໄດ້ມີມາແລ້ວຢູ່ຫຼວງພະບາງ. ສະນັ້ນ ຂ້າພະເຈົ້າຄິດວ່າ ຄົງຈະມາຈາກປັນຍາຊາວບ້ານນັ້ນເອງ ທີ່ຄົ້ນຄ້ວາອອກມາເພື່ອສ້າງເຮືອນຊານໃຫ້ແກ່ຕົນເອງ. ເຮືອນຫຼັງທຳອິດຂອງສະເດັດເພັດຊະລາດ ປຸກຊຸມ ປີ 1914-15 (ຢູ່ໂບລິງ ຫຼັກ 3 ແຄມຂອງ ທີ່ໄດ້ມ້າງຖິ້ມດິນແລ້ວ) ກໍ່ແມ່ນເຮືອນ 2 ຊັ້ນ ເສົາຕັ້ງ ຝາປະທາຍນັ້ນແທ້ (ຕອັກຊີ). ເຮືອນແບບຖາວອນນີ້ ຍັງມີໃຫ້ເຫັນຢູ່ແຕ່ບໍ່ຫຼາຍໃນວຽງຈັນ, ຫຼາຍຫຼັງກໍ່ ເປ່ເພໄປ ຫຼື ມ້າງຖິ້ມເພາະມີແບບໃໝ່ ທີ່ງາມ, ສົມບູນ ແລະ ທັນສະໄໝເຂົ້າມາແທນ (ໄດ້ມີຮູບແບບເຮືອນເກົ່າມາໃຫ້ທ່ານຜູ້ອ່ານໄດ້ເບິ່ງໃນປຶ້ມຫົວນີ້) ຈະເປັນເຮືອນແບບຫຼັງດ່ຽວ ຕິດດ້ວຍເຮືອນຄົວຕ່າງຫາກ ຫຼື ເຮືອນແຝດຕິດດ້ວຍເຊຍ ແລະ ເຮືອນຄົວ. ແນວໃດກໍ່ຕາມເຮືອນລາວ ແມ່ນມີກ້ອງລ່າງ, ມີເຊຍ ແລະ ຂັ້ນໄດ ໂດຍປິ່ນສີຫນ້າໄປທິດຕາເວັນອອກ ຫຼື ທິດເໜືອ ແລະ ຂະໜານກັບແມ່ນ້ຳຂອງຢູ່ສະເໝີ, ຈະປຸກຢູ່ອ້ອມວັດ ເປັນຄຸ້ມໆ ເພາະຄົນລາວບໍ່ມັກຢູ່ໂດດດ່ຽວ.

ເຮືອນຫຼັງໃຫຍ່ທີ່ປຸກກ່ອນໝູ່ໃນຕົ້ນສະຕະວັດທີ 20 ນີ້ ແມ່ນເຮືອນຂອງ ເຈົ້າເມືອງ ເພຍ ສີສຸວັນນະວົງສາ [22]. ສ່ວນປະຊາຊົນຊາວນາທົ່ວໄປຍັງແມ່ນເຮືອນ ຕູບຝາໄມ້ເຮັຍ ແລະ ມຸງຫຍ້າ ຫຼື ຜ້າ ຢູ່ພາຍໃນເຮືອນຈະແບ່ງເປັນ 2 ສ່ວນ ເທົ່າກັນໄປຕາມລວງຍາວ, ເຄິ່ງໜຶ່ງ ຂັ້ນເປັນຫ້ອງນອນ ແລະ ຮ້ານໄຫວ້ພະ, ອີກເຄິ່ງໜຶ່ງ ປະຫວ່າງໄວ້ ເພື່ອຮັບແຂກ ຮັບປະທານອາຫານ ຫຼື ທຳບຸນ.

---

[22] ເບິ່ງແບບເຮືອນຂອງ ເພຍ ສີ ສຸວັນນະວົງສາ ນີ້ ມີຊົງໄປແບບເຮືອນຄົນຊຽງຂວາງ, ນີ້ກໍ່ຢັ້ງຢືນອີກຕື່ມວ່າຄົງແມ່ນ ຄົນຊຽງຂວາງ (ໄທພວນ)ກັບເຂົ້າມາຢູ່ຄືນ. ຕະກຸນນີ້ ໄດ້ປ່ຽນນາມສະກຸນມາເປັນ ສຸວັນນະວົງ ໃນໄລຍະຕໍ່ມາ.







- **ເຮືອນຂອງຄົນຕ່າງປະເທດ (ຫວຽດນາມ ແລະ ຈີນ)**

ເຮືອນຂອງຄົນຫວຽດນາມຈະຕັ້ງຢູ່ຄຸ້ມເຈົ້າອະນຸວົງ, ຈະເປັນລັອກໃຜລັອກມັນ ປະມານ 10 x15ມ ພໍດີປຸກເຮືອນກໍ່ຊັ້ນດຽວ, ມຸງດິນຂໍ, ມີຫ້ອງນອນ 2 ຫ້ອງ, ມີເຮືອນຄົວຕິດ. ສ່ວນການເອ້ຍ້ອງບໍ່ຄ່ອຍມີລວດລາຍພໍປານໃດ, ຫຼືວ່າມີນ້ອຍເຊັ່ນ: ຕິດບົວໃສ່ເທິງປະຕູປ່ອງຢ້ຽມເທົ່ານັ້ນ, ບານປະຕູ ແລະ ປ່ອງຢ້ຽມແມ່ນໄມ້ແບບແປກຊຽນ.

ເຮືອນຂອງຄົນຈີນເປັນຫ້ອງແຖວຊັ້ນດຽວ, ທຳອິດແມ່ນປຸກລຽບຕາມຖະໜົນເຈົ້າຟ້າງຸ່ມລຽບຕາມແຄມຂອງຂະຫຍາຍລົງໄປ ແຕ່ກ້ອງປາກປ່າສັກເຖິງວັດຊຽງຍືນ. ແຕ່ປີ 1925 ມາເມື່ອຕັດຖະໜົນເຂດຖາທິລາດແລ້ວ, ກໍ່ມີຄົນຈີນມາປຸກຫ້ອງແຖວ ລົງມາຮອດນ້ຳພຸ ຊຶ່ງເມື່ອກ່ອນແມ່ນຕະຫຼາດເຊົ້າ. ເຮືອນດັ່ງກ່າວກໍ່ແມ່ນ ຊາວກຳມະກອນຫວຽດນາມ ກໍ່ສ້າງໃຫ້, ເຂົາສ້າງເປັນເຮືອນກໍ່ ແບບຫວຽດນາມທັງນັ້ນ ເປັນຊັ້ນດຽວ ແລະ 2ຊັ້ນ. ໃນລະຫວ່າງປີ 1940-1958 ຖືວ່າແຖວນີ້ຈະເລີນຮຸ່ງເຮືອງຫຼາຍ, ໂດຍສະເພາະ ແມ່ນເຂດຕະຫຼາດເຊົ້າ (ນ້ຳພຸ) ແລະ ຖະໜົນເຈົ້າອະນຸວົງ ເພາະມີໂຮງຮູບເງົາຢູ່ 3 ແຫ່ງ ແລະ ມີຮ້ານອາຫານ ຫວຽດ-ຈີນຫຼາຍ. ( ຮູບຢູ່ໜ້າ 41 )

### *4.7. ປະຊາກອນ.*[23]

ໃນປີ 1907 ໄດ້ມີການສຳຫຼວດເບິ່ງປະຊາກອນໃນຕົວເມືອງວຽງຈັນແລ້ວ ມີປະມານ 3,000 ຄົນ ຊຶ່ງ 1/3 ແມ່ນຄົນຕ່າງປະເທດ ດັ່ງໄດ້ລາຍງານມາແລ້ວ, ຄວາມໜາແໜ້ນຂອງປະຊາກອນແມ່ນ 45 ຄົນ ຕໍ່ເຮັກຕາ.

ໃນປີ 1930 ກໍ່ໄດ້ມີການສຳຫຼວດຄືນອີກ, ປະກົດວ່າປະຊາກອນໄດ້ມີຫຼາຍຂຶ້ນກ່ວາ 5 ເທົ່າ ຄືມີຈຳນວນ 17,000 ຄົນ ຄວາມໜາແໜ້ນແມ່ນ 120 ຄົນຕໍ່ເຮັກຕາ ຢູ່ໃນເນື້ອທີ່ 140 ເຮັກຕາ.

ໃນປີ 1943 ກໍ່ໄດ້ສຳຫຼວດຄືນ ເຫັນວ່າຈຳນວນປະຊາກອນໃນເມືອງວຽງຈັນໄດ້ເພີ້ມຂຶ້ນເກືອບ 2 ເທົ່າຄື 23,260 ຄົນ, ໃນນັ້ນ ມີຄົນລາວພຽງ 9,750 ຄົນ (41.5%), ຄົນຫວຽດນາມ 12,400 ຄົນ (53%), ຄົນຈີນ 950 ຄົນ (4%), ຊາດອື່ນໆ 330 ຄົນ (1.5%), ຄົນລາວຈະຢູ່ ອ້ອມແອ້ມ ວັດຈັນ, ວັດອິນແປງ, ວັດທາຍໂສກ, ວັດມີໄຊ ແລະ ກຳ້ຕາເວັນຕົກ ແຕ່ສີຖານຮອດວັດໄຕ, ກຳ້ເໜືອ: ດົງປາລານ, ໂພນໄຊ, ໜອງບອນ, ທາດຫຼວງ ແລະ ກຳ້ຕາເວັນອອກສ່ຽງໃຕ້ຂອງຕົວເມືອງ ແຕ່ ເພຍວັດ, ທາດຂາວ, ບຶງຂະຫຍອງ, ສວນມອນ, ບໍ່ໂອ... ແບບກະແຈກກະຈາຍເປັນກຸ່ມບ້ານໆໄປ ແລະ ຄົນຫວຽດນາມກໍ່ຄ່ອຍ ທະຍອຍກັບຄືນປະເທດຈຳນວນໜຶ່ງ ຍ້ອນວ່າປີນີ້ ຄ່າຄອງຊີບແພງ ປະຊາຊົນລາວກໍ່ອອກໄປເຮັດນາ, ເຮັດສວນຢູ່ນອກກຳແພງ.[24]

ປີ 1953 ຈຳນວນພົນໃນວຽງຈັນ ແຕ່ວັດໄຕລົງຮອດສວນມອນ, ແຕ່ແຄມຂອງເຖິງທາດຫຼວງມີປະມານ 62,000 ຄົນ ເນື້ອທີ່ຢູ່ອາໄສທຽບໃສ່ ປີ 1895 ໄດ້ທະວີຄູນຂຶ້ນ 20 ເທົ່າ ປະມານ 560 ເຮັກຕາ ຄວາມໜາແໜ້ນປະມານ 110 ຄົນຕໍ່ເຮັກຕາ.

---

[23] ຕົວເລກສະຖິຕິນີ້ ໄດ້ມີການສົມທຽບກັບຂໍ້ມູນຂອງ Morin, ດຣ ບຸນເຫຼືອມ ສີສຸລາດ ແລະ ນ ໃຈເພັດ ໂດຍເອົາຕົວເລກກົມເປັນຫຼັກ.

[24] ຕາມປຶ້ມ "ຄວາມຊົງຈຳ" ຂອງ ທ ພູມີ ວົງວິຈິດ ອະດີດ ກົມການເມືອງສູນກາງພັກ ພິມປີ 1987 ໜ້າ 25 ວ່າ: ເມືອງວຽງຈັນ ໃນເວລາເຮົາເປັນເຈົ້າເມືອງຢູ່ນັ້ນ ມີ 260 ບ້ານ, 29 ຕາແສງ ແລະ ມີ ປະຊາກອນຢູ່ 114,500ຄົນ. ແນ່ນອນວ່າ ຄົງຈະນັບທັງປະຊາກອນເຂດນອກນຳ.

ຕາມທີ່ຂ້າພະເຈົ້າໄດ້ເຫັນກັບຕາໃນປີ 1940 ນັ້ນ, ປະຊາກອນລາວຈະຢູ່ໃນຕົວເມືອງກໍ້ຕາເວັນຕົກຫຼາຍກ່ວາ, ສ່ວນທາງຕາເວັນອອກ ແຕ່ຄຸ້ມເກົ້າຍອດ ແລະ ເພຍວັດລົງໄປ ມີຄົນຢູ່ໜ້ອຍ. ການຄ້າໃນເວລານັ້ນ ແມ່ນເຂດແຄມຂອງຄຸ້ມວັດຈັນເປັນຈຸດໜັກ ແລະ ເຂດວັດອິງຕື້ ຖະໜົນເຊດຖາທິລາດຈຳນວນໜຶ່ງເທົ່ານັ້ນ. ຊຸມປີ 1952-54 ຂ້າພະເຈົ້າກໍ່ໄດ້ມາຮຽນທີ່ ວິທະຍາໄລ ປາວີ ວຽງຈັນອີກ ຈຶ່ງສັງເກດເຫັນວ່າເຂດການຄ້າໄດ້ພັດທະນາຕາມຖະໜົນເຊດຖາທິລາດ ແຕ່ຄຸ້ມວັດອິນແປງລົງມາຫາຕະຫຼາດເຊົ້າ (ຄຸ້ມນ້ຳພຸ) ແລະ ຕາມຖະໜົນສາຍຕັດເຊັ່ນ: ຖະໜົນປາງຄຳອ້ອມຕະຫຼາດເຊົ້າ(ນ້ຳພຸ), ຖະໜົນເຈົ້າອະນຸວົງລະຫວ່າງຖະໜົນເຊດຖາທິລາດ ແລະ ສາມແສນໄທ, ສ່ວນແຫ່ງອື່ນໆບໍ່ປະກົດເຫັນການຄ້າພໍເທົ່າໃດ, ແຕ່ມະໂຫສົດ ລົງໄປກໍ້ໃຕ້ແມ່ນ້ຳຂອງ ກໍ່ບໍ່ມີການຄ້າຂາຍຫຍັງ, ດັ່ງເຂດນອກກຳແພງເມືອງໄປຫາວັດທາດຝຸ່ນ, ໜອງບອນ, ທາດຫຼວງ ກໍ່ເຊັ່ນດຽວກັນ. ສະນັ້ນ ທີ່ຢູ່ອາໄສຂອງຄົນໃນຕົວເມືອງ: ບໍ່ຮອດ 70% ຂອງເນື້ອທີ່ໃນກຳແພງເມືອງຊໍ້າ ໃນເວລານັ້ນ ການໃຊ້ລົດໂອໂຕ ກໍ່ມີແຕ່ຜູ້ປົກຄອງຝຣັ່ງເທົ່ານັ້ນ, ເທື່ອງໆຈຶ່ງເຫັນລົດມາຄັນໜຶ່ງ, ຄົນສ່ວນມາກແມ່ນຍ່າງ ແລະ ໃຊ້ລົດຖີບເປັນຈຸດໜັກ. ສະນັ້ນ ລົດໂອໂຕ ຄົງ ບໍ່ເຖິງ 15 ຄັນຊໍ້າ ໃນວຽງຈັນເວລານັ້ນ. ຖະໜົນແມ່ນປູຢາງໜ້ອຍ, ມັນແມ່ນ ທາງປູດິນແດງສ່ວນຫຼາຍ, ແຕ່ລະ ມື້ຕ້ອງມີລົດນ້ຳມາທົດທຸກເຊົ້າ.

### *4.8. ລະບົບແຈກຢາຍນ້ຳສະອາດ ແລະ ລະບົບນ້ຳເສຍ*

ໃນປີ 1930 ຝຣັ່ງໄດ້ວາງທໍ່ນ້ຳສະອາດໄວ້ໃຊ້ ໂດຍດູດເອົາຈາກນ້ຳສ້າງໃຫຍ່ 1 ແຫ່ງ ຢູ່ດອນຈັນ, ສ້າງຂົວເຫຼັກໄປຫາດອນຈັນ (ຂົວນີ້ຍັງມີໃຫ້ເຫັນຢູ່) ເພື່ອຮອງຮັບທໍ່ສົ່ງນ້ຳມາຂຶ້ນອ່າງນ້ຳສູງທີ່ບຶງຂະຫຍອງ ແລ້ວຈຶ່ງສົ່ງເຂົ້າມາໃນເມືອງ. ການວາງທໍ່ສົ່ງນ້ຳສະອາດນັ້ນ ແມ່ນເຮັດໄປຫຼາຍປີ, ກ່ອນອື່ນ ຕ້ອງສົ່ງໃຫ້ເຈົ້ານາຍຝຣັ່ງກ່ອນ ຈາກນັ້ນ ຈຶ່ງສົ່ງຕໍ່ໃຫ້ໂຮງຮຽນ, ໂຮງໝໍ ແລະ ຄຸ້ມເຈົ້ານາຍຄົນລາວ. ສ່ວນວັດ ແລະ ຄຸ້ມປະຊາຊົນນັ້ນ ຍັງສືບຕໍ່ໃຊ້ ນ້ຳສ້າງ ແລະ ນ້ຳຂອງຢູ່, ທຸກວັດ ກໍ່ມີນ້ຳສ້າງຂອງຕົນໃຫ້ປະຊາຊົນໄດ້ໃຊ້ນຳ. ໃນກໍລະນີນ້ຳບໍ່ພໍໃຊ້ທາງຣາຊະການ, ເຂົາກໍ່ຈັດລົດນ້ຳໄປສົ່ງພິເສດໃຫ້. ສ່ວນ ຂ້າຣາຊະການ, ນັກຮຽນ ແລະ ປະຊາຊົນ ກໍ່ລົງໄປອາບນ້ຳຂອງ ທີ່ຫາດດອນຈັນ. ດຽວນີ້ ຍັງເຫັນມີນ້ຳສ້າງ 1 ແຫ່ງ ຢູ່ຕະຫຼາດເຊົ້າ (ນ້ຳພຸ) ແລະ ອີກ 1 ແຫ່ງ ຢູ່ໃນເຂດຂອງຜູ້ສຳເລັດຣາຊະການ ຝຣັ່ງ(ທໍຄຳດຽວນີ້) .

ສ່ວນຮ່ອງລະບາຍນ້ຳເສຍນັ້ນ, ເຂົາໄດ້ຂຸດເປັນຮ່ອງເປີດແບບຕົວ U ຕາມແຄມທາງ ເພື່ອຮັບນ້ຳຝົນ ແລະ ນ້ຳເສຍຈາກຄົວເຮືອນ (ເປັນຮ່ອງແບບຊົ່ວຄາວ) ແລ້ວໄຫຼໄປປ່ອງໃສ່ທໍ່ໃຫຍ່ ຫຼື ຮ່ອງໃຫຍ່ທີ່ໄຫຼປ່ອງໃສ່ຮ່ອງທອງ, ຮ່ອງຄູວຽງ. ທໍ່ໃຫຍ່ເຫຼົ່ານີ້ຈະສູງກ່ວາ 1.5 ແມັດ ບາງທໍ່ກໍ່ເປັນຊີມັງ, ບາງທໍ່ກໍ່ດ້ວຍດິນຈີ່, ແລວໄປຂອງມັນແມ່ນຕັດສາກກັບແມ່ນ້ຳຂອງ, ໝາຍຄວາມວ່າ ບໍ່ໃຫ້ນ້ຳເສຍໄຫຼລົງໃສ່ນ້ຳຂອງໃນເຂດເທສະບານເມືອງ, ນ້ຳເສຍນີ້ຈະໄຫຼຜ່ານຮ່ອງຄູວຽງລົງໃສ່ຫ້ວຍຂາວທີ່ກີໂລແມັດ 3 ກ້ອງວຽງຈັນ. ໃນລະດູຝົນ, ເມື່ອນ້ຳຂອງຂຶ້ນມາ ເຂົາຈະອັດປະຕູນ້ຳຫ້ວຍຂາວໄວ້ ແລ້ວນ້ຳເສຍຈະໄຫຼໄປໃສ່ຮ່ອງແກ ແລ້ວໄຫຼໄປຕໍ່ໃສ່ບຶງທາດຫຼວງ ລົງໃສ່ຫ້ວຍເດື່ອ[25].

[25] ຄຳວ່າ ໜອງຈັນ ໃນບາງເອກະສານນັ້ນ, ຄວາມຈິງແລ້ວ ກ່ອນປີ 1950 ລ້ວນແຕ່ແມ່ນທົ່ງນາຂອງຊາວບ້ານດົງປ່າລານ, ບໍ່ເຄີຍມີນ້ຳອັ່ງຈັກເທື່ອ ພໍໄດ້ເຫັນເປັນໜອງ. ຕໍ່ມາໄດ້ມີການຕັ້ງເຕົາເຜົາດິນຈີ່ຂຶ້ນ ແລ້ວຂຸດເປັນໜອງ ແຕ່ປີ 1961ມາ ກໍ່ໄດ້ຍ້າຍຕະຫຼາດເຊົ້າຈາກນ້ຳພຸມາ ຈຶ່ງມີປະຊາຊົນມາ ປຸກ ເຮືອນຊານ ໃສ່ຫຼາຍ ຈົນແອອັດໄປ ໝົດ, ທັງປ່ອຍນ້ຳເສຍລົງ ຈຶ່ງກາຍເປັນໜອງເປິະເປື້ອນ ແລ້ວກໍ່ພາກັນຮ້ອງວ່າ ໜອງຈັນ. ຄວາມຈິງ ໜອງຈັນບໍ່ເຄີຍ ມີຊື່ ໃນ ແຜນທີ່ເກົ່າໆຂອງ ເມືອງວຽງຈັນ ເລີຍ.

### *4.9. ການປົກຄອງຂອງຝຣັ່ງ.*

■ **<u>ກຳລັງປ້ອງກັນ</u>** ເພື່ອປ້ອງກັນຜົນປະໂຫຍດຂອງຝຣັ່ງໃນແຄ້ວນລາວ, ຝຣັ່ງໄດ້ນຳເອົາກອງທະຫານຕ່າງຊາດ (ຄົນຫວຽດນາມ ແລະ ຂະເໝນ) ເຂົ້າມາໃນດິນແດນລາວຫຼາຍກອງພັນ ຕັ້ງຄ້າຍຢູ່ຫຼາຍແຫ່ງເຊັ່ນ: ຫຼວງພະບາງ, ຜົ້ງສາລີ, ຊຽງຂວາງ, ວຽງຈັນ, ຄຳມ່ວນ, ສາລະວັນ ແລະ ຈຳປາສັກ. ຊຶ່ງຄົນລາວເຄີຍເອີ້ນວ່າ ທະຫານດຳ ແລະ ທະຫານແດງ. ຢູ່ພາຍໃນເມືອງຕ່າງໆ ເຂົາໄດ້ນຳເອົາທະຫານສື່ວເຂົ້າມາ, ລ້ວນແຕ່ແມ່ນຄົນຫວຽດນາມທັງນັ້ນ ການປົກຄອງແບບນີ້ ກໍ່ເຮັດໃຫ້ຄົນລາວກຽດຊັງຄົນຫວຽດນາມ. ຕໍ່ຈາກນັ້ນມາ ເຂົາໄດ້ຕັ້ງກອງຕຳຫຼວດຮັກສາເມືອງຕ່າງໆເຊັ່ນ:

- ຕຳຫຼວດຄົນພື້ນເມືອງ (Gardes indigènes) ຢູ່ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບດຽວນີ້,
- ຕຳຫຼວດນະຄອນບານ(Police municipale) ຫຼັງປີ 1935 (ແມ່ນ ຢູ່ຫໍສະໝຸດແຫ່ງຊາດດຽວນີ້),
- ສາລະວັດ (Gendarmerie) ກ່ອນປີ 1935 ຢູ່ຫໍສະໝຸດແຫ່ງຊາດ ແລ້ວຍ້າຍມາຢູ່ບ້ານ ໜອງດ້ວງ,
- ຕຳຫຼວດບ້ານ (Partisans).

ກອງທະຫານ ແລະ ຕຳຫຼວດທັງໝົດນີ້ ລ້ວນແຕ່ຢູ່ໃຕ້ການບັນຊາຂອງຝຣັ່ງທັງໝົດ.

■ **<u>ກົດໝາຍ</u>**: ໃນເບື້ອງຕົ້ນ ຝຣັ່ງໄດ້ອອກກົດໝາຍເປັນພາສາຝຣັ່ງທັງນັ້ນ ໂດຍບໍ່ໄດ້ປຶກສານຳຄົນລາວຈັກຄົນເລີຍ. ມີຄົນລາວເຂົ້າມາຊ່ວຍວຽກຝຣັ່ງຜູ້ທຳອິດ ແມ່ນສະເດັດເຈົ້າເພັດຊະລາດ [26] ມາຊ່ວຍວຽກທ່ານຜູ້ສຳເລັດຣາຊະການຝຣັ່ງໃນປີ1914,ໄດ້ຖືກແຕ່ງຕັ້ງໃຫ້ເປັນເຈົ້າແຂວງຝ່າຍລາວ "ເຈົ້າຣາຊະພະຄີໄນ", ສະເດັດໄດ້ຕໍ່ສູ້ກັບຝຣັ່ງ ເພື່ອຮັກສາສິດຜົນປະໂຫຍດຂອງຄົນລາວໄວ້ ນັບທັງຮີດຄອງປະເພນີ ແລະ ພາສາຂອງຊາດ. ສະເດັດໄດ້ເປັນຜູ້ສະໜັບສະໜູນ ທ່ານ ພູມີ ວົງວິຈິດ, ທ່ານ ມະຫາ ສີລາ ວີຣະວົງ, ທ່ານ ອຈ. ສິນຈິນ(P.Ngin) ແລະ ເຈົ້າອາວາດວັດຕ່າງໆທີ່ຕໍ່ສູ້ແຮງ ກັບພວກນິຍົມຝຣັ່ງ ທີ່ຢາກປ່ຽນຕົວອັກສອນລາວມາເປັນຕົວລາຕິນ. ຈາກນັ້ນຈຶ່ງ ໄດ້ມີກົດໝາຍອອກມາໃໝ່ເປັນພາສາລາວ ເພື່ອປົກປ້ອງພາສາ ແລະ ຮີດຄອງປະເພນີຂອງ ລາວ, ແລະ ຮັກສາບາງສ່ວນຂອງກົດໝາຍແຫ່ງສັກດີນາລາວໄວ້:

- ໃນປີ 1916 ໄດ້ມີດຳລັດຂອງຜູ້ວ່າຣາຊະການສູງສຸດທົ່ວອິນໂດຈີນ ໃຫ້ວຽງຈັນເປັນເທດສະບານໜຶ່ງຂອງລາວ;
- ໃນປີ 1922 ໄດ້ອອກກົດໝາຍແພ່ງ ແລະ ກົດໝາຍວ່າດ້ວຍລັກສະນະຂອງນິຕິກຳ;
- ໃນປີ 1922 ໄດ້ອອກກົດໝາຍອາຍາ;
- ໃນປີ 1923 ໄດ້ອອກກົດໝາຍວ່າດ້ວຍ ການປະຕິບັດກົດໝາຍແພ່ງ;
- ໃນປີ 1927 ໄດ້ມີດຳລັດຂອງ ຜູ້ວ່າຣາຊະການສູງສຸດແຫ່ງອິນດູຈີນ ປະກາດໃຊ້ ກົດໝາຍສະບັບໃໝ່ສະເພາະລາວ;
- ໃນປີ 1930 ໄດ້ ອອກກົດໝາຍວ່າດ້ວຍ ການປ້ອງກັນພະຍາດລະບາດ;

[26] ໃນປີ 1914 ຜູ້ສຳເລັດລາຊະການຝຣັ່ງ F.Garnier ໄດ້ຂຶ້ນໄປຂໍນຳມະຫາອຸປະລາດ ບຸນຄົງ ເພື່ອໃຫ້ສະເດັດເຈົ້າເພັດຊະລາດລົງມາຊ່ວຍວຽກກິດຈະການຄົນພື້ນເມືອງ (Affaires Indigènes) , ໃນປີ 1918 ກໍ່ຂຶ້ນຊັ້ນເປັນເຈົ້າແຂວງຝ່າຍລາວ"ພະຣາຊະພະຄີໄນ", ໃນປີ1919 ຂຶ້ນເປັນອະທິບໍດີກົມປົກຄອງຣາຊະການຝ່າຍລາວ, ທ້າຍປີກໍ່ໄດ້ຖືກແຕ່ງຕັ້ງໃຫ້ເປັນຜູ້ຕາງໜ້າຝ່າຍລາວໃນລັດຖະບານອິນດູຈີນ. ແຕ່ແນວໃດກໍ່ຕາມ ຝຣັ່ງຍັງໄດ້ບັນທຶກລັບໄວ້ວ່າ "ໃຫ້ລະມັດລະວັງຕໍ່ເຈົ້າຊາຍອົງນີ້".

- ໃນປີ 1935 ໄດ້ອອກກົດໝາຍວ່າດ້ວຍ ການປະຕິບັດກົດໝາຍອາຍາ;
- ໃນປີ 1935 ໄດ້ມີດຳລັດ ຂອງຜູ້ວ່າຣາຊະການສູງສຸດແຫ່ງອິນດູຈີນ ອະນຸມັດໃຫ້ວຽງຈັນເປັນກຳແພງນະຄອນໜຶ່ງ;
- ໃນປີ 1943 ໄດ້ວາງລະບຽບການກ່ຽວກັບກຳແພງນະຄອນວຽງຈັນ: ຖະໜົນຫົນທາງ, ການປຸກສ້າງ ແລະ ການຈະລາຈອນ.

ແນວໃດກໍ່ຕາມ, ກົດໝາຍຕ່າງໆ ບໍ່ໄດ້ໃຫ້ຄວາມສະເໝີພາບລະຫວ່າງຄົນຝຣັ່ງ ແລະ ຄົນລາວ.

■ **ສານ ແລະ ຄຸກ**: ໃນ 25 ປີ ເບື້ອງຕົ້ນ ແມ່ນນຳໃຊ້ກົດໝາຍດຽວກັນໃນທົ່ວອິນດູຈີນ, ເນື່ອງຈາກວ່າມີການຕໍ່ສູ້ຂອງປະຊາຊົນ 3 ຊາດ, ຝຣັ່ງຈຶ່ງຄ່ອຍອອກກົດໝາຍສະເພາະແຄ້ວນລາວ ແລະ ແຄ້ວນອື່ນໆ. ແຕ່ແນວໃດກໍ່ຕາມ ຄົນຝຣັ່ງແມ່ນບໍ່ກ່ຽວຂ້ອງກັບກົດໝາຍໃດໆຂອງລາວ. ໃນໄລຍະນີ້ ມີແຕ່ 2 ສານຄື: ສານຝຣັ່ງ ແລະ ສານລາວ. ຄົນຝຣັ່ງຕ້ອງໄປຂຶ້ນສານຝຣັ່ງດ້ວຍກົດໝາຍຝຣັ່ງ, ຄົນລາວ ໄປຂຶ້ນສານລາວດ້ວຍກົດໝາຍຂອງລາວ. ຖ້າຄົນລາວມີຄະດີກັບຄົນຝຣັ່ງ ຕ້ອງໄປຂຶ້ນສານຝຣັ່ງ, ສ່ວນສານຄົນລາວນັ້ນ ກໍ່ມີການຈຳແນກລະຫວ່າງຊົນຊັ້ນສັກດີນາ ແລະ ຄົນທົ່ວໄປ ນັບທັງຄົນຊົນເຜົ່າຕ່າງໆອີກ.

ນັບແຕ່ ປີ 1927 ມາ ແຄວ້ນລາວຈຶ່ງຕັ້ງໃຫ້ມີສານ 3 ຂັ້ນ: ຂັ້ນຕົ້ນປະຈຳບ້ານ, ຂັ້ນກາງປະຈຳເມືອງ ແລະ ຂັ້ນສູງປະຈຳແຂວງ. ຫົວໜ້າສານລ້ວນແຕ່ແມ່ນຜູ້ຈົງຮັກພັກດີຕໍ່ຝຣັ່ງທັງນັ້ນ.

ໃນທຸກໆແຂວງ ແລະ ເມືອງ ໄດ້ເລີ່ມມີຄຸກຄາແລ້ວ, ໂທດຮ້າຍແຮງຕ້ອງໃສ່ຄາຄໍ, ລ່າມໂສ້ໄວ້, ແລະ ຍິງເປົ້າ ເປັນຕົ້ນ ຕໍ່ຜູ້ຮັກຊາດທຳການຕໍ່ສູ້ກັບຝຣັ່ງເຊັ່ນ: ພໍ່ກະດວດ, ເຈົ້າຟ້າປັດໃຈ, ອົງແກ້ວກົມມະດຳ..

■ **ຜູ້ປົກຄອງ**: ເມື່ອຝຣັ່ງເຂົ້າມາປົກຄອງ ອຳນາດແຫ່ງພະເຈົ້າແຜ່ນດິນ ແລະ ກົດໝາຍສັກດີນາກໍ່ຄ່ອຍ ໝົດຄວາມສັກສິດໄປ. ຜູ້ປົກຄອງແຄ້ວນລາວເອີ້ນວ່າ: ຜູ້ສຳເລັດລາຊະການ (Résident Supérieur) ໃນຕໍ່ມາ ປີ 1947 ຮ້ອງວ່າ: ຜູ້ວ່າຣາຊະການ (Gouverneur) ນັ້ນແມ່ນຄົນຝຣັ່ງ, ເຈົ້າແຂວງ, ຫົວໜ້າສານ, ຫົວໜ້າກົມກອງ, ຫົວໜ້າໂຮງຮຽນ, ນາຍຕຳຫຼວດ, ນາຍທະຫານ ກໍ່ລ້ວນແຕ່ແມ່ນຄົນຝຣັ່ງທັງນັ້ນ. (ຍົກເວັ້ນແຕ່ ສະເດັດເຈົ້າ ເພັດຊະລາດ ຜູ້ດຽວ ຊຶ່ງເຂົາແຕ່ງຕັ້ງຂຶ້ນ ເພື່ອເອົາໃຈເຈົ້າຊີວິດຫຼວງພະບາງເທົ່ານັ້ນ).

## *5. ໄລຍະສົງຄາມໂລກຄັ້ງທີ 2 ແລະ ສົງຄາມອິນດູຈີນ(1940-1954)*

ໃນສົງຄາມໂລກຄັ້ງທີ 2, ປະເທດຝຣັ່ງ ຖືກພວກຟາຊິດເຢຍລະມັນ ຍຶດຄອງເອົາຫົວເມືອງຕ່າງໆໄປໝົດ, ອຳນາດອານານິຄົມຈຶ່ງອ່ອນແອລົງ, ສະຫຍາມໄດ້ສວຍໂອກາດ ອີງໃສ່ຟາຊິດຍີ່ປຸ່ນເຂົ້າຍຶດເອົາ 2 ແຂວງກ້ຳຂວາຂອງແມ່ນ້ຳຂອງຄື: ໄຊຍະບູລີ ແລະ ຈຳປາສັກ ໃນປີ 1941.

ເພື່ອເປັນການເອົາໃຈເຈົ້າຊີວິດຫຼວງພະບາງ, ຝຣັ່ງໄດ້ຍົກເອົາແຂວງຫົວຂອງ, ແຂວງຫົວພັນ, ແຂວງ ຊຽງຂວາງ ແລະ ແຂວງ ວຽງຈັນ ໃຫ້ໄປຂຶ້ນກັບຣາຊະອານາຈັກຫຼວງພະບາງ ແລ້ວໃຫ້ແຂວງພາກກາງ ແລະ ພາກໃຕ້ເປັນ ອານານິຄົມຂອງຝຣັ່ງ ຕໍ່ໄປ.

ເນື່ອງຈາກສົງຄາມ, ຝຣັ່ງຂາດລາຍໄດ້ກໍ່ເລີຍສຸມໃສ່ແຕ່ວຽກທະຫານ, ສ່ວນການພັດທະນາສ້າງສາອັນໃດກໍ່ຢຸດໄປໝົດ, ຂ້າຣາຊະການ, ຄູອາຈານ, ນັກຮຽນຕະຫຼອດຮອດ ປະຊາກອນໃນເມືອງວຽງຈັນ ກໍ່ພາກັນອອກການ ຫັນໄປເຮັດນາເຮັດສວນຢູ່ເຂດນອກ. ຟາຊິດຍີ່ປຸ່ນ ໄດ້ເຂົ້າມາຂັບໄລ່ທະຫານຝຣັ່ງ

ໃຫ້ແຕກໜີໄປ ແລ້ວສ້າງຕັ້ງອຳນາດການປົກຄອງລາວແທນ ໃນຕົ້ນປີ 1945. ໃນໄລຍະນີ້ໄດ້ມີຂະບວນຮັກຊາດລາວເປັນລາວ "ລປລ" ເກີດຂຶ້ນໃນເມືອງວຽງຈັນ ແລ້ວຂະຫຍາຍໄປຫຼາຍແຂວງ.

- ວັນທີ 15/8/1945: ຟາຊິດຍີ່ປຸ່ນຖືກປະລາໄຊໃນສົງຄາມໂລກ, ຈຶ່ງເລີ່ມຖອນກຳລັງອອກຈາກລາວ;
- ວັນທີ 23/8/1945: ຊາວວຽງຈັນຫຼາຍພັນຄົນໄດ້ໂຮມຊຸມນຸມມິດຕິງໃຫຍ່ ຢູ່ສະໜາມກິລາແຫ່ງຊາດທີ່ ນະຄອນວຽງຈັນ ເພື່ອຮຽກຮ້ອງເອົາອິດສະຫຼະພາບ;
- ວັນທີ 15/9/1945: ສະເດັດເຈົ້າ ເພັດຊະລາດ ປະມຸກລາວ ປະກາດຄວາມເປັນເອກະພາບແຫ່ງຊາດ;
- ວັນທີ 12/10/1945: ໄດ້ສ້າງຕັ້ງ ລັດຖະບານລາວອິດສະຫຼະ ອັນມີພະຍາ ຄຳມ້າວ ວິໄລເປັນນາຍົກ ແລະ ສະເດັດເຈົ້າ ສຸພານຸວົງ ເປັນລັດຖະມົນຕີ ກະຊວງຕ່າງປະເທດ ແລະ ຜູ້ບັນຊາການສູງສຸດຂອງກອງທັບລາວອິດສະຫຼະ ແລ້ວ ປະກາດຄວາມເປັນເອກະລາດຂອງລາວຕໍ່ໂລກ;
- ແຕ່ວັນທີ 20-22/3/1946: ໄດ້ມີການສູ້ລົບກັນຢ່າງດຸເດືອດຢູ່ທ່າແຂກ ລະຫວ່າງກອງທະຫານລາວອິດສະຫຼະ ໃຕ້ການນຳພາໂດຍກົງຂອງສະເດັດເຈົ້າ ສຸພານຸວົງ ກັບກອງທະຫານຝຣັ່ງໂດຍການອູ້ມຊູຂອງອັງກິດ. ຝຣັ່ງໄດ້ໃຊ້ອາວຸດທັນສະໄໝທາງໜ້າດິນ ແລະ ທາງອາກາດ ຖະລົ່ມເມືອງທ່າແຂກ ຢ່າງປ່າເຖື່ອນ ອັນໄດ້ເຮັດໃຫ້ປະຊາຊົນ ທັງຜູ້ໃຫຍ່ ແລະ ເດັກນ້ອຍລົ້ມຕາຍເປັນຈຳນວນກວ່າ 2000 ຄົນ ແລະ ສະເດັດເຈົ້າ ສຸພານຸວົງເອງ ກໍ່ຖືກບາດເຈັບ ຢ່າງສາຫັດ;
- ວັນທີ 24/4/1946: ກອງທັບຝຣັ່ງໄດ້ເຂົ້າຕີເອົາເມືອງວຽງຈັນ, ລັດຖະບານລາວອິດສະຫຼະຈຶ່ງໜີໄປລີ້ໄພຢູ່ປະເທດໄທ. ເມື່ອຝຣັ່ງໄດ້ເຂົ້າມາແລ້ວ ກໍ່ໄດ້ໄປຊອກຫາເອົາ ຜູ້ທີ່ຍັງຈົງຮັກພັກດີຕໍ່ເຂົາເຂົ້າມາປົກຄອງບ້ານເມືອງອີກ;
- ວັນທີ 27/8/1946: ຝຣັ່ງໄດ້ຮັບຮູ້ ຣາຊະອານາຈັກລາວ ເປັນຜືນແຜ່ນດິນອັນດຽວໃນວົງສຳພັນຝຣັ່ງເສດ ແລະ ມີປະມຸກຜູ້ດຽວຄື: ເຈົ້າສີສະຫວ່າງວົງ ຕາມສັນຍາຊົ່ວຄາວ (Modus Vivendi), ແລ້ວຈັດແບ່ງອິນດູຈີນອອກເປັນ 3 ລັດ: ລາວ, ຫວຽດນາມ ແລະ ກຳພູຊາ;
- ແຕ່ປີ1946-1954 ຈັກກະພັດອາເມລິກາໄດ້ຄ່ອຍແຊກແຊງເຂົ້າມາເພື່ອປິດລ້ອມຈີນ ປາບປາມຂະບວນການຮັກຊາດໃນອິນດູຈີນ, ສ່ວນຝຣັ່ງກໍ່ກຽມຖອນຕົວອອກຈາກອິນໂດຈີນເທື່ອລະກ້າວ;
- ວັນທີ15/12/1946:ໄດ້ເລືອກຕັ້ງສະພາ ຮ່າງລັດຖະທຳມະນູນລາວ ຢູ່ໃນວົງສຳພັນກັບຝຣັ່ງເສດ (Union Française);
- ວັນທີ15/3/1947: ໄດ້ສ້າງຕັ້ງລັດຖະບານແຫ່ງ ຣາຊະອານາຈັກລາວ ໂດຍແມ່ນເຈົ້າ ສຸວັນນະລາດ ເປັນນາຍົກ ລັດຖະມົນຕີ ຂອງລັດຖະບານລາວໃນວົງສຳພັນຝຣັ່ງເສດ;
- ວັນທີ 11/5/1947: ປະກາດໃຊ້ລັດຖະທຳມະນູນແຫ່ງ ຣາຊະອານາຈັກລາວ;
- ເດືອນ ສິງຫາ 1947 ໄດ້ເລືອກຕັ້ງຜູ້ແທນລາສະດອນຊຸດທຳອິດ;
- ວັນທີ 18/3/1948: ປະກອບລັດຖະບານແຫ່ງ ຣາຊະອານາຈັກລາວ ໂດຍແມ່ນ ເຈົ້າ ບຸນອູ້ມເປັນນາຍົກລັດຖະມົນຕີ; ສະພາຜູ້ແທນລາສະດອນ ເວລານີ້ ຕັ້ງຢູ່ທີ່ທຳນຽບຂອງຜູ້ສຳເລັດລາຊະການຝຣັ່ງ(ໃນເຂດຫໍຄຳດຽວນີ້).
- ມາຮອດ ປີ 1954 ຝຣັ່ງກໍ່ຖືກປະລາໄຊທີ່ ດຽນບຽນຟູ ແລ້ວກໍ່ຍອມເຊັນສັນຍາຖອນທະຫານ

ຂອງຕົນ ອອກຈາກອິນດູຈີນ ແຕ່ແບ່ງຫວຽດນາມເປັນ 2 ພາກ, ແບ່ງລາວເປັນ 2 ເຂດຄື: ແຂວງຫົວພັນ ແລະ ຜົ້ງສາລີ ໃຫ້ຝ່າຍແນວລາວຮັກຊາດຢູ່ຊົ່ວຄາວ ຊຳຊາເຕົ້າໂຮມປະເທດຊາດ ແລະ ສ່ວນເຫຼືອໃຫ້ຝ່າຍ ຣາຊະອານາຈັກປົກຄອງ.

ສັງລວມວ່າ ໃນໄລຍະ 1940-54 ຝຣັ່ງບໍ່ໄດ້ສ້າງສາຫຍັງຫຼາຍໃນລາວ, ຍ້ອນເສຍຫາຍຫຼາຍໃນສົງຄາມໂລກຄັ້ງທີ 2, ຕໍ່ມາກໍ່ມີຂະບວນກູ້ຊາດຂອງລາວລະເບີດຂຶ້ນ ແລ້ວສົມທົບກັບຂະບວນປົດປ່ອຍຊາດຂອງຫວຽດນາມ ແລະ ກຳພູຊາ ຈົນມີໄຊຊະນະໃນຂັ້ນສຸດທ້າຍ ຈຶ່ງເຮັດໃຫ້ສາກົນຮັບຮູ້ເອກະລາດຢ່າງເຕັມສ່ວນຂອງປະເທດລາວ ແລະ ຮັບຮູ້ຂະບວນລາວອິດສະຫຼະອັນລືຊື່ວ່າ "ຝ່າຍປະເທດລາວ ຫຼື ແນວລາວຮັກຊາດ" ໃຕ້ການນຳພາຂອງ ພັກຄອມມູນິດອິນດູຈີນໃນເມື່ອກ່ອນ ແລ້ວແຍກອອກມາເປັນ ***ພັກປະຊາຊົນລາວ*** ໃນປີ 1955 (ຊຶ່ງແມ່ນພັກປະຊາຊົນປະຕິວັດລາວໃນດຽວນີ້).

## 6. ສັງລວມການຂະຫຍາຍຕົວຂອງເມືອງວຽງຈັນໃນສະໄໝອານານິຄົມ.

1. ໄລຍະທຳອິດ (1893-1896): ຝຣັ່ງຍັງບໍ່ທັນຕັດສິນໃຈເທື່ອວ່າ ຈະຕັ້ງເມືອງເອກຂອງແຄວ້ນລາວຢູ່ທີ່ໃດ. ພຽງແຕ່ເກນເອົາ ປະຊາຊົນມາຖາງປ່າໃນເມືອງໃຫ້ກ້ຽງ ແລ້ວປຸກທີ່ພັກແບບຊົ່ວຄາວ. ໃນເວລານີ້ ໃນເມືອງວຽງຈັນ ມີປະຊາຊົນລາວຢູ່ປະມານ 1.800 ຄົນ ສ່ວນມາກຈະຢູ່ເຂດນອກ.
2. ໄລຍະທີ 2 (1897-1914): ລັດຖະບານຝຣັ່ງ ໄດ້ຕັດສິນໃຈເອົາ ເມືອງວຽງຈັນເປັນເມືອງເອກຂອງແຄວ້ນລາວແລ້ວ ຈຶ່ງມີການນຳເອົາຄົນຫວຽດນາມເຂົ້າມາ ເພື່ອກໍ່ສ້າງສຳນັກງານ ແລະເຮືອນພັກແບບຖາວອນ, ສ້າງຖະໜົນຫົນທາງ, ໂຮງຮຽນ, ໂຮງໝໍ, ຄຸກ. ປະຊາຊົນລາວກໍ່ເຂົ້າມາບູຣະນະ ວັດຮ້າງທີ່ຖືກສະຫຍາມທຳລາຍ. ໃນເວລານີ້ ປະຊາກອນມີປະມານ 3.000 ຄົນຊຶ່ງ 1/3 ແມ່ນຄົນຫວຽດນາມ.
3. ໄລຍະທີ 3 (1914-1940): ຝຣັ່ງໄດ້ນຳເອົາຊ່າງຈາກຫວຽດນາມເຂົ້າມາອີກ ແລ້ວທຳການຟື້ນຟູເມືອງວຽງຈັນ ຢ່າງຄົບຊຸດ: ແບ່ງເຂດທີ່ປຸກສ້າງ, ກຳນົດຜັງເມືອງ, ກຳນົດພາສີທີ່ດິນ, ຈັດສັນທີ່ດິນເປັນຕອນ ເພື່ອໃຫ້ທາງການອານານິຄົມ ແລະ ໃຫ້ປະຊາຊົນລາວ, ຕັດເສັ້ນທາງໃໝ່, ຕິດຕັ້ງສາຍໄຟຟ້າ ແລະ ໂທລະສັບ, ສ້າງລະບົບນ້ຳສະອາດ, ສ້າງໂຮງຮຽນ ປະຖົມ ແລະສາທາລະນຸປະໂພກຂຶ້ນ. ຝ່າຍປະຊາຊົນ ກໍ່ພ້ອມກັນປຸກເຮືອນຖາວອນ ທັງປະຕິສັງຂອນປູຊະນີຍະສະຖານໄປນຳພ້ອມ. ພິເສດແມ່ນໄດ້ປະຕິສັງຂອນຄືນ ພະທາດຫຼວງ ໃນປີ 1930 ແລະຫໍພະແກ້ວໃນປີ 1936, ປະຊາກອນໃນຕົວເມືອງໃນປີ 1940 ມີປະມານ 23,260 ຄົນ.
4. ໄລຍະທີ 4 (1940-1954): ແມ່ນໄລຍະສົງຄາມໂລກຄັ້ງທີ 2 ຕໍ່ໃສ່ສົງຄາມກູ້ຊາດຂອງປະຊາຊົນອິນດູຈີນ, ໂດຍປະຕິບັດຕາມສັນຍາເຊີແນວ ປີ 1954 ລັດຖະບານຝຣັ່ງໄດ້ໂອນອຳນາດໃຫ້ແກ່ລັດຖະບານແຫ່ງຣາຊະອານາຈັກລາວ ຈຶ່ງບໍ່ຄ່ອຍມີການກໍ່ສ້າງຫຍັງຂຶ້ນຫຼາຍ, ສ່ວນຄົນຫວຽດນາມ ກໍ່ກັບຄືນປະເທດເປັນສ່ວນໃຫຍ່; ສ່ວນປະຊາກອນໃນເມືອງໃນເວລານີ້ ມີປະມານ 45,000 ຄົນ.

# ບັນຊີຊື່ຖະໜົນໃນວຽງຈັນ

| ¤ ຊື່ດຽວນີ້ ¤ | ¤ ຊື່ເມື່ອກ່ອນ ¤ |
|---|---|
| ➤ ຖະໜົນສາຍຕັ້ງ: | ➤ Rues Transversales |
| 1. ຖະໜົນເຈົ້າຟ້າງຸ່ມ | 1. Quai A.Pavie + Quai F.Garnier |
| 2. ຖະໜົນເຊດຖາທິລາດ | 2. Rue Maréchal Joffre + Ml Foch |
| 3. ຖະໜົນສາມແສນໄທ | 3. Rue G.Mahé + Ernest Outray |
| 4. ຖະໜົນໄຜ່ໜາມ | 4. Rue Dr Lajus |
| 5. ຖະໜົນຄູວຽງ | 5. Boulevard circulaire |
| ➤ ຖະໜົນສາຍຕັດ | ➤ Rues perpendiculaires |
| 1. ຖະໜົນຂຸນບູລົມ | 1. Boulevard D.de Lagrée |
| 2. ຖະໜົນເຈົ້າອະນຸວົງ | 2. Rue Chao Anouvong |
| 3. ຖະໜົນຝຣັ່ງຊີວົງ | 3. Rue François Ngin |
| 4. ຖະໜົນໜໍ່ແກ້ວກຸມມານ | 4. Rue Colonel Tournier |
| 5. ຖະໜົນມັນທາຕຸລາດ | 5. Rue Pierre Morin |
| 6. ຖະໜົນປາງຄໍາ | 6. Rue du Marché ou Tafforin |
| 7. ຖະໜົນຈັນທະກຸມມານ | 7. Rue Général Beyle |
| 8. ຖະໜົນລ້ານຊ້າງ | 8. Avenue de France |
| 9. ຖະໜົນມະໂຫສົດ | 9. Rue Dr Roufflandes |
| 10. ຖະໜົນສັກກະລິນ | 10. Rue Dr Brengue |

**ສ່ວນຖະໜົນນ້ອຍໃນຄຸ້ມເຈົ້າອານຸ ຍັງໃສ່ຊື່ເດີມຄື:**

- ຖະໜົນໄຊງ່ອນ
- ຖະໜົນຣາຍຟອງ
- ຖະໜົນເວ້
- ຖະໜົນ ຮ່າໂນຍ
- ຖະໜົນພະນົມເປັນ
- ຖະໜົນແຫ່ງບຸນ
- ຖະໜົນໄຜ່ໜາມ
- ຖະໜົນດຸຍປຸຍ
- ຖະໜົນເລກີເຮືອງ

## ບັນຊີເຈົ້າແຂວງຝຣັ່ງໃນ ນະຄອນຫຼວງວຽງຈັນ

| ປີ | ຊື່ | |
|---|---|---|
| 1893-1894 | Lugan | ທ່ານ ລູການ |
| 1894-1901 | P.Morin | - ໂມແຣງ |
| 1901-1902 | P.Grand | - ກຣັງ |
| 1902 | Rabourdin | - ຣາບູກແດງ |
| 1902 | G.Maspero | - ມາສເປີໂຣ |
| 1902 | G.Salé | - ຊາເລ |
| 1902-1903 | P.Cousin | - ກູແຊງ |
| 1903-1905 | P.Salabelle | - ຊາລາແບລ |
| 1906 | P.Sérizier | - ເຊຣີຊີເອ |
| 1906-1908 | A.Damprum | - ດາມປຣັມ |
| 1908 | H.Daugeard | - ໂດຊາກ |
| 1908-1909 | P.Sérizier | - ເຊຣີຊີເອ |
| 1909-1910 | Arrighe | - ອາຣີເກີ |
| 1910-1911 | A. Silvestre | - ຊິນແວສ |
| 1911 | G. Servoise | - ແຊກວິສ |
| 1912 | V. Nempont | - ແນມປົງ |
| 1912-1914 | H.Klein | - ແຫຼນ |
| 1914-1915 | B.Bonnemain | - ບອນແມງ |
| 1916-1918 | R.Pazat | - ປາຊາດ |
| 1918-1921 | P.Giran | - ກີຣານ |
| 1921-1924 | A.Baudenne | - ໂບແດນ |
| 1924-1927 | M.Barelle | - ບາແຣລ |
| 1927-1930 | H.Pommez | - ໂປແມສ |
| 1931-1933 | R.Mayer | - ມາແຢກ |
| 1933 | M.A. Surleau | - ຊວກໂລ |
| 1933-1936 | A.Torel | - ໂຕແຣລ |
| 1936-1939 | J.P.Parisot | - ປາຣີໂຊ |
| 1936-1940 | H.Nonom | - ໂນໂນມ |
| 1940-1941 | J.P.Parisot | - ປາຣີໂຊ |
| 1941-1942 | V.Bélisaire | - ເບລີແຊ |
| 1942 | L.Loubet | - ລູເບ |

ແຕ່ປີ 1947 ມາ ບໍ່ມີ ເຈົ້າແຂວງຝຣັ່ງ ແຕ່ມີຂ້າຫຼວງຂອງຝຣັ່ງ(Commissaire de la Republique ) ມາປະຈຳຢູ່ ວຽງຈັນເຊັ່ນ:Pereira, Michaudel ເປັນຕົ້ນ.

# ຄຳອະທິບາຍແຜນທີ່ງປະກອບມາ

**ແຜນທີ່ເບີ 1** : ແມ່ນແຜນທີ່ຂອງ Blévec ປີ 1895 , ຈະເຫັນແຈ້ງເມືອງຮ້າງວຽງຈັນພ້ອມດ້ວຍຊາກສະຫຼັກຫັກພັງຂອງວັດວາອາຮາມ, ເຮືອນຊານ, ປູຊະນີຍະສະຖານ ແລະ ກຳແພງເມືອງ (ປ້ອມປະການ ແລະ ປະຕູເມືອງ)

**ແຜນທີ່ ເບີ 2** : ຂອງ Lajonquière (1901) ໄດ້ເຫັນຕາໜ່າງຖະໜົນສາຍຕັ້ງ ແລະ ສາຍຂວາງໃນນະຄອນຫຼວງວຽງຈັນ ສະໄໝອານາຈັກລາວລ້ານຊ້າງ.

**ແຜນທີ່ເບີ 3** : ແຜນທີ່ເດີມຂອງ Kliéber (1905) ນອກຈາກມີກຳແພງເມືອງ, ຖະໜົນຫົນທາງ ແລະວັດຮ້າງແລ້ວຍັງໄດ້ກຳນົດອອກ ເຂດຂອງອຳນາດອານານິຄົມ, ເຂດຂອງວັດ, ເຂດຂອງຊຸມຊົນ, ເຂດທົ່ງນາ, ເຂດຊຸ່ມ, ໜອງບຶງ,ຮ່ອງນ້ຳໃຫ້ເປັນບ່ອນອີງໃນການພັດທະນາຕົວເມືອງໃນຊຸມປີຕໍ່ມາ. ນອກນີ້ ຍັງລະບຸໄວ້ວ່າ ເຮືອນແຕ່ລະຫຼັງເປັນເຮືອນປະເພດໃດ, ຖືວ່າເປັນແຜນທີ່ຄົບຖ້ວນລະອຽດ ແລະ ໄດ້ມາດຕະຖານດີສົມຄວນ.

ແຜນທີ່ N3a ແມ່ນການແບ່ງເຂດລະຫວ່າງການປົກຄອງອານານິຄົມ ແລະ ຊຸມຊົນ ໃນປີ1905

ແຜນທີ່ N3b ແມ່ນການແບ່ງເຂດຄືນໃໝ່ລະຫວ່າງການປົກຄອງອານານິຄົມ ແລະ ຊຸມຊົນ ໃນປີ 1910.

**ແຜນທີ່ເບີ 4** : ແມ່ນແຜນທີ່ຂອງ H.Parmentier ປີ 1912 , ໄດ້ບັນທຶກວັດຮ້າງຕ່າງໆໃນວຽງຈັນ.

**ແຜນທີ່ເບີ 5** : (N5a) ແມ່ນຂອງ Quilici ແຕ້ມໃນປີ 1912 ແລະ ໄດ້ອະນຸມັດຈາກຜູ້ສຳເລັດລາຊການຝຣັ່ງ Noé , ເຫັນແຈ້ງການຈັດສັນທີ່ດິນໃຫ້ຝ່າຍປົກຄອງອານານິຄົມ, ຊຸມຊົນ, ວັດ ແລະສາທາລະນະປະໂຫຍດອື່ນໆ. ແຜນຜັງສ້າງຖະໜົນເຫັນຈະແຈ້ງ ເປັນຕົ້ນແມ່ນຖະໜົນຫຼວງພະບາງ, ຖະໜົນເຊດຖາທິລາດ(Ml Joffre) , ຖະໜົນສາມແສນໄທ (G.Mahé), ຖະໜົນຂຸນບູລົມ ແລະ ຄູວຽງ, ຖະໜົນໃຫຍ່ລ້ານຊ້າງ(Avenue de France ) ສ່ວນແຜນທີ່ (N5b) ແມ່ນຈັດເຂດກໍ່ສ້າງ ຫ ີ່ໃຊ້ງົບປະມານຄັງຫຼວງ, ຄັງທ້ອງຖິ່ນ ແລະ ຄັງເມືອງເຂົ້າໃນ ການພັດທະນາຕົວເມືອງ.

**ແຜນທີ່ເບີ 6** : ແມ່ນຜັງເມືອງທີ່ຈະສ້າງໃນຊຸມປີ 1917-1929 ຊຶ່ງຊີ້ໃຫ້ເຫັນ : ເຂດໃຈກາງ ເມືອງ, ເຂດຂະຫຍາຍເທສະບານອອກໄປ, ເຂດຊຸມຊົນ : ລາວ, ຫວຽດນາມ ແລະ ຈີນ, ເຂດຊານເມືອງ, ເຂດຈະເຂົ້າເປັນເທສະບານໃນຕໍ່ໄປ, ຖະໜົນທີ່ລົບລ້າງອອກ, ການຂະຫຍາຍເສັ້ນທາງຄູວຽງ ແລະ ອື່ນໆ.

**ແຜນທີ່ເບີ 7**: ແມ່ນແຜນທີ່ປີ 1920 ( ບໍ່ຮູ້ວ່າໃຜເປັນຜູ້ແຕ້ມ) ມັນແມ່ນແຜນທີ່ຂະຫຍາຍຕົວເມືອງ ໄປແຕ່ລະໄລຍະ ອາດຈະເປັນໄລຍະ 7 ຫລື 10 ປີ. ໄດ້ແບ່ງເປັນເຂດ ແລະ ອັດຕາສະເລ່ຍພາສີທີ່ດິນພ້ອມ: (ໃຫ້ເບິ່ງແຜນທີ່ ເບີ 7a ຈະເຫັນແຈ້ງກ່ວາ)

**ເຂດ1** : ແມ່ນເຂດໃຈກາງຂອງຕົວເມືອງທີ່ຈະຕ້ອງຂະຫຍາຍອອກໄປເຖິງປີ 1930, ຄ່າພາສີທີ່ດິນແມ່ນ 1 ກີບ / 1ມ$^2$ ( ກີບອິນດູຈີນ)

**ເຂດ 2** : ມີ 2 ເຂດຄື : ແຕ່ຫາດຂາວລົງເຖິງຫ້ວຍຂາວແຄມຂອງ ແລະ ເຂດເໜືອນ້ຳປ່າສັກ ບ້ານສີຖານລົງມາຮອດຖະໜົນຂຸນບູລົມ ຈະຕ້ອງພັດທະນາເຖິງປີ 1940 , ຄ່າພາສີທີ່ດິນແມ່ນ 0.60 ກີບ/$ມ^2$.

**ເຂດ 3** : ແມ່ນເຂດຕາເວັນຕົກແຕ່ສີຖານເຖິງວັດໄຕແຄມຂອງ, ຈະຕ້ອງພັດທະນາໃນປີ 1950 ໃຫ້ມັນຈອດໃສ່ກັນ. ຄ່າພາສີທີ່ດິນແມ່ນ 0.30 ກີບ/$ມ^2$.

**ເຂດ 4** : ແມ່ນເຂດຕາເວັນອອກ ແຕ່ຫາດຂາວເຖິງຫ້ວຍຂາວເບື້ອງຄູວຽງ ເປັນເຂດດິນຊຸ່ມ ແລະ ໜອງ. ຄ່າພາສີທີ່ດິນແມ່ນ 0.10 ກີບ/$ມ^2$.

**ເຂດ 5** : ແມ່ນເຂດນອກກຳແພງເມືອງອອກໄປປະມານ 1 ກິໂລແມັດ ເລີ່ມແຕ່ບ້ານວັດໄຕ, ບ້ານ ໜອງປາໄນ, ບ້ານ ສີຫອມ, ບ້ານ ຂົວຫຼວງ, ບ້ານ ສະຫວ່າງ, ບ້ານ ຫັດສະດີ, ຕະຫຼາດເຊົ້າ, ບ້ານ ໜອງຈັນ, ບ້ານ ດົງປ່າລານ, ບ້ານ ໂພນສະຫວັນ,. . . ຄ່າພາສີທີ່ດິນແມ່ນ 0.05 ກີບ/$ມ^2$.

**ເຂດ 6** : ແມ່ນເຂດຊານເມືອງວຽງຈັນ, ຄ່າພາສີທີ່ດິນແມ່ນ 0.01 ກີບ/$ມ^2$.

**<u>ແຜນທີ່ເບີ 8a</u>** : ແມ່ນແຜນທີ່ຂອງ Mariage ປີ 1930, ເປັນແຜນທີ່ໆຂະຫຍາຍຕົວເມືອງໄປທິດຕາເວັນຕົກ: ບ້ານ ສີຖານ, ບ້ານ ສີຫອມ, ບ້ານ ຂົວຫຼວງ, ບ້ານຫົວເມືອງ ໃຫ້ຕິດຈອດໃສ່ກັນ ພ້ອມດ້ວຍຕາໜ່າງເສັ້ນທາງ ແລະ ຂົວທີ່ຈະຕ້ອງສ້າງ, ມີຫ້ງອ່າງນ້ຳສູງຢູ່ໃຈກາງ, ລະບົບວາງທໍ່ລະບາຍນ້ຳ. ມັນເປັນແຜນການທີ່ໃຫຍ່ເກີນໄປ ແລະ ບໍ່ເໝາະກັບສະພາບການ , ສຸດທ້າຍ ກໍ່ປະຕິບັດບໍ່ໄດ້ ເພາະຂາດງົບປະມານ.

**<u>ແຜນທີ່ເບີ 8b</u>** : ແມ່ນແຜນທີ່ຂອງ Mariage ປີ 1930 ໄດ້ຈຳແນກໃຫ້ເຫັນຕຶກໃດໄດ້ສ້າງກ່ອນປີ 1914, ແລະ ຕຶກໃດສ້າງລະຫວ່າງປີ 1914-1929. ພ້ອມນີ້ ກໍ່ເຫັນໄດ້ເຂດຂອງວັດ, ຂອງເມືອງອານານິຄົມ, ຂອງຊຸມຊົນ, ພ້ອມດ້ວຍຊື່ຂອງອາຄານອານານິຄົມເປັນພາສາຝຣັ່ງ. ປະຊາຊົນໄດ້ປຸກສ້າງເຮືອນຊົ່ວຄາວ ແລະ ຖາວອນອ້ອມວັດຈັນ, ວັດອິນແປງ, ວັດອົງຕື້, ວັດມີໄຊ ແລະ ວັດຫາຍໂສກ. ສ່ວນຄົນຫວຽດນາມຈະຈຸ້ມກັນຢູ່ຄຸ້ມເຈົ້າອານຸ ແລະ ຄຸ້ມສີເມືອງ. ຄົນຈີນ ຈະປຸກເຮືອນລຽບຕາມແຄມຂອງເປັນຕຶກ 1 ແລະ 2 ຊັ້ນກໍ່ດິນຈີ່, ມຸງດິນຂໍ ແຕ່ໃຕ້ປາກປ່າສັກລົງມາ ເຖິງວັດຊຽງຍືນ ແລະ ມີແຜນທີ່ຂອງ Mariage ອີກແຜ່ນໜຶ່ງໃນປີ 1931 ຊຶ່ງວາງຕາຄ່າຍ ໄຟຟ້າ ແລະ ຕະຄອງຮ່ອງນ້ຳໃນຕົວເມືອງ (ເປັນອີກແຜນທີ່ໜຶ່ງຕ່າງຫາກ).

**<u>ແຜນທີ່ເບີ 9</u>** : ບໍ່ຮູ້ວ່າໃຜແຕ້ມໃນຊຸມປີ 1940 ຢັ້ງຢືນໃຫ້ເຫັນສະພາບຕົວເມືອງ ໃນປີນັ້ນ ແຜນທີ່ໄດ້ແບ່ງເປັນຫຼາຍເຂດເຊັ່ນ: 1.ເຂດເທສະບານ, 2.ເຂດຍ່ອມຂຶ້ນກັບເທສະບານ, 3.ເຂດຂະຫຍາຍເທສບານ, 4. ເຂດທີ່ມີຊຸມຊົນໜ້ອຍ ແລະ 5.ເຂດບໍ່ແມ່ນເທສະບານ.

**<u>ແຜນທີ່ເບີ 10</u>** : ແມ່ນແຜນທີ່ຂະຫຍາຍຕາໜ່າງເສັ້ນທາງໃນຕົວເມືອງລະຫວ່າງປີ 1900-1954.

- ລະຫວ່າງປີ 1900-1920 ແມ່ນສ້າງຄືນຖະໜົນສາຍຕັ້ງ 3 ເສັ້ນ ໃນຕົວເມືອງ ແຕ່ປາກປ່າສັກລົງເຖິງຫາດຂາວ, ແລ້ວຕັດຖະໜົນຫຼວງພະບາງຜ່າດິນວັດອິນແປງຂຶ້ນໄປເປັນ ຖະໜົນສີຫອມ ໄປອອກໃສ່ (ໂຮງແຮມໂນໂວແຕນ) ຕໍ່ໃສ່ຖະໜົນ ຫຼວງພະບາງ(ຖະໜົນສຸພານຸວົງ). ສ່ວນຖະໜົນ ສາຍຂວາງບາງເສັ້ນກໍ່ໄດ້ສ້າງໄປແຕ່ລະປີຄຽງຄູ່ກັນ. ສ່ວນໃນຄຸ້ມເຈົ້າອະນຸກໍ່ໄດ້ຕັດເປັນຕາຜ້າໄວ້ຮຽບຮ້ອຍແລ້ວ.

- ລະຫວ່າງປີ 1921-1940 ມີການກໍ່ສ້າງ: ຖະໜົນລ້ານຊ້າງແຕ່ຕະຫຼາດເຊົ້າ ໄປທາດຫຼວງ ແລະ ໄປໂພນເຄັງ, ຖະນົນຄູວຽງ, ຖະໜົນທ່າເດື່ອ ແຕ່ວັດສີເມືອງຮອດຈີ່ນາຍໂມ້, ຕັດໃໝ່ ຖະໜົນຫຼວງພະບາງ ແຕ່ວັດອິນແປງໄປຜ່ານ ບ.ຕາກແດດ, ບ.ສີຖານໄປພົບກັບເສັ້ນເກົ່າທີ່ (ໂຮງແຮມໂນໂວແຕນ = ຊ້າງ 3 ຫົວ) ແລະ ບູລະນະຖະໜົນສາຍຕັດໃນຕົວເມືອງແຕ່ລະເສັ້ນ ໄປພ້ອມ.

- ລະຫວ່າງປີ 1940-1954 ແມ່ນສ້ອມແປງ ແລະ ປູຢາງທາງພາຍໃນກຳແພງເມືອງປະມານ 50% ແລະ ສ້າງທາງຊອຍໃນຄຸ້ມທາດຂາວ ແລະ ສີເມືອງ.

<u>**ແຜນທີ່ເບີ 11**</u> : ສ້າງໃນປີ 1953 ເຫັນແຈ້ງສະພາບຖະໜົນ ແລະ ເຄຫາສະຖານໃນໄລຍະນີ້

<u>ໝາຍເຫດ</u> : ແຜນທີ່ໆໃສ່ເຄື່ອງໝາຍ HT ລ້ວນແຕ່ແມ່ນເອກະສານຂອງ ດຣ.ບຸນເຫຼື້ອມ ສີສຸລາດ ປະທານ ສະພາວິທະຍາສາດ ຂອງກະຊວງໂຍທາທິການ ແລະ ຂົນສົ່ງປະກອບໃຫ້. ເປັນເອກະສານ ສ່ວນໜຶ່ງ ທີ່ເພິ່ນໄດ້ຄົ້ນຄ້ວາ ແລະ ໃສ່ສີໃຫ້ແຈ້ງຕື່ມ ປະກອບໃສ່ບົດວິທະຍານິພົນ ເພື່ອປ້ອງກັນເອົາປະລິນຍາເອກດ້ານຜັງເມືອງ ທີ່ປະເທດຝຣັ່ງ ໃນປີ 2003, ແຜນທີ່ເຫຼົ່ານັ້ນ ໄດ້ມາປັບປຸງ ຄືນໃໝ່ໃຫ້ເໝາະສົມ ເປັນພາສາລາວ ແລະໃກ້ ຕົວຈິງ ຕື່ມ. ຈຶ່ງຂໍສະແດງຄວາມຂອບໃຈ ຕໍ່ເພິ່ນ ຫຼາຍໆໃນໂອກາດນີ້ດ້ວຍ.

No.1 ແຜນທີ່ຂອງ Le Blévec 1895



## No.2 ແຜນທີ່ຂອງ Lajonquière 1901



## No.3 ແຜນທີ່ຂອງ Kliéber ສະບັບເດີມ 1905

Carte: H-T N.2a



# No.3a ແຜນທີ່ຂອງ Kliéber 1905

Carte: H-T N.2b



## No.3b ແຜນທີ່ຂອງ Kliéber 1910

Carte: H-T N.2c



No.4 ແຜນທີ່ຂອງ H.Parmentier 1912



**No.5a ແຜນທີ່ຂອງ Quilici 1912** **Carte: H-T N.4b**



# No.5b ແຜນຄຸ້ມຄອງງົບປະມານກໍ່ສ້າງຂອງ Quilici 1912

**Carte: H-T N.4c**



# No.6 ແຜນທີ່ເມືອງວຽງຈັນ (1917-1929)

Carte: H-T N.6b



No.7 ແຜນທີ່ຂະຫຍາຍຕົວເມືອງວຽງຈັນສະບັບເດີມ ປີ 1920 (ພ້ອມດ້ວຍອັດຕາເກັບພາສີທີ່ດິນໃນແຕ່ລະເຂດ)



## No.7a ອະທິບາຍແຜນທີ່ N.7



No.8a ແຜນທີ່ຂອງ Mariage 1930 (ແຜນຂະຫຍາຍຕົວເມືອງ)

Carte: H-T 7b



## No.8b ແຜນທີ່ຂອງ Mariage 1930 (ແຜນຈຳແນກຕຶກກໍ່ສ້າງ)



No.9 ແຜນທີ່ເມືອງວຽງຈັນ 1940 (ຈຳແນກເຂດໃນເທດສະບານ)




No 10
TSF
Terrain en défrichement
Forêt
Rizières
Indigène
B. That Khao
ຜັງເມືອງວຽງຈັນ
PLAN DE LA VILLE DE VIENTIANE
(ການປູລະນະຖະໜົນຫົນທາງ 1900-1940)
(ດອນຈັນ)
ເຄື່ອງໝາຍ
ຖະໜົນສ້າງລະຫວ່າງປີ 1900-1920
ຖະໜົນສ້າງລະຫວ່າງປີ 1920-1940
ຖະໜົນສ້າງຫຼັງປີ 1940
ວັດ
ຖະໜົນມີມາແຕ່ເດີມ
ລະຫວ່າງປີ 1947-1954 ສ່ວນມາກແມ່ນສ້ອມແປງແລະປູຢາງໃສ່, ມາຮອດປີ1954 ໃນເມືອງມີຖະໜົນປູຢາງບໍ່ເຖິງ 50%

## No.11 ແຜນທີ່ເມືອງວຽງຈັນ 1953

**Carte: H-T N.11**



## ເອກະສານອ້າງອີງຂອງເຫຼັ້ມ 3


1. ປະຫວັດສາດລາວ ຂອງກະຊວງ ຖະແຫຼງຂ່າວ ແລະ ວັດທະນະທຳ ຂຽນໂດຍ ດຣ ສຸເນດ ໂພທິສານ ປີ 2000
2. ວິຣະກຳ ຂອງ ພະເຈົ້າອານຸວົງ ພະແນກປະຫວັດສາດ ຂອງ ກະຊວງ ຖະແຫຼງຂ່າວ ແລະ ວັດທະນະທຳ ປີ 2003
3. ຄວາມຊົງຈຳຂອງ ທ່ານ ພູມີ ວົງວິຈິດ ອະດີດກົມການເມືອງສູນກາງພັກ ປີ 1987
4. ພົງສາວະດານ ຂອງ ທ່ານ ມະຫາ ສີລາ ວີຣະວົງ ປີ 2001
5. ບົດບັດທຶກ ກ່ຽວກັບລາວ (Pages Laotiennes) ຂອງ A.Raquez 1902
6. ບົດວິທະຍານິພົນຂອງ ດຣ ບຸນເຫຼືອມ ສີສຸລາດ ປີ 2002
7. ແນະນຳໃຫ້ຮູ້ຈັກປະເທດລາວ ( Introduction à la connaissance du Laos) ຂອງ Henri Didier 1958
8. ສິລະປະກຳລາວ ( Art du Laos) ຂອງ H. Parmentier 1900
9. ສິລະປະກຳ ແລະ ບູຮານະຄະດີຂອງ ລາວ (Art et Archéologie du Laos) ຂອງ Madeleine Giteau 1988 ແລະ 2001
10. ບົດຂຽນ "ເບື້ອງຕົ້ນຂອງ ວຽງຈັນນະຄອນຫຼວງ ຂອງອານານິຄົມ" (Les débuts de Vientiane capitale coloniale) ຂອງ Sophie Clément Charpentier ໃນປຶ້ມ Recherches nouvelles sur le Laos ປີ 2008
11. ວຽງຈັນ ຮູບໂສມຂອງເມືອງກຳລັງວິວັດທະນາ( Vientiane portrait d'une ville en mutation) ຂຽນໂດຍ ນ. ໃຈເພັດ ໄຊຍະຣາດ 2005
12. ການຕໍ່ສູ້ກູ້ຊາດ ກູ້ເອກະລາດຂອງລາວ ຂອງ ອະດີດ ນ ພ ເພຍ ມີໄຊພົນ
13. ເທສະບານ ແລະ ສະຖາປັດຕະຍະກຳອານານິຄົມຝຣັ່ງ ( Urbanisme et Architecture coloniale au Laos) de G. Cortez ພິມຄືນ ປີ1993
14. ໂຍທາທິການໃນອິນດູຈີນ (Les travaux publiques de l'indochine) Pouyanne Hanoi 1926
15. ມໍລະດົກລ້ານຊ້າງ : ບົດຄວາມວິຊາການ ສິລະປະ ວັດທະນະທຳ ລາວ-ໄທ ປີ 2007
16. ແຜນທີ່ ຂອງ Le Blévec 1895
17. ແຜນທີ່ ຂອງ **Lajonquière** 1901
18. ແຜນທີ່ຕັ້ງຂອງວັດ ຕ່າງໆ ໃນວຽງຈັນ ຂອງ H. Parmentier 1912
19. ຮູບຖ່າຍທາງອາກາດ ຂອງ Royal Air Force 13-04-1946 ແລະ AMS 20-01-1958

## ຜູ້ອຸປະຖຳການພິມ:

ສະຖາບັນໂຍທາແລະຂົນສົ່ງ ຂອງກະຊວງໂຍທາທິການແລະ ຂົນສົ່ງ

ສະມາຄົມສະຖາປະນິກ ແລະ ວິສະວະກອນກໍ່ສ້າງ
ແຫ່ງສປປລາວ

ບໍລິສັດທີ່ປຶກສາ SK consultants
ວິສາວະກຳ ຖາປັດຕະຍະກຳ ວາງແຜນ ສຳຫຼວດອອກແບບ ແລະ ຄຸ້ມຄອງການກໍ່ສ້າງ.
Tel:+(856 21) 413896, 416014 PO Box:881
Fax: 414568,413171 Vientiane Lao PDR
Email: skconst@loxinfo.co.th

✱ ບໍລິສັດ ເພັດສະໝອນ ກໍ່ສ້າງເຄຫາສະຖານ ຂົວທາງ ແລະ ຊົນລະປະທານ#268ຖະໜົນດົງປ່າລານເມືອງສີສັດຕະນາກ
Tel: +( 856 20)5511356 Fax: +(856 21) 412374

ບໍລິສັດ ຟ້າທຣາໂວ ທ່ອງທ່ຽວ **FA TRAVEL CO., LTD**
**Tel:+ (856 21) 261977, 263198 Fax:+ (856 21) 264917**
Email: fatravel@fagrouplaos.com

# ປະຫວັດຫຍໍ້ຂອງຜູ້ຂຽນ



ເກີດວັນທີ 15 ກຸມພາ 1935 ທີ່ ບ້ານປ່າຂາມ ເມືອງຫຼວງພະບາງ ເປັນບຸດ ຜູ້ທີ 2 ຂອງ ເພຍ ຈັນເພັງ ມະໂນທັມ ແລະ ນາງ ຄຳຜູ ສະເດັດຕັນ,

ປີ 1941-52 ຮຽນ ປະຖົມ ແລະ ມັດທະຍົມຕົ້ນ ທີ່ຫຼວງພະບາງ,

ປີ 1952-54: ຮຽນ ມັດທະຍົມປາຍ ທີ່ ນະຄອນ ວຽງຈັນ (Lycée A.Pavie),

ປີ 1954-55: ຮຽນ ມັດທະຍົມ ປີສຸດທ້າຍ ທີ່ ດາລັດ ຫວຽດນາມ (Lycée Yersin) ເສັງໄດ້ ມໍປາຍ ຂະແໜງເລກ (Mathématiques élémentaires),

ປີ1955-58: ຮຽນ ທີ່ Lycée Buffon Paris ( Mathématiques supérieures et Mathématiques spéciales), ປີ 1956 ເສັງໄດ້ ຂະແໜງເລກ ທີ່ ມະຫາວິທະຍາໄລ ຊອກບອນ (Sorbonne) ທີ່ ກຸງ ປາຣີ ດ້ວຍ ຄະແນນດີ (Mathématiques générales avec : mention bien),

ປີ 1958: ເສັງເຂົ້າໂຮງຮຽນໂຍທາຊັ້ນສູງ ທີ່ ປາຣີ ລະບົບສາມັນ ( Ecole Supérieure deTravaux Publiques ), ປີ 1959 ໄດ້ຖືກ ລັດຖະບານ ວຽງຈັນ ຕັດເບັ້ຍລ້ຽງ 6 ເດືອນ ເພາະວ່າໄປ ຂັດຄ້ານ ພວກປະຕິການ ວຽງຈັນ ທີ່ຈັບຜູ້ນຳ ແນວລາວຮັກຊາດເຂົ້າຄຸກ,

ປີ 1960: ເສັງໄດ້ ວິສະວະກອນ ໂຍທາ ແລະ ໄດ້ ລາງວັນ ທີ 1 ຂອງ SID (Société des Ingénieurs Diplomés) ໃນການ ຄິດໄລ່ ແລະ ອອກແບບຂົວເບຕົງເສີມເຫຼັກ,

ປີ 1960 : ຖືກເລືອກຕັ້ງໃຫ້ເປັນ ປະທານ ສະມາຄົມ ນັກສຶກສາລາວ ທີ່ ປະເທດ ຝຣັ່ງເສດ,

ປີ 1961: ເປັນ ເລຂາທິການ ຄະນະກັມມະການ ສະໜັບສະໜູນ ແນວທາງສັນຕິພາບເປັນກາງ,

ປີ 1961: ໄດ້ຖືກຄັດເລືອກໃຫ້ເຂົ້າຮຽນ ທີ່ ສູນການສຶກສາ ຊັ້ນສູງ ກ່ຽວກັບການກໍ່ສ້າງ ທີ່ ກຸງ ປາຣີ (Centre de Hautes Etudes de Construction : CHEC) ຂະແໜງ ເບຕົງອັດແຮງ,

ປີ 1962: ກັບເຂດປົດປ່ອຍທີ່ ຊຽງຂວາງ ແລະໄດ້ຖືກແຕ່ງຕັ້ງຈາກ ລັດຖະບານ ສະເດັດເຈົ້າ ສຸວັນນະພູມາ ໃຫ້ ດຳລົງຕຳແໜ່ງ ເປັນ ອະທິບໍດີ ກະຊວງ ໂຍທາທິການ ທີ່ ຄັງໄຂ, ແລ້ວກໍ່ເລີຍເຂົ້າ ເປັນກຳລັງເປັນກາງຮັກຊາດ ຮ່ວມມືກັບແນວລາວຮັກຊາດ ຕ້ານຈັກກະພັດ ອາເມຣິກາ ແລະ ພວກປະຕິການ ວຽງຈັນ ຕໍ່ໄປ,

ປີ 1967: ໄດ້ຖືກແຕ່ງຕັ້ງຈາກ ກົມການເມືອງ ສູນກາງພັກ ປະຊາຊົນລາວ ໃຫ້ດຳລົງຕຳແໜ່ງເປັນ ຮອງຫົວໜ້າ ພະແນກ ຄົມມະນາຄົມ ຂົນສົ່ງ ຂອງສູນກາງ ທີ່ ເມືອງ ວຽງໄຊ ຈົນຮອດ ປີ 1975,

ປີ1975: ໄດ້ຮັບແຕ່ງຕັ້ງຈາກ ກົມການເມືອງ ສູນກາງພັກ ໃຫ້ເປັນຫົວໜ້າຊາວໜຸ່ມ ລົງປຸກລະດົມຊາວ ເມືອງສະຫວັນນະເຂດ ຢຶດອຳນາດ,

1975-81: ເປັນຫົວໜ້າຫ້ອງວ່າການ ກະຊວງ ໂຍທາທິການ ແລະ ຂົນສົ່ງ ແຫ່ງ ສ.ປ.ປ.ລາວ,

1982-90: ເປັນຫົວໜ້າກົມແຜນການ ແລະ ຮ່ວມມືສາກົນ ຂອງ ກະຊວງ ໄປສະນີ ແລະ ຂົນສົ່ງ,

1990-94: ເປັນລັດຖະມົນຕີ ຊ່ວຍວ່າການ ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ, ແຕ່ ປີ 1995 ມາໄດ້ຮັບອະນຸຍາດຈາກ ພັກ ແລະ ລັດຖະບານ ໃຫ້ ພັກຜ່ອນ.

ໃນໄລຍະທີ່ຜ່ານມາກໍ່ໄດ້ຂຽນຫຼາຍບົດ ອອກໜັງສືພິມ ປະຊາຊົນ ແລະ ວຽງຈັນໃໝ່ ໃນນາມປາກກາ ແສງທຽນ, ສົມຈິດ, ບໍ່ອອກຊື່ ແລະ ອອກຊື່ ຕົນເອງ ກ່ຽວກັບ ປັດຊະຍາ, ເສດຖະກິດ, ການຈະລາຈອນ ແລະ ຄວາມປອດໄພໃນທ້ອງຖະໜົນ. ບົດທີ່ໄດ້ຮັບຄວາມນິຍົມຫຼາຍ ຈາກຜູ້ອ່ານ ກໍ່ແມ່ນບົດ " ພວກເຮົາມາປະຢັດ ກັນເຖາະ".




ພິມທີ່: ໂຮງພິມສີສະຫວາດ

ISBN 978-9932-06-0